# 占芭 ຈຳປາ



## ອ່າວເວີຍຟາງທີ່ປາທານິດງົດງາມ

## ຈີນພັດທະນາການເມືອງປະຊາທິປະໄຕ

## ສັງຄົມນິຍົມຢ່າງໝັ້ນໜຽວບໍ່ຄອນແຄນ

## ບໍລິສັດການບິນລາວຕັ້ງໜ້າບຸກເບີກຕະຫລາດຢູນນານ

ລາຄາ: 13000 ກີບ ¥10

ISSN 1673-3266

05/2008

ສະບັບທີ 33

# ພະແນກບໍລິການທ່ອງທ່ຽວສາກົນແຂວງຢູນນານ

ຍິ້ມແຍ້ມ,ພວກເຮົາມີນ້ຳໃສໃຈຈິງ! ບໍລິການທ່ານ,ພວກເຮົາມີຄວາມລະອຽດຮອບຄອບ! ຄຸນະພາບ,ພວກເຮົາມີທີ່ສັດຈະໝັ້ນໃຈ!



ພະແນກບໍລິການທ່ອງທ່ຽວສາກົນແຂວງຢູນນານສ້າງຕັ້ງຂຶ້ນຊ່ວງປີ 1997,ບໍລິການທຸລະກິດທ່ອງທ່ຽວພາຍໃນແລະສາກົນເປັນຕົ້ນຕໍ,ຮັບຈັດທຳບັນດາທຸລະກິດທ່ອງທ່ຽວສະເພາະກິດສາກົນ;ຮັບຈອງປີ້ຍົນປີ້ລົດ ປີ້ກຳປັ່ນພາຍໃນແລະສາກົນ,ຮັບຈອງຫ້ອງພັກໃນໂຮງແຮມ,ຮັບຈອງສະໜາມກິລາກ໊ອບ,ຮັບບໍລິການສະເພາະກິດຮັບສົ່ງຄົນທີ່ເດີ່ນບິນຫຼືສະຖານີລົດຍົນລົດໄຟ.

ພວກເຮົາມີອັດຖະກຳລັງແໜ້ນໜາທາງດ້ານນຳທ່ຽວແລະລ່າມແປພາສາໄທ.ນັບແຕ່ມື້ສ້າງຕັ້ງຂຶ້ນເປັນຕົ້ນມາໄດ້ຮັບຕ້ອນແຂກທຸກຊັ້ນຄົນທີ່ມາຈາກປະເທດໄທ,ນັບທັງການມາຢ້ຽມຢາມຂອງວົງການການເມືອງ,ວົງການຄ້າຕະຫຼອດຮອດບັນດາມະຫາວິທະຍາໄລຂອງປະເທດໄທ.



## ທ່ຽວຢູນນານ:ທ່ຽວຢູນນານ:

**ຕາລີ ລີຈຽງ 3 ມື້ 2 ຄືນທ່ຽວຈີງຮວາ**

**ຄຸນໝິງ ລີຈຽງ ໜອງລູກູ ຊຽງເກີລີລາ 8 ມື້ 7 ຄືນທ່ຽວໝີຈີງ**



ຜູ້ຕິດຕໍ່: ອາຟາງ

Add:The 9th Floor.No.111Dongjiao Road
Kunming Yunnan China

ໂທ: 86-871-3375011 3351083

ແຟັກ:86-871-3374542

E-mail: a-fang8@hotmail.com












ບໍລິການນໍາທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກັ໋ງ ລົດຈິບຖ0. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວິຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄໍາຫລ້າຈໍາກັດ

042/3 ຖະຫນົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

**Inbound Tour**

We provide:

Tour in Vientiane

Tour in VangViene

Tour in Luangprabang

Tour in Pakze

Tour in Northern Laos

Tour in Southern Laos

**Outbound Tour**

We provide:

Tour to China

Tour to Malaysia

Tour to VietNam

Tour to Cambodia

Tour to Thailand

Tour to asia

# ສາລະບານ

05/2008 ສະບັບທີ 33


ເຈົ້າໜ້າທີ່ຄຸ້ມຄອງໂດຍ

ຫ້ອງການຂ່າວຄະນະລັດຖະບານສ ປຈີນ

ຈັດທຳໂດຍ

ສະມາຄົມແລກປ່ຽນວັດທະນະທຳກັບຕ່າງ

ປະເທດແຂວງຢູນນານສ ປຈີນ

ຮຽບຮຽງພິມຈຳໜ່າຍ

ສຳນັກພິມວາລະສານ 《ຈຳປາ》

ຫົວໜ້າບັນນາທິການ

ໄຊຊຸນແຊງ

ຫົວໜ້າບັນນາທິການບໍລິຫານ

ຢາງຢູນ

ຫົວໜ້າພິມຈຳໜ່າຍ

ຢູຍເຈີງຢູຍ

ຜູ້ຄຸ້ມງານບັນນາທິການ

ຫວາງວັນລີ

ບັນນາທິການປະຈຳ

ຊູເວີນເວີນ

ຜູ້ຄຸ້ມງານຝ່າຍສິລະປະ

ຈູ້ສີນ

ຜູ້ແປພາສາລາວ

ທອງຂຽນ ຂໍາຕະກຸນ

ບັນນາທິການອ່ານກວດ ພາສາລາວ

ລີວເຢີນເຫີ

ຜູ້ພິມດີດພາສາລາວ

ຈັນເຫວີວັນ

ຜູ້ຄຸ້ມງານຝ່າຍອິນເຕີເນັດ

ຈາງເຊີຢີ

ບັນນາທິການຝ່າຍອິນເຕີເນັດ

ລີທາວ

ພະນັກງານຝ່າຍປົກຄອງ

ລູຢູຍ

ພິມຈຳໜ່າຍເປີດເຜີຍ:
ພາຍໃນແລະຕ່າງປະເທດ

ອອກຈຳໜ່າຍ:
ວັນທີ 5 ທຸກເດືອນ

ລະຫັດວາລະສານມາດຖານສາກົນ:
ISSN 1673–3266

ລະຫັດວາລະສານປະເທດຈີນ:
CN53–1200/D

http://la.yunnan.cn

E–mail: ynzhanba@163.com

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

ສະຖານທີ່: ສວນດອກໄມ້ສຶກສາສາຍທາງຕໍ່ຖະ
ໜົນຊີຮວາ ນ.ຄ.ຄຸນໝິງ ຂວ.ຢູນນານ

ລະຫັດໄປສະນີ: 650228

ໂທ: 86 - 871 - 8042593

ແຟັກ: 86 - 871 - 8042591





ນ.ພອນທິບ.ເທບພະລັງສີ

老挝姑娘潘娣 · 特帕朗西　蓝 天 图


主　　管：中华人民共和国国务院新闻办公室

主　　办：云南省对外文化交流协会

编辑出版：《占芭》杂志社

总　编　辑：蔡春生

执行总编辑：杨　云

总编室主任：禹正玉

编辑总监：王万里

责任编辑：苏雯雯

美术总监：祝　群

翻　　译：通肯 · 坎达古温

老挝文译审：刘仁和

老挝文录入：杨思艳

网络总监：张守义

网络编辑：李　涛

编　　务：陆　蕊

发行范围：国内外公开发行

出版日期：每月五日

邮发代号：64—36

国际标准刊号：ISSN 1673—3266

国内统一刊号：CN53—1200/D

广告经营许可证号：5300004000052

地址：云南省昆明市西华路延长线 教育花园三楼
编辑部电话：86 - 871 - 8042593
办公室电话：86 - 871 - 8042591
传真：86 - 871 - 8042591
邮编：650228















## ສາລະຄະດີພິເສດ 本刊特稿

4.ຈີນພັດທະນາການເມືອງປະຊາທິປະໄຕສັງຄົມນິຍົມຢ່າງໝັ້ນໝຽວບໍ່ຄອນແຄນ

## ປະຕູເມືອງຈີນ 中国之窗

8.ການບູລະນະກໍ່ສ້າງການປົກຄອງດ້ວຍກົດໝາຍຂອງຈີນໄດ້ຮັບໝາກຜົນໃໝ່
12.ຈີນໄດ້ເພີ່ມທະວີການສຶກສາທາງແພດສາດ
14."ຊຽງໄຮ" ເສດຖະກິດທີ່ມີຄວາມໝາຍລິເລີ່ມເຮັດໃຫ້ຕົວເມືອງຍິ່ງຈົບງາມ

## ດອກຈໍາປາແບ້ງບານເພື່ອຕ້ອນຮັບງານກິລາໂອລິມປິກ 占芭花开迎奥运

16.ຈີນເອົາໃຈໃສ່ຢ່າງສູງຕໍ່ວຽກງານປ້ອງກັນຄວາມປອດໄພຂອງງານມະຫະກໍາກິລາໂອລິມປິກປັກກິ່ງ
19.ສັນຍານທາງໂທລະພາບຂອງການສົ່ງຕໍ່ທອນໄຟງານມະຫະກໍາກິລາໂອລິມປິກປັກກິ່ງໄດ້ແຈກຢາຍໄປຢ່າງທົ່ວເຖິງທົ່ວໂລກໂດຍບໍ່ເກັບຄ່າ

## ຢູນນານທີ່ມີສະເໜ່ 魅力云南

20.ຢູນນານສ້າງລະບຽງວັດທະນະທໍາທາງຫຼວງແລະສ້າງລະບຽງນິເວດວິທະຍາ

## ຫຼຽວເບິ່ງອາຊຽນ 东盟瞭望

22.ເຄືອຂ່າຍຄົມມະນາຄົມຂອງຈີນໂລ່ງໄປສູ່ອາຊຽນ ນັບມື້ນັບບໍລິບູນຄົບຖ້ວນ
26.ກອງປະຊຸມການຄ້າແລະການຮ່ວມມືຈໍລະຈອນສິນຄ້າ 4 ປະເທດຈີນ,ໄທ,ມຽນມາ ແລະ ລາວໄຂຂຶ້ນທີ່ຈັງຫວັດຊຽງຣາຍຂອງໄທ





## ເມືອງລາວໃນວັນນີ້ 今日老挝

30.ບໍລິສັດການບິນລາວຕັ້ງໜ້າບຸກເບີກຕະຫລາດຢູນນານ
35.ຈີນໄດ້ຊ່ວຍບໍາລຸງສ້າງນັກບິນແລະນັກວິສະວະກອນກົດຈະການການບິນໃຫ້ແກ່ການບິນພົນລະເຮືອນຂອງລາວ
36.ສາຂາທະນາຄານພາກເໜືອຂອງທະນາຄານແຫ່ງລັດ ສປປ ລາວ ໄດ້ດໍາເນີນກິດຈະການຢ່າງເປັນທາງການຢູ່ແຂວງຫລວງພະບາງ

## ການທ່ອງທ່ຽວທັດສະນາຈອນ 旅游纵横

38.ແມ່ນ້ຳຢາງຊີກຽງ: ເສັ້ນເລືອດໃຫຍ່ຂອງຈີນ
42.ຊູ່ໂຈວ-ຕົວເມືອງສວນປ່າຢູ່ພາກໃຕ້ແມ່ນ້ຳຢາງຊີກຽງ

## ລຽບຊົມວັດທະນະທໍາ 文化博览

46.ພູກັນ, ເມິກ, ເຈ້ຍ ແລະ ແຖ່ນຝົນເມິກ : ຂອງວິເສດ 4 ຢ່າງ ໃຊ້ເພື່ອຂຽນອະລັຍະທໍາຂອງຈີນ
50.ວ່າວເວີຍຟາງທີ່ປາຫນີດງົດງາມ

## ປະຊາຊາດຈີນ 中华民族

52.ເຜົ່າພູມີ
54.ຍິງທະນູ-ກິລາກາຍຍະກໍາຂອງຊົນເຜົ່າລີຊູ

## ບໍລິການເພື່ອທ່ານ 为您服务

58.ກິນຜັກທຽມດິບຕ້ານການເຖົ້າໄວ
60.ຊອກໂກແລດຈະເຮັດໃຫ້ການທ່ອງທ່ຽວຍິ່ງຄຶກຄື້ນເບີກບານ

## ຮຽນພາສາຈີນ 学 汉 语

62.ກິນໝາກໂມ້ຕ້ອງຮູ້ວິທີກິນ

## ນິທານສຸພາສິດ 成语故事

64.ມີໄມ້ໄຜ່ໄວ້ຢູ່ໃນໃຈ



ກຳມະການສະພາປຶກສາການເມືອງຂອງຈີນເຜົ່າທີ່ເຂົ້າຮ່ວມກອງປະຊຸມສະພາຄັ້ງທີ10ສະໄໝທີ1ສປຈີນຍ່າງເຂົ້າສູ່ທີ່ປະຊຸມ
参加中国政协十届一次会议的少数民族委员步入会场　新华社 图

## 中国坚定不移地发展社会主义民主政治

中国改革开放 30 年来，中国坚定不移地发展社会主义民主政治。中国政治体制改革稳步推进，中国特色社会主义法律体系基本形成，依法治国基本方略得到切实贯彻，民主法制建设取得新进步。

# ຈີນພັດທະນາການເມືອງປະຊາທິປະໄຕສັງຄົມນິຍົມຢ່າງໝັ້ນທ່ນຮວບໍ່ຄອນແຄນ



ການປະຕິຮູບເປີດປະຕູສູ່ພາຍນອກຂອງຈີນ 30 ປີມານີ້, ຈີນໄດ້ພັດທະນາການເມືອງປະຊາທິປະໄຕສັງຄົມນິຍົມຢ່າງໝັ້ນໝຽວບໍ່ຄອນແຄນ. ການປະຕິຮູບກົນໄກການເມືອງຂອງຈີນໄດ້ ຖືກຊຸກດັນໄປດ້ວຍບາດກ້າວອັນໝັ້ນທ່ຽງ, ລະບົບກົດໝາຍສັງຄົມນິຍົມທີ່ມີສີສັນສະເພາະຂອງຈີນໄດ້ເປັນຮູບເປັນຮ່າງຂຶ້ນໂດຍພື້ນຖານ, ແຜນຍຸດທະວິທີພື້ນຖານທີ່ປົກຄອງປະເທດດ້ວຍກົດໝາຍໄດ້ຖືກພັນລະຫຍາຍຢ່າງແທດເຖິງເປັນຈິງ, ການບູລະນະກໍ່ສ້າງລະບອບກົດໝາຍປະຊາທິປະໄຕຍາດໄດ້ຄວາມກ້າວໜ້າໃໝ່.

ການປະຕິຮູບກົນໄກການເມືອງໄດ້ປະສົມປະສານກັບຂະບວນວິວັດແຫ່ງຄວາມສືບໜ້າທາງປະຫວັດສາດຂອງການປະຕິຮູບແລະເປີດປະຕູສູ່ພາຍນອກ, ຊຸກດັນໃຫ້ກ້າວໄປໜ້າຢ່າງແນບແໜ້ນເປັນຈິງ. ລະບອບການນຳພາຂອງພັກກອມມູນິດຈີນ, ລະບອບກອງປະຊຸມໃຫຍ່ຜູ້ແທນປະຊາຊົນ, ລະບອບການຮ່ວມມືຫຼາຍພັກແລະການປຶກສາການເມືອງທີ່ຢູ່ໃຕ້ການນຳພາຂອງພັກກອມມູນິດຈີນ, ລະບອບການປົກຄອງຕົນເອງຕໍ່ເຂດແຄ້ວນຊົນເຜົ່າແລະລະບອບການປົກຄອງຕົນເອງຂອງມວນຊົນຮາກຖານລ້ວນແຕ່ໄດ້ຄົບຖ້ວນບໍລິບູນຢ່າງບໍ່ຢຸດຢັ້ງ, ລະບອບກົດໝາຍສັງຄົມນິຍົມພວມໄດ້ຮັບການປັບປຸງຄົບຖ້ວນບໍລິບູນຢ່າງຕໍ່ເນື່ອງ.

ການປົກຄອງປະເທດຕາມລະບຽບກົດໝາຍແມ່ນຄວາມ ຮຽກຮ້ອງຕ້ອງການພື້ນຖານຂອງການເມືອງປະຊາທິປະໄຕສັງຄົມນິຍົມ. ນັບແຕ່ມີການປະຕິຮູບເປີດປະຕູສູ່ພາຍນອກເປັນຕົ້ນມາ, ວຽກງານນິຕິບັນຍັດຂອງຈີນຍາດໄດ້ໝາກຜົນທີ່ທົ່ວທັງໂລກໄດ້ເຫັນນຳກັນ, ດ້ານຄວາມສຳຄັນທາງການເມືອງ, ເສດຖະກິດ, ວັດທະນະທຳ ແລະ ຊີວິດສັງຄົມຂອງຈີນໄດ້ເຮັດໃຫ້ກາຍເປັນມີບ່ອນອີງທາງກົດໝາຍໄດ້ປະກົດເປັນຈິງໂດຍພື້ນຖານ. ໂດຍເອົາລັດຖະ ທຳມະນູນເປັນຈອມທັບ, ໂດຍເອົາລັດຖະທຳມະນູນແລະກົດໝາຍກ່ຽວຂ້ອງກັບລັດຖະທຳມະນູນຄື: ກົດໝາຍແພ່ງ, ກົດໝາຍການຄ້າ, ກົດໝາຍປົກຄອງ, ກົດໝາຍເສດຖະກິດ, ກົດໝາຍສັງຄົມ, ກົດໝາຍອາຍາ, ກົດໝາຍຂັ້ນຕອນຮ້ອງຟ້ອງກັບບໍ່ຮ້ອງຟ້ອງ7ພະແນກ




ຊາວບ້ານປ່ອນບັດເລືອກຕັ້ງຜູ້ກວດການກິດຈະການບ້ານ
村民投票选举村务监督员 新华社 图



ເຜີຍແຜ່ກົດໝາຍແຮງງານແລະຄວາມຮູ້ບໍລິການຈັດຫາວຽກເຮັດງານທຳແກ່ກຳມະກອນຊາວກະສິກອນ
向农民工普及劳动法规、提供就业服务知识　新华社 图

ການກົດໝາຍ ແລະ ກົດໝາຍຂໍ້ກຳໜົດການປົກຄອງ, ຂໍ້ກຳນົດລັກສະນະທ້ອງຖິ່ນ3 ຊັ້ນລຳດັບປະກອບເປັນລະບົບກົດໝາຍສັງຄົມນິຍົມທີ່ມີສີສັນສະເພາະຂອງຈີນນັ້ນໄດ້ເປັນຮູບເປັນຮ່າງຂຶ້ນໂດຍພື້ນຖານແລ້ວ.

ຈີນໄດ້ເນັ້ນໜັກໃນລະດັບສູງຕໍ່ການບູລະນະກໍ່ສ້າງລະບົບກົດໝາຍປະຊາທິປະໄຕ,ໝາກຜົນທີ່ຍາດມາໄດ້ເຫັນໄດ້ນຳກັນຢ່າງທົ່ວເຖິງ.ຈາກປະຊາທິປະໄຕພາຍໃນພັກຮອດປະຊາທິປະໄຕປະຊາຊົນ, ຈາກການເຮັດໃຫ້ລະບອບກອງປະຊຸມໃຫຍ່ຜູ້ແທນປະຊາຊົນໃຫ້ສົມບູນແບບຮອດການເພີ່ມທະວີໃສ່ວຽກງານສະພາປຶກສາການເມືອງຢ່າງແຂງແກ່ນ, ຈາກການເປີດກວ້າງການມີສ່ວນຮ່ວມຢ່າງເປັນລະບຽບຂອງປະຊາກອນຮອດການເພີ່ມທະວີຢ່າງແຂງແກ່ນຕໍ່ການກວດການປະຊາທິປະໄຕໃນແຕ່ລະດ້ານ, ການບູລະນະກໍ່ສ້າງລະບອບກົດໝາຍປະຊາທິປະໄຕຂອງຈີນພວມປະຕິບັດຕາມທິດທາງທັນເປັນແບບລະບອບ,ທັນເປັນແບບແຜນແລະທັນເປັນຂັ້ນຕອນຄືບໜ້າໄປຢ່າງຮອບດ້ານ. ການກຳນົດແລະປັບປຸງກົດຫມາຍວ່າດ້ວຍລາຍໄດ້ສ່ວນບຸກຄົນ ແລະ ກົດໝາຍວ່າດ້ວຍການສຶກສາພາກບັງຄັບເປັນຕົ້ນຊຶ່ງເປັນກົດໝາຍຢ່າງເປັນລະບົບ;ໄດ້ສ້າງລະບອບກົນໄກທີ່ມີຜົນສັກສິດຢ່າງຍາວນານເພື່ອແກ້ໄຂຄວາມຂັດແຍ່ງຂອງສັງຄົມຕາມກົດໝາຍກຳນົດແລະປົກປັກຮັກສາສະຖຽນລະພາບຂອງສັງຄົມ; ພັດທະນາປະຊາທິປະໄຕຮາກຖານດ້ວຍຫຼາຍຮູບແບບຢ່າງຕັ້ງໜ້າ,ເສີມຂະຫຍາຍສະມັດຖະພາບການປົກຄອງຕົນເອງຂອງສັງຄົມຢ່າງມີຜົນສັກສິດ, ຊຸກຍູ້ການເລືອກຕັ້ງປະຊາທິປະໄຕ,ການກຳນົດນະໂຍບາຍຢ່າງປະຊາທິປະໄຕ,ການຄຸ້ມຄອງດ້ວຍປະຊາທິປະໄຕ ແລະການກວດການຢ່າງປະຊາທິປະໄຕ.

ເຫດການທີ່ມີລັກສະນະເປັນສັນຍາລັກຢ່າງເປັນ ລະບົບນັ້ນໄດ້ສະແດງອອກຮ່ອງຮອຍຂອງວົງໂຄຈອນຄວາມຄືບໜ້າຂອງການບູລະນະກໍ່ສ້າງລະບອບກົດໝາຍປະຊາທິປະໄຕຢ່າງແຈ່ມ ແຈ້ງ. ກົດໝາຍວ່າດ້ວຍສິດທິຊັບສິນທີ່ຈະຖືກຈັດຕັ້ງປະຕິບັດຢ່າງເປັນທາງການແຕ່




ການໂຄສະນາກົດໝາຍເຖິງຖະໜົນຄຸ້ມບ້ານ
法律宣传到街头　新华社 图

ວັນທີ 1 ຕຸລາ ປີ 2007 ເປັນຕົ້ນໄປນັ້ນ ໄດ້ຜ່ານ ກອງປະຊຸມສຳມະນາ,ກອງປະຊຸມພິສູດຢັ້ງຢືນເປັນ100 ຄັ້ງຂຶ້ນໄປ, ຜ່ານການກວດກາຂອງກອງປະຊຸມກວດສອບ 8 ຄັ້ງ,ລະດັບຄວາມສັກສິດຂອງນິຕິບັນຍັດປະຊາທິປະໄຕແມ່ນບໍ່ເຄີຍມີມາໃນເມື່ອກ່ອນ;ການຊຸກຍູ້ລະບອບການຮ່ວມມືຫຼາຍພັກແລະລະບອບປຶກສາການເມືອງຂອງພັກກອມມູນິດຈີນໄດ້ຖືກຕີລາຄາສູງ;ນັບແຕ່ວັນທີ1 ມັງກອນ ປີ 2008 ເປັນຕົ້ນມາ, ກົດໝາຍວ່າດ້ວຍສັນຍາແຮງງານ, ກົດໝາຍວ່າດ້ວຍຊຸກຍູ້ການຫາວຽກ ເຮັດງານທຳ,ກົດໝາຍວ່າດ້ວຍຜັງເມືອງ ແລະ ຊົນນະບົດແລະຂໍ້ກຳນົດວ່າດ້ວຍການພັກຜ່ອນປະຈຳປີໂດຍມີເງິນເດືອນຂອງພະນັກງານກຳມະກອນຊຶ່ງເປັນຂໍ້ກຳນົດກົດໝາຍແລະລະບຽບການໃໝ່ຂອງຂະແໜງການຈຳນວນໜຶ່ງຈະຖືກປະຕິບັດຢ່າງເປັນທາງການ...

ໃນກອງປະຊຸມໃຫຍ່ຄັ້ງທີ 11ຂອງພັກກອມມູນິດຈີນທີ່ໄຂຂຶ້ນໃນປີ 2007 ນັ້ນ, ໄດ້ວາງຂໍ້ກຳນົດນະໂຍບາຍສຳຄັນທີ່ມີສ່ວນກ່ຽວຂ້ອງຢ່າງເປັນລະບົບ, ເປັນການວາດພາບທິດທາງຂອງການບູລະນະກໍ່ສ້າງການເມືອງປະຊາທິປະໄຕຂອງຈີນໃນໄລຍະໃໝ່ຂອງຂັ້ນຕໍ່ໄປອອກມາຢ່າງແຈ່ມແຈ້ງ,ຍິ່ງເປັນການສະແດງອອກຄວາມມານະພະຍາຍາມ ແລະ ການຕັດສິນໃຈທີ່ຈີນເນັ້ນໜັກການເມືອງປະຊາທິປະໄຕສັງຄົມນິຍົມຢ່າງໂດດເດັ່ນກວ່າເກົ່າ.



ພະນັກງານໃນສະຖານີປ່ອນບັດທີ່ເຂດຄຸ້ມບ້ານກຳລັງສະຖິຕິບັດເລືອກຕັ້ງພະນັກງານຂອງຄະນະກຳມະການຊາວບ້ານ
居民小区投票站的工作人员在统计小区居委会干部选举的选票　新华社 图

30ປີມານີ້, ການປະຕິຮູບກົນໄກການເມືອງຂອງຈີນໄດ້ເດີນໄປຕາມເສັ້ນທາງທີ່ມີຄວາມຄືບໜ້າໄປດ້ວຍຄ່ອຍເປັນຄ່ອຍໄປ.ນີ້ເປັນໄລຍະທາງຄືບໜ້າຢ່າງເປັນລຳດັບຈາກພາກສ່ວນໄປສູ່ມວນຊົນດ້ວຍການຄືບໜ້າໄປເທື່ອລະກ້າວ,ເປັນຂະບວນວິວັດແຫ່ງການຄືບໜ້າອັນໜຶ່ງທີ່ບໍ່ສາມາດຕ່າວຄືນໄດ້ເຊິ່ງດຳເນີນດ້ວຍການເຮັດອັນງ່າຍກ່ອນຈຶ່ງເຮັດອັນຍາກຕາມຫຼັງ,ເຮັດວົງນອກກ່ອນຈຶ່ງເຮັດໃຈກາງຕາມຫຼັງ,ເຮັດຈຸລະພາກກ່ອນຈຶ່ງເຮັດມະຫາພາກຕາມຫຼັງຊຶ່ງເປັນການຍາດໄດ້ຄວາມຄືບໜ້າລັກສະນະບຸກທະລຸກຢ່າງຕໍ່ເນື່ອງ.

# ການບູລະນະກໍ່ສ້າງການປົກຄອງດ້ວຍກົດໝາຍຂອງຈີນ ໄດ້ຮັບໝາກຜົນໃໝ່




ຜູ້ປະຕິບັດງານດ້ານກົດໝາຍໄດ້ຊ່ວຍຊູ້ດ້ານທີ່ປຶກສາທາງກົດໝາຍແກ່ຊາວບ້ານ
法律工作者为社区居民提供法律咨询　新华社 图



ນິງເຊຍຈັດງານວາງສະແດງໝາກຜົນແຫ່ງການສຶກສາດ້ານກົດໝາຍທົ່ວເຖິງກັນ
宁夏举办普法成果展　新华社 图

ສາທາລະນະລັດປະຊາຊົນຈີນແຕ່ນີ້ສະຖາປະນາຂຶ້ນມາເກືອບ 60 ປີ, ໂດຍສະ ເພາະແມ່ນ 30 ປີແຫ່ງການປະຕິຮູບແລະເປີດປະຕູ ສູ່ພາຍນອກຜ່ານມາ, ທ່າມກາງພາກປະຕິບັດຕົວຈິງອັນຍິ່ງໃຫຍ່ຂອງການສ້າງສາສັງຄົມນິຍົມທີ່ມີສີສັນສະເພາະປະເທດຈີນ, ການບູລະນະກໍ່ສ້າງການປົກຄອງດ້ວຍກົດໝາຍຂອງຈີນຍາດໄດ້ໝາກຜົນອັນມະຫາສານໃນ 7ດ້ານຄື:

- ໄດ້ຕັ້ງໝັ້ນແຜນຍຸດທະວິທີພື້ນຖານຂອງການປົກຄອງປະເທດດ້ວຍກົດໝາຍ.ປະຕິບັດການປົກຄອງປະເທດຕາມກົດໝາຍກຳນົດ, ສ້າງສາປະເທດທີ່ປົກຄອງດ້ວຍກົດໝາຍສັງຄົມນິຍົມ, ໄດ້ເປັນແຜນຍຸດທະວິທີພື້ນຖານຂອງລັດ ແລະ ເປັນການຮັບຮູ້ຮ່ວມກັນຂອງທົ່ວສັງຄົມ. ໂດຍເອົາການປົກຄອງປະເທດຕາມກົດໝາຍກຳນົດຖືເປັນແກນຫລັກເນື້ອໃນ ໂດຍເອົາການປະຕິບັດກົດໝາຍເພື່ອປະຊາຊົນຖືເປັນລັກສະນະທາດແທ້ຂອງຄວາມຮຽກຮ້ອງຕ້ອງການ, ເອົາຄວາມສະເໝີພາບ ແລະ ຍຸຕິ ທຳເປັນມູນຄ່າຂອງການສະແຫວງເອົາການບໍລິການກອມລວມຕໍ່ສະຖານະພາບເປັນ ພາລະກຳສຳຄັນ, ເອົາການນຳພາຂອງພັກກອມມູນິດຈີນເປັນການຮັບປະກັນຕົ້ນຕໍຂອງການສ້າງມະໂນຄະຕິປົກຄອງດ້ວຍກົດໝາຍສັງຄົມນິຍົມໄປເທື່ອລະກ້າວ.ຄວາມນຶກ ຄິດທາງກົດໝາຍ ແລະ ທັດສະນະຄະຕິການປົກຄອງດ້ວຍກົດ ໝາຍຂອງທົ່ວສັງຄົມຈີນໄດ້ເພີ່ມຂຶ້ນຢ່າງແຂງແກ່ນ ໂດຍທົ່ວໄປ, ປະຊາກອນຮຽນກົດໝາຍ, ປະຕິບັດຕາມກົດໝາຍ ແລະນຳໃຊ້ ກົດໝາຍດ້ວຍການຕື່ນຕົວພວມໄດ້ກາຍເປັນບັນຍາກາດຂອງສັງຄົມ.

- ຄວາມສາມາດການກຳອຳນາດດ້ວຍກົດໝາຍຂອງພັກກອມມູນິດຈີນໄດ້ເພີ່ມຂຶ້ນຢ່າງແຂງແກ່ນ ແລະ ຈະແຈ້ງ. ພັກກອມມູນິດຈີນໄດ້ເພີ່ມທະວີຄວາມຕື່ນຕົວ ແລະ ຄວາມໝັ້ນໝຽວດ້ວຍການກຳອຳນາດແບບວິ ທະຍາສາດ, ການກຳອຳນາດແບບປະຊາທິປະໄຕ, ກຳອຳນາດຕາມກົດໝາຍກຳນົດຢ່າງບໍ່ຢຸດຢັ້ງ. ພັກ ກອມມູນິດຈີນນຳພາປະຊາຊົນວາງກຳນົດລັດຖະທຳມະນູນ ແລະ ກົດໝາຍ, ພ້ອມກັນນັ້ນກໍເອົາລັດຖະທຳມະນູນ

## 中国法治建设取得新成就

中华人民共和国成立近 60 年来，特别是改革开放 30 年来，在建设中国特色社会主义的伟大实践中，中国的法治建设取得了七方面的巨大成就。

ເປັນຫລັກມາດຕະຖານຕົ້ນຕໍຂອງການເຄື່ອນໄຫວ ແລະ ເຄື່ອນໄຫວຢູ່ພາຍໃນຂອບເຂດລັດຖະທໍາມະນູນ ແລະ ກົດໝາຍ, ຍຶດໝັ້ນເອົາລັດຖະທໍາມະນູນ ແລະ ກົດໝາຍເປັນສິ່ງສູງສຸດ,ນໍາໜ້າປົກປັກຮັກສາອໍານາດອິດທິພົນຂອງລັດຖະທໍາມະນູນແລະກົດໝາຍ,ປຸກລະດົມ ແລະ ຈັດຕັ້ງປະຊາຊົນຢ່າງກວ້າງຂວາງທີ່ສຸດມາຄຸ້ມຄອງກິດຈະການປະເທດ ແລະ ກິດຈະ ການສັງຄົມ, ຄຸ້ມຄອງເສດຖະກິດ ແລະ ພາລະກິດວັດທະນະທໍາຕາມກົດໝາຍກໍານົດ.ຜ່ານການຜູ້ນໍາພານິຕິບັນຍັດ,ນໍາໜ້າພາທາງປະຕິບັດຕາມກົດໝາຍກໍານົດ, ຮັບປະກັນປະຕິບັດຕາມກົດໝາຍ,ຖານະກໍາອໍານາດຂອງພັກກອມມູນິດຈີນໄດ້ມີການໝັ້ນແກ່ນຂຶ້ນຢ່າງບໍ່ຢຸດຢັ້ງ.

- ລະບົບກົດໝາຍສັງຄົມນິຍົມທີ່ມີສີສັນສະເພາະຈີນຊຶ່ງເອົາລັດຖະທໍາມະນູນເປັນແກນຫຼັກນັ້ນໄດ້ເປັນຮູບເປັນຮ່າງຂຶ້ນໂດຍພື້ນຖານ. ບົນພື້ນຖານລັດຖະທໍາມະນູນທີ່ພວມປະຕິບັດໃນປະຈຸບັນ, ໄດ້ວາງກໍານົດ ແລະ ເຮັດໃຫ້ກົດໝາຍ, ຂໍ້ກໍານົດກົດລະບຽບການປົກຄອງ, ຂໍ້ກໍານົດກົດໝາຍລັກສະນະທ້ອງຖິ່ນ, ຂໍ້ຕົກ ລົງການປົກຄອງຕົນເອງ ແລະ ຂໍ້ຕົກລົງ ສະເພາະ ເປັນຈໍານວນຫຼວງຫຼາຍໄດ້ຄົບຖ້ວນບໍລິບູນ,ລະບົບກົດໝາຍໄດ້ນັບມື້ນັບຄົບຖ້ວນບໍລິບູນ, ໃນດ້ານຕ່າງໆ ຂອງຊີວິດສັງຄົມເຊັ່ນ: ດ້ານເສດຖະກິດ,ການເມືອງ,ວັດທະນະທໍາແລະຊີວິດສັງຄົມຂອງປະເທດໄດ້ເຮັດໃຫ້ມີກົດໝາຍເປັນບ່ອນອີງ ແລະ ປະກົດຜົນເປັນຈິງໂດຍພື້ນຖານ. ລະດັບທັນເປັນແບບວິທະຍາສາດ, ທັນເປັນແບບປະຊາທິປະໄຕຂອງນິຕິບັນຍັດ ແລະ ຄຸນນະພາບຂອງນິຕິບັນຍັດໄດ້ຖືກຍົກສູງຂຶ້ນຢ່າງ ຕໍ່ເນື່ອງ,ບົດບາດຂອງກົດໝາຍໃນການ ຊຸກຍູ້ການພັດທະນາເສດຖະກິດສັງຄົມ, ປົກປັກຮັກສາຄວາມສະເໝີພາບ ແລະ ຄວາມເປັນທໍາຂອງສັງຄົມ,ຮັບປະກັນສິດທິຕ່າງໆຂອງປະຊາຊົນ, ປົກປ້ອງອໍານາດລັດໄດ້ຖືກປະຕິບັດຢ່າງ ຖືກຕ້ອງ ແລະ ໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ.

- ສິດທິມະນຸດໄດ້ຮັບການຮັບປະກັນທາງລະບອບກົດໝາຍຢ່າງໄວ້ໃຈໄດ້.ໃນຂະນະດຽວກັນກໍຮັບຮອງເອົາການພັດທະນາເສດຖະກິດສັງຄົມປ່ຽນແປງສິດທິໃນການຢູ່ລອດແລະສິດທິພັດທະນາຂອງປະຊາຊົນໃຫ້ດີຂຶ້ນກວ່າເກົ່ານັ້ນ,ຈີນໄດ້ຖືໜັກໃນລະດັບສູງຜ່ານການຮັບປະກັນທາງລັດຖະທໍາມະນູນ ແລະ ກົດໝາຍມາປົກປ້ອງສິດທິເສລີພາບພື້ນຖານຂອງປະຊາກອນ. ຮັບປະກັນສິດທິມີສ່ວນຮ່ວມຢ່າງສະເໝີພາບ, ສິດທິແຫ່ງການພັດທະນາຢ່າງສະເໝີພາບຂອງສະມາຊິກວົງຄະນະຍາດສັງຄົມທັງໝົດຕາມກົດໝາຍກໍານົດ,ຄຽງຄູ່ກັບການກໍານົດຂອງກົດໝາຍ,ລະບົບຕຸລາການກົນໄກປົກປ້ອງສິດຜົນປະໂຫຍດໄດ້ບໍລິບູນຄົບຖ້ວນຢ່າງຕໍ່ເນື່ອງ,ສິດທິມະນຸດໃນບັນດາຂອດຮ່ວງນິຕິບັນຍັດ,ການປະຕິບັດຕາມກົດໝາຍ ແລະ ຕຸລາການໄດ້ຖືກຮັບປະກັນຢ່າງເຕັມທີ່ກວ່າເກົ່າ, ພາລະກິດສິດທິມະນຸດໄດ້ຖືກພັດທະນາຢ່າງຮອບດ້ານ ,ສິດຜົນປະໂຫຍດດ້ານການເມືອງ, ເສດຖະກິດ,ສັງຄົມ ແລະ ວັດທະນະທໍາຂອງພົນລະເມືອງໄດ້ຖືກເຄົາລົບແລະຮັບປະກັນຢ່າງຮອບດ້ານໃນພາກຕົວຈິງ.

- ສະພາບແວດລ້ອມປົກຄອງດ້ວຍກົດໝາຍຂອງການສົ່ງເສີມການພັດທະນາເສດຖະກິດ ແລະ ຄວາມປອງດອງກົມກຽວກັນຂອງສັງຄົມໄດ້ຖືກປ່ຽນແປງໃຫ້ ດີຂຶ້ນຢ່າງບໍ່ຢຸດຢັ້ງ. ອີງຕາມຄວາມຮຽກຮ້ອງຕ້ອງ ການຂອງການສ້າງເສດຖະກິດຕະຫຼາດສັງຄົມນິ ຍົມ, ໄດ້ເພີ່ມທະວີນິຕິບັນຍັດທາງເສດຖະກິດ,ເຮັດໃຫ້ການຄວບຄຸມ ດັດສົມມະຫາພາກຄົບຖ້ວນບໍລິ ບູນຂຶ້ນກວ່າເກົ່າ, ອີງໃສ່ກົດໝາຍໄດ້ເກືອດຫ້າມອົງການຈັດຕັ້ງ ຫລືບຸກຄົນໃດມາລົບກວນຄວາມເປັນລະບຽບຮຽບຮ້ອຍທາງເສດຖະກິດຂອງສັງຄົມ. ຈີນໄດ້ສ້າງ ກົດໝາຍ ແລະ ລະບອບຢ່າງຄົບຖ້ວນບໍລິບູນແລະເປັນລະບົບເພື່ອຊຸກຍູ້ການພັດທະນາເສດຖະກິດ,ປົກປັກຮັກສາຄວາມເປັນລະ ບຽບຮຽບຮ້ອຍຂອງຕະຫຼາດ, ເຮັດໃຫ້ຄວາມສະເໝີພາບ ແລະ ເປັນທໍາຂອງສັງຄົມປະກົດເປັນຈິງ.ໄດ້ສ້າງລະບອບກົດໝາຍ ຂອງເສດຖະກິດລະບອບສັງຄົມນິຍົມໃນເບື້ອງຕົ້ນ,ໂດຍເອົາການ ຮັບປະກັນສັງຄົມ, ການຊ່ວຍຊູ ແລະ ສົງເຄາະສັງຄົມ,ການສະຫວັດດີການສັງຄົມເປັນພື້ນຖານໂດຍເອົາລະບອບກິນເບ້ຍບໍານານ ຫລືລ້ຽງດູຜູ້ເຖົ້າເປັນພື້ນຖານ,ເອົາການປິ່ນປົວ ພື້ນຖານ ແລະ ການຮັບປະກັນລະດັບການຄອງຊີບຕໍ່າສຸດເປັນຈຸດສຸມ,ເອົາການເຮັດໃຫ້ລະບົບປະກັນໄພສັງຄົມຊຶ່ງ

ແມ່ນພາລະກິດການກຸສົນເປັນ ຕົ້ນຕໍ, ການປະກັນໄພທາງການຄ້າເປັນການເພີ່ມເຕີມນັ້ນໃຫ້ຄືບຖ້ອນບໍລິບູນຢ່າງບໍ່ຢຸດຢັ້ງ.

- ລະດັບການປົກຄອງ ແລະ ການຕຸລາການຢ່າງຍຸຕິທຳຕາມກົດໝາຍກຳນົດໄດ້ຖືກຍົກສູງຂຶ້ນ ຢ່າງບໍ່ຢຸດຢັ້ງ.ຜ່ານການສ້າງ ແລະ ປະຕິບັດກົດໝາຍປົກຄອງ, ລະບອບກົດໝາຍການຈັດຕັ້ງຂອງຕຸລາການ ແລະ ກົນໄກການເຮັດວຽກຂອງມັນໃຫ້ຄືບຖ້ອນບໍລິບູນ, ຮັບປະກັນອົງການປົກຄອງ ແລະອົງການຕຸລາການອີງຕາມຂອບເຂດສິດອຳນາດທີ່ກົດໝາຍກຳນົດແລະຂັ້ນຕອນປະຕິບັດອຳນາດ ແລະ ປະຕິບັດສິດໜ້າທີ່.ການນິຕິບັນຍັດການປົກຄອງ ແລະ ການບູລະນະກໍ່ສ້າງໄດ້ເພີ່ມທະວີຂຶ້ນອີກຕື່ມກ້າວໜຶ່ງ,ລະບອບປະຕິບັດໜ້າທີ່ຢ່າງເປີດເຜີຍຂອງແຕ່ລະປະເພດໄດ້ຄືບຖ້ອນບໍລິບູນຢ່າງຕໍ່ເນື່ອງ,ການບູລະນະກໍ່ສ້າງລັດຖະບານປົກຄອງດ້ວຍກົດໝາຍຖືກຊຸກດັນຄືບໜ້າໄປຢ່າງບໍ່ຢຸດຢັ້ງ.ອົງການສັນຕິບານໄດ້ປະຕິບັດສິດໜ້າທີ່ຕາມກົດໝາຍກຳນົດເພື່ອປົກປັກຮັກສາຄວາມປອດໄພຂອງປະເທດຊາດແລະຄວາມສະຫງົບສຸກຢ່າງເປັນລະ ບຽບຮຽບຮ້ອຍຂອງສັງຄົມ,ຮັບປະກັນປະຊາຊົນຢູ່ເຢັນເປັນສຸກ. ອົງການພິພາກສາ ແລະ ອົງການໄອຍະການປະຕິບັດສິດທິພິພາກສາ ແລະ ສິດທິໄອຍະການຕາມກົດໝາຍກຳນົດຢ່າງເອກະລາດ, ຍຶດໝັ້ນເອົາຄວາມເປັນຈິງເປັນບ່ອນອີງ,ເອົາກົດໝາຍເປັນບ່ອນວັດແທກ,ຍຶດໝັ້ນພົນລະເມືອງທັງໝົດຢູ່ຕໍ່ໜ້າກົດໝາຍສະເໝີພາບກັນ,ປົກປັກຮັກສາຄວາມຍຸຕິທຳທາງຕຸລາການ ແລະ ອິດທິພົນຂອງຕຸລາການໃຫ້ປະກົດເປັນຈິງ.

- ການກົດໜ່ວງແລະກວດກາການຕໍ່ອຳນາດລັດໄດ້ມີການເພີ່ມຂຶ້ນ.ໄດ້ສ້າງສິດວາງກຳນົດນະໂຍບາຍ, ສິດປະຕິບັດ,ສິດກວດການໃຫ້ຄືບຖ້ອນບໍລິບູນຢ່າງບໍ່ຢຸດຢັ້ງ,ໂຄງປະກອບສິດອຳນາດແລະກົນໄກດຳເນີນງານທີ່ທັງກົດໜ່ວງຊຶ່ງກັນແລະກັນແລະທັງປະສານງານຊຶ່ງກັນແລະກັນນັ້ນ,ໄດ້ສ້າງເປັນລະບົບກວດການແລະລະບອບກວດການຂັ້ນຂ້ອນຂ້າງຄືບຖ້ອນບໍລິບູນແລ້ວ,ການຮ່ວມແຮງກວດກາທີ່ໄດ້ຮັບຜົນຕົວຈິງນັ້ນໄດ້ເພີ່ມຂຶ້ນຢ່າງແຂງແກ່ນຢ່າງບໍ່ຢຸດຢັ້ງ ກອງປະຊຸມຜູ້ແທນປະຊາຊົນແລະຄະນະກຳມະການປະຈຳແຕ່ລະຂັ້ນ,ອີງຕາມກົດໝາຍກຳນົດດຳເນີນການກວດການຕໍ່ອຳນາດການປົກຄອງປະຊາຊົນ,ສານປະຊາຊົນແລະອົງການໄອຍະການປະຊາຊົນໃນຂັ້ນດຽວກັນຂອງຕົນ.ສະພາປຶກສາການເມືອງປະຊາຊົນໄດ້ເສີມຂະຫຍາຍບົດບາດກວດການ ໂດຍປະຊາທິປະໄຕຢ່າງເຕັມທີ່,ການກະທຳການກວດການ,ໄດ້ຄ່ອຍໆຫັນເປັນແບບລະບອບ,ຫັນເປັນແບບແຜນ.ຊຶ່ງກວດການວຽກງານຂອງລັດຖະບານແລະວຽກງານຕຸລາການຂອງມວນຊົນແລະທາງສຽງສື່ມວນຊົນໄດ້ຖືກຂະຫຍາຍກວ້າງຢ່າງບໍ່ຢຸດຢັ້ງ,ລະບອບການສອບຖາມ,ໄຕ່ຖາມ,ກາກວດສອບຄວາມຮັບຜິດຊອບທາງເສດຖະກິດ, ການສະເໜີໃຫ້ລາອອກຈາກຕຳແໜ່ງແລະການປົດຕຳແໜ່ງເປັນຕົ້ນໄດ້ນັບມື້ນັບຄືບຖ້ອນບໍລິບູນ,ຮັບປະກັນການກວດການຢ່າງມີພະລັງແລະຢ່າງມີຜົນສັກສິດຕໍ່ລັດຖະກອນຂອງລັດ.



ຜູ້ປະຕິບັດງານດ້ານກົດໝາຍພວມເບີກຄູ່ມືກົດໝາຍໃຫ້ກຳມະກອນຊາວກະສິກອນ ໂດຍບໍ່ເສຍຄ່າ
法律工作者在给农民工免费发放法律知识手册　新华社 图

# Can't we blend art and commerce?

- With your participation, PHOTOMEKONG will a most successful 'bridge' ! Please just press your shutter for the most wonderful moment and join us, to blend art and commerce!
- We are expecting your agreement to work with us as a photographer at PHOTOMEKONG!
- PHOTOMEKONG includes numerous photos representing the natural and humanistic attractions, ethnic cultures, socio-economic development and local resources of China's Yunan province, Myanmar, Thailand, Laos, Cambodia and Vietnam along the Mekong River. With its professional services, exhibition of photos by photographers from Yunnan of China and Southeast Asian countries, and a transaction platform, PHOTOMEKONG also provides state-of-the-art photo resources for the clients engaged in newspapers, periodicals, magazines, pictorials and other media.



PHOTOMEKONG
湄 公 河 图 片 库

http://www.photomekong.com Fax: +86 871 3103179 E-mail: service@photomekong.com
Address: Room 1512, Hongcheng Plaza, Youth Road, Kunming City 650021 Yunnan Province, China

# ຈີນໄດ້ເພີ່ມທະວີການສຶກສາແພດສາດ

## 中国加强医学教育

为了实现中国共产党的十七大报告提出“人人享有基本医疗卫生服务”的目标，中国正在大力加强医学教育，解决人力不足等现实问题。




ທຽນສິນຈັດງານວາງສະແດງສະສົມສະແຕມແພດສາດສາກົນ
天津举办国际医学集邮展 新华社 图

ເພື່ອເຮັດໃຫ້ເປົ້າໝາຍການບໍລິການການປິ່ນປົວແລະສາທາລະນະສຸກພື້ນຖານທຸກຄົນໄດ້ຊົມໃຊ້ຊຶ່ງແມ່ນບົດລາຍງານຂອງກອງປະຊຸມໃຫຍ່ຄັ້ງທີ 17 ຂອງພັກກອມມູນິດຈີນສະເໜີອອກນັ້ນໃຫ້ປະກົດເປັນຈິງ, ຈີນພວມອອກແຮງເພີ່ມທະວີການສຶກສາດ້ານແພດສາດ, ເພື່ອແກ້ໄຂບັນຫາຕົວຈິງດ້ານກຳລັງບຸກຄະກອນບໍ່ພຽງພໍເປັນຕົ້ນ.

ນັບແຕ່ປະເທດຈີນໃໝ່ໄດ້ສະຖາປະນາຂຶ້ນມາໂດຍສະເພາະແມ່ນນັບແຕ່ມີການປະຕິຮູບ ແລະ ເປີດປະຕູສູ່ພາຍນອກເປັນຕົ້ນມາ, ພາລະກິດການສຶກສາແພດສາດຂອງຈີນໄດ້ບຳລຸງສ້າງບຸກຄະລາກອນທີ່ມີຄຸນນະທາດສູງເປັນຈຳນວນຫຼວງຫຼາຍມາພັດທະນາພາລະກິດການປິ່ນປົວ ແລະ ສາທາລະນະສຸກ.

ຄາດໝາຍຕົ້ນຕໍດ້ານສາທາລະນະສຸກຂອງຈີນໄດ້ຢູ່ອັນດັບນຳໜ້າຂອງປະເທດພວມພັດທະນາ,ອາຍຸດ້ວຍຄວາມມຸ່ງຫວັງສະເລ່ຍໃສ່ທົ່ວຄົນຂອງຈີນໄດ້ ບັນລຸເຖິງ 73 ປີ.ທ່ານເຊີນຈູ້ລັດຖະມົນຕີກະຊວງສາທາລະນະສຸກຂອງຈີນໄດ້ກ່າວວ່າ: ປະຊາຄົມໂລກໄດ້ ສັນລະເສີນພວກເຮົາໃຊ້ຕົ້ນທຶນອັນຕ່ຳມາປົກປ້ອງສຸຂະພາບຂອງປະຊາກອນຫຼາຍທີ່ສຸດຂອງໂລກ.

ແຕ່ວ່າ, ສະພາບການໃນປະຈຸບັນດ້ານ ກຳລັງບຸກຄະລາກອນສາທາລະນະສຸກຂອງຈີນຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການບໍລິການສາທາລະນະ

ສຸກມວນປະຊາຊົນອັນໄພ ສານ.ອັນນີ້ມັນເປັນການທ້າທາຍອັນໜັກໜ່ວງຕໍ່ການສຶກສາແພດສາດຂອງຈີນ.

ປະຈຸບັນ, ຈີນພວມສ້າງລະບອບການປິ່ນປົວແລະສາທາລະນະສຸກພື້ນຖານທີ່ປົກຄຸມໄປທົ່ວປວງຊົນ. ເມື່ອລະບອບດັ່ງກ່າວ ສ້າງຕັ້ງຂຶ້ນແລ້ວຊາວກະສິກອນສາມາດໄດ້ຊົມໃຊ້ການບໍລິການ ປ້ອງກັນສຸຂາພິບານ ແລະ ການປິ່ນປົວພື້ນຖານທີ່ມີຄຸນນະພາບດີລາຄາຖືກ, ປະຊາກອນໃນຕົວເມືອງສາມາດໄດ້ຮັບການບໍລິການ ການປິ່ນປົວ ແລະ ສາທາລະນະສຸກດ້ວຍ "ໄຂ້ເລັກນ້ອຍ" ໄປຄຸ້ມບ້ານ, "ປ່ວຍໜັກ" ໄປໂຮງໝໍ.

ການສຶກສາແພດສາດຂອງຈີນພວມຫັນໜ້າໄປສູ່ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ, ເຮັດໃຫ້ທຸກຂະແໜງວິຊາ, ທຸກຊັ້ນລະດັບ ແລະ ທຸກຂັ້ນຕອນການສຶກສາແພດສາດມີການວາງແຜນດ້ວຍຄວາມຮອບ ຄອບ; ນຳໃຊ້ຮູບວິທີຫລາຍປະເພດໃນການບຳລຸງສ້າງ ດ້ວຍການບໍ່ເສຍຄ່າຕາມທິດທາງກຳນົດ,ການສະໜັບສະໜູນດ້ວຍຂະແໜງດຽວກັນລະຫວ່າງຕົວເມືອງກັບຊົນນະບົດ, ໄດ້ເປັນການບຳລຸງສ້າງ ແລະ ສະໜອງບຸກຄະລາກອນສາທາລະສຸກທີ່ໃຊ້ການໄດ້ໃນພາກຕົວຈິງໃຫ້ແກ່ຊົນນະ ບົດ;ດຳເນີນການຝຶກອົບຮົມເປັນແບບແຜນສຳລັບນາຍແພດຄົບວິຊາ, ເປີດຫລັກສູດການສຶກສາແພດສາດຄົບວິຊາ, ປຸກລະດົມສົ່ງເສີມນັກສຶກສາຮຽນຈົບມະຫາວິທະຍາໄລແພດສາດໄປປະຕິບັດໜ້າທີ່ຢູ່ອົງກອນສາທາລະນະສຸກຄຸ້ມບ້ານ;ເຮັດໃຫ້ການສຶກສາອາຊີວະສຶກສາດ້ວຍການຊີ້ນຳເພື່ອຄວາມຕ້ອງການທາງດ້ານໜ້າ ທີ່ຕຳແໜ່ງໃຫ້ຄົບຖ້ວນ; ດຳເນີນການບຳລຸງສ້າງຕໍ່ຂະແໜງອາຊີບສະເພາະ ແລະ ສືບຕໍ່ສຶກສາວິຊາແພດສາດຂັ້ນສູງຂຶ້ນໄປອີກ.

ປີ 2007, ຈີນໄດ້ກາຍເປັນປະເທດນຳໜ້າຂອງການສຶກສາແພດສາດແລ້ວ, ຈີນພວມຜ່ານການຈັດຕັ້ງປະຕິບັດການປະຕິຮູບການສຶກສາແພດສາດ, ເອົາສະຖາບັນການສຶກສາແພດສາດສາດລວມເຂົ້າກັບມະຫາວິ ທະຍາໄລສັບພະວິຊາ,ຍົກສູງຊັ້ນລຳດັບການສຶກສາແພດສາດຂຶ້ນສູງຂຶ້ນອີກຕື່ມ.



ງານຮັບເຊີນສະໝັກນັກວິຊາສະເພາະແພດສາດໄດ້ປະກົດເຫັນສະພາບການຕ້ອງການແລະການສະໜອງຢ່າງຟົດຟື້ນທັງສອງຢ່າງ
医学专业招聘会呈现供需两旺 新华社 图

## 上海：创意经济让城市更美好

在上海，越来越多的旧厂房、旧仓库摇身一变成为创意产业集聚区，释放出新的活力，集聚全球创意精英，提升城市产业结构能级，源源不断创造出“绿色”GDP，成为上海“落实科学发展观，实现国民经济又好又快发展”的最好注脚。创意产业正成为上海城市发展的新引擎。

# "ຊຽງໄຮ" ເສດຖະກິດທີ່ມີຄວາມໝາຍລິເລີ່ມເຮັດໃຫ້ຕົວເມືອງຍິ່ງຈົບງາມ




ເຂດສວນຜະລິດຕະກຳລິເລີ່ມຊຽງໄຮ
上海创意产业园区　CFP 图

ອາຄານໂຮງງານເກົ່າ,ສາງເກັບມ້ຽນເກົ່າຢູ່ຊຽງໄຮນັບມື້ນັບຫຼາຍພໍຍັບຕາດຽວກໍປ່ຽນໂສມໜ້າກາຍເປັນເຂດເຕົ້າໂຮມກິດຈະກຳການຜະລິດທີ່ມີຄວາມໝາຍລິເລີ່ມ, ໄດ້ປ່ອຍກຳລັງວັງຊາໃໝ່ອອກມາ, ເຕົ້າໂຮມເອົາຜູ້ປີຊາສາມາດລິເລີ່ມສ້າງກິດຈະກຳຄວາມໝາຍໃໝ່ໃນທົ່ວໂລກຍົກສູງຂັ້ນຄວາມສາມາດຂອງໂຄງປະກອບກິດຈະກຳການຜະລິດຕົວເມືອງ,ປະດິດຄິດສ້າງGDP"ສີຂຽວ"ອອກຢ່າງຕໍ່ເນື່ອງ,ຊຶ່ງເປັນຄຳອະທິບາຍທີ່ດີທີ່ສຸດຂອງຊຽງໄຮທີ່ວ່າ "ເຮັດໃຫ້ທັດສະນະການພັດທະນາດ້ວຍວິທະຍາສາດແທດເຖິງຕົວຈິງ, ເສດຖະກິດແຫ່ງຊາດພັດທະນາໄປທັງດີທັງໄວໃຫ້ປະກົດເປັນຈິງ".ຜະລິດຕະກຳການຜະລິດທີ່ມີຄວາມໝາຍລິເລີ່ມພວມກາຍເປັນກຳລັງໝູນໃໝ່ຂອງການພັດທະນາຕົວເມືອງຊຽງໄຮ.

ເຂດກິດຈະກຳການຜະລິດມີຄວາມໝາຍລິເລີ່ມອັນໃໝ່ອ່ຽມຢ່າງຄົບຖ້ວນ, ໄດ້ດູດດຶງເອົາບໍລິສັດທີ່ມີຄວາມໝາຍລິເລີ່ມທີ່ມາຈາກທຸກແຫ່ງຫົນຂອງໂລກ, ການໂຄສະນາສິນຄ້າຍີ່ຫໍ້ດັງເປັນຈຳນວນຫລວງຫລາຍຂອງໂລກແມ່ນຜະລິດຂຶ້ນ ແລະ ປະດິດຄິດແຕ່ງຂຶ້ນຢູ່ແຫ່ງນີ້.

"ສາງເກັບມ້ຽນມີຄວາມໝາຍລິເລີ່ມຊຶ່ງມີທີ່ຕັ້ງຢູ່ເຂດເຈ້ຍໄປ່ຂອງຊຽງໄຮຕິດກັບແມ່ນ້ຳຊູໂຈວ ເມື່ອກ່ອນແມ່ນສາງເກັບມ້ຽນສີຣາງທີ່ລີຊີ່.ຜ່ານການດັດແປງແກ້ໄຂແລ້ວ,"ສາງເກັບມ້ຽນຄວາມໝາຍລິ ເລີ່ມ" ໄດ້ກາຍເປັນ "ໂນນສູງ" ເສດຖະກິດມີຄວາມໝາຍລິເລີ່ມທີ່ມີຊື່ສຽງໂດ່ງດັງພາຍໃນ ແລະ ຕ່າງປະເທດ.ປະຈຸບັນມີບໍລິສັດມີຄວາມໝາຍລິ ເລີ່ມ 20 ກວ່າບໍລິສັດດຳເນີນງານເຂົ້າໄປປະຈຳ, 90% ຂຶ້ນ ໄປແມ່ນອົງກອນຂອງສາກົນ, ເປັນຕົວແທນລະດັບຊັ້ນນຳຂອງໂລກ. ໂລກຂອງກິດຈະກຳການຜະລິດມີຄວາມໝາຍລິເລີ່ມ.ກາຍເປັນແຫຼ່ງບ່ອນເຕົ້າໂຮມເສດຖະກິດມີຄວາມໝາຍລິເລີ່ມ,ທັງສືບທອດປະຫວັດສາດທີ່ເປັນມູນເຊື້ອວັດທະນະທຳມະນຸດວິທະຍາຂອງຊຽງໄຮ,ຊ້ຳຍັງ




ເປັນຕົວແທນທິດທາງການຫັນທິດຂອງຮູບແບບເສດຖະກິດໃນອະນາຄົດ, ກຳລັງບົ່ມຊ້ອນຂອງບົດບາດຊັກຈູງເສດຖະກິດຂອງກິດຈະກຳການຜະລິດຄວາມໝາຍລິເລີ່ມຕໍ່ຕົວເມືອງແມ່ນບໍ່ມີຂອບເຂດ.

ປີ 2004 ອົງການປົກຄອງເຂດລູ່ວ່ານຂອງຊຽງໄຮໄດ້ສ້າງກອງປະຊຸມປະສົມຂື້ນຊ່ວຍເຂດນິຄົມຄັດເລືອກ ບຸກຄົນທີ່ນຳໜ້າຂອງວິສາຫະກິດທີ່ມີແນວຄວາມຄິດລິເລີ່ມ, ສາມາດລະດົມທຶນ ແລະ ຮູ້ລົງທຶນເພື່ອຊຸກດັນກິດຈະກຳການຜະລິດມີຄວາມໝາຍລິເລີ່ມໃໝ່ໃຫ້ດີຂື້ນກວ່າເກົ່າ. ປີ 2006 ໄດ້ສ້າງຕັ້ງສະມາຄົມເສດຖະກິດມີຄວາມໝາຍລິເລີ່ມແຫ່ງທຳອິດຂອງທົ່ວນະຄອນຂື້ນ, ເປັນຫ່ວງເປັນໃຍແລະ ເອົາໃຈໃສ່ປົກປັກຮັກສາສິດທິທາງປັນຍາຂອງວິສາຫະກິດເຂດນິຄົມມີຄວາມໝາຍລິເລີ່ມ. ເມື່ອຮອດທ້າຍສັບປະດາ, ຍັງຈັດໃຫ້ມີການແລກປ່ຽນແລະວາງສະແດງຜະລິດຕະພັນຂອງຕະຫລາດນັດມີຄວາມໝາຍລິເລີ່ມ, ແລະກໍເປັນການເພີ່ມທະວີການເຄື່ອນໄຫວຊື້ງກັນແລະກັນຂອງຕ່ອງໂສ້ກິດຈະກຳການຜະລິດຂອງວິສາຫະກິດໃນເຂດນິຄົມ. ການບໍລິການທີ່ຫັນເປັນລັກສະນະບຸກຄະລິກຂອງລັດຖະບານກໍເປັນການຕອບແທນຄືນທາງປະສິດທິຜົນຂອງເສດຖະກິດ. ລາຍຮັບດ້ານອາກອນກັບທີ່ຂອງກິດຈະກຳການຜະລິດມີຄວາມລິເລີ່ມຂອງເຂດລູ່ວ່ານຈາກບໍ່ເຖິງໃດແສນຢວນເປັນມື່ນປີ້ຂອງປີ 2005ຂະຫຍາຍ ຕົວມາເປັນ 15 ລ້ານກວ່າຢວນຂອງປີ 2007.

ເລີ່ມແຕ່ປີ 2008 ເປັນຕົ້ນໄປຊຽງໄຮຈະສືບຕໍ່ສ້າງກິດຈະການບໍລິການແບບການຜະລິດທີ່ລວມເອົາການອອກແບບ, ການເປັນທີ່ປຶກສາ, ການໂຄສະນາສິນຄ້າ, ວັດທະນະທຳ ແລະ ກິດຈະການເຜີຍແຜ່ເຂົ້າເປັນອົງປະກອບອັນດຽວ, ເຮັດໃຫ້ ບົດປະພັນກາຍເປັນຜະລິດຕະພັນ, ສຸດທ້າຍກາຍເປັນສິນຄ້າ. ການພັດທະນາຜະລິດຕະກຳການຜະລິດມີຄວາມໝາຍລິເລີ່ມຂອງຊຽງໄຮແມ່ນເຮັດໃຫ້ອົງປະກອບກິດຈະກຳການຜະລິດຫັນເປັນແບບດີເລີດ, ຍົກສູງກຳລັງແກ້ງແຍ່ງສັງລວມ, ເປັນການຫັນປ່ຽນແບບວິທີໃນການຊຸກຍູ້ການເພີ່ມຂື້ນທາງເສດຖະກິດ, ເປັນຊ່ອງທາງສຳຄັນເພື່ອເຮັດໃຫ້ເສດຖະກິດພັດທະ ນາໄປທັງດີແລະທັງໄວໃຫ້ປະກົດເປັນຈິງ.

ຊຽງໄຮຖືກກົດໜ່ວງຈະແຈ້ງທີ່ສຸດທາງດ້ານຊັບພະຍາກອນທີ່ດິນ, ຊັບພະຍາກອນສິ່ງແວດລ້ອມ, ຊັບພະຍາກອນຄົມມະນາຄົມ ແລະ ພະລັງງານ, ແຕ່ວ່າຜ່ານການເຮັດໃຫ້ຈຳນວນທີ່ເຫຼືອຢູ່ຂອງອາຄານໂຮງງານເກົ່າແກ່ຫັນມາເປັນແບບມີຊີວິດຊີວາ, ກຳລັງເຊື່ອມເຂົ້າທີ່ມີຊີວິດຊີວາຂອງການລິເລີ່ມສ້າງມີຄວາມໝາຍລິເລີ່ມແລ້ວ, ການສືບທອດ ແລະ ເສີມຂະຫຍາຍອະລິຍະທຳທາງອຸດສາຫະກຳຂອງຕົວເມືອງ, ຍົກສູງຄວາມໝາຍພາຍໃນຂອງກິດຈະກຳການຜະລິດ. ຕາມການແນະນຳ, ຕໍ່ໄປພາຍໜ້າກິດຈະກຳການຜະລິດມີຄວາມໝາຍລິເລີ່ມຂອງຊຽງໄຮຍັງຈະແຜ່ກະຈາຍໄປສູ່ເຂດສາມຫຼ່ຽມແມ່ນ້ຳຢາງຊີກຽງ. ສິ່ງທີ່ມັນສະແດງອອກນັ້ນແມ່ນ: ຄວາມມີສະໝັດທາແລະກຳລັງລິເລີ່ມສ້າງພາກຕົວຈິງທາງປະຫວັດສາດແລະມູນເຊື້ອຂອງຕົວເມືອງຊຽງໄຮແຫ່ງນີ້.

# ຈີນເອົາໃຈໃສ່ຢ່າງສູງຕໍ່ວຽກງານປ້ອງກັນ ຄວາມປອດໄພຂອງງານມະຫະກຳກິລາໂອລິມປິກປັກກິ່ງ




ຈັດກອງປະຊຸມສາກົນປ້ອງກັນຄວາມປອດໄພງານກິລາໂອລິມປິກປັກກິ່ງທີ່ນະຄອນຫຼວງປັກກິ່ງ
在北京召开的北京奥运安保国际会议　新华社 图

## 中国高度重视北京奥运会安保工作

北京奥运会举世瞩目，良好的安全环境是奥运会成功举办的关键。2008 年北京奥运会安保工作已经全面转入实战。北京奥运安保部门充分吸收借鉴了往届奥运会安保工作的成功经验，编制了 50 多项奥运安保总体规划，数百项具体实施方案，目前仍在不断完善。从普通百姓到民警，从地方政府到中央，13 亿中国人用不同的方式，默默保卫着奥运会。中国，正在迎接“ 平安奥运 ”的现实考验。

ທົ່ວທັງໂລກໄດ້ຈັບຕາມອງງານມະຫະກຳກິລາໂອລິມປິກປັກກິ່ງ, ສະພາບແວດລ້ອມຄວາມປອດໄພ ອັນຈົບງາມ, ເປັນຂອດ ຮ່ວງສຳຄັນຂອງການເຮັດໃຫ້ງານມະຫະກຳກິລາໂອລິມປິກຈັດຂຶ້ນຢ່າງສຳເລັດຜົນ. ວຽກງານປ້ອງກັນຄວາມປອດໄພຂອງງານມະຫະກຳກິລາໂອລິມປິກປັກກິ່ງ ປີ 2008 ໄດ້ຫັນເຂົ້າສູ່ພາກປະຕິບັດ

ຕົວຈິງຢ່າງຮອບດ້ານແລ້ວ, ຂະແໜງການປ້ອງກັນຄວາມປອດໄພງານມະຫະກຳກິລາໂອລິມປິກປັກກິ່ງໄດ້ຖອດຖອນເອົາບົດຮຽນອັນສຳຄັນທັງເອົາມາເປັນແວ່ນແຍງວຽກງານປ້ອງກັນຄວາມປອດໄພງານມະຫະກຳກິລາໂອລິມປິກໃນຄັ້ງກ່ອນໆຢ່າງຕັ້ງໜ້າ, ຈັດການວາງແຜນກວມລວມຂອງການປ້ອງກັນຄວາມປອດໄພງານກິລາໂອລິມປິກປັກກິ່ງ 50ກວ່າລາຍການ, ແຜນແມ່ບົດຈັດຕັ້ງປະຕິບັດອັນເປັນຮູບປະທຳຫລາຍຮ້ອຍລາຍການ. ປະຈຸບັນຍັງຢູ່ຂັ້ນເຮັດໃຫ້ ຄົບຖ້ວນບໍລິບູນຢ່າງຕໍ່ເນື່ອງ. ຈາກປະຊາຊົນສາມັນຮອດຕຳ ຫລວດປະຊາຊົນ, ຈາກອົງການປົກຄອງທ້ອງຖິ່ນຮອດສູນກາງ, ຊາວຈີນ 1300 ລ້ານຄົນ, ໃຊ້ ຮູບແບບທີ່ຕ່າງກັນມາປົກປັກຮັກ ສາງານມະຫະກຳກິລາໂອລິມປິກຢ່າງບໍ່ປາກບໍ່ເວົ້າ. ຈີນ, ພວມຕ້ອນຮັບເອົາການທົດສອບຕົວຈິງຂອງ "ງານກິລາໂອລິມປິກທີ່ ປອດໄພ".

ຈີນໄດ້ຖືສຳຄັນວຽກງານປ້ອງກັນຄວາມປອດໄພຂອງງານມະຫະກຳກິລາໂອລິມປິກປັກກິ່ງໃນລະດັບສູງ, ລັດຖະບານສູນກາງໄດ້ສ້າງອົງກອນປະສານງານວຽກງານປ້ອງກັນຄວາມປອດໄພສະເພາະກິດຂອງງານມະຫະກຳກິລາໂອລິມປິກຂຶ້ນ, ຕົວເມືອງທີ່ນອນຢູ່ເຂດແຂ່ງຂັນເຊັ່ນ: ປັກກິ່ງ, ທຽນສິນ, ຊຽງໄຮ, ຊິນຕາວ, ເຊິນຢາງ ແລະ ຊິນຮວງຕາວເປັນຕົ້ນ. ໄດ້ຈັດສ້າງອົງການກອງບັນຊາການສູ້ລົບຕົວຈິງຂອງການປົກປັກຮັກສາຄວາມປອດໄພ, ອົງການປົກຄອງຂອງເຂດບໍປົກຄອງພິເສດຮົງກົງກໍໄດ້ສ້າງຕັ້ງອົງກອນທີ່ມີສ່ວນກ່ຽວຂ້ອງຄວບຄູ່ກັນໄປເຊັ່ນດຽວກັນ.

ຄຳຂວັນຂອງຫົວຂໍ້ທີ່ປະກາດຕໍ່ຊາວໂລກຂອງຄະນະກຳມະການຈັດຕັ້ງງານມະຫະກຳກິລາໂອລິມປິກປັກກິ່ງຄື: "ໂລກອັນດຽວກັນຄວາມຝັນອັນດຽວກັນ" ໄດ້ເປັນການບຸກທະລຸຄວາມຈຳກັດຂອງ ປະເທດແລະເຂດແຄວ້ນ. ໃນໄລຍະການກະກຽມວຽກງານປ້ອງກັນຄວາມປອດໄພໃຫ້ແກ່ງານມະຫະກຳກິລາໂອລິມປິກນັ້ນ, ກໍໄດ້ເອົາໃຈໃສ່ຮ່ຳຮຽນຖອດຖອນບົດຮຽນ ແລະ ເອົາບົດຮຽນຂອງສາກົນມາເປັນແວ່ນແຍງເຊັ່ນດຽວກັນ, ໄດ້ເຊື້ອເຊີນວ່າຈ້າງນັກຊ່ຽວຊານຂອງຕ່າງປະເທດ, ນຳເຂົ້າອຸປະກອນເຕັກນິກອັນທັນສະໄໝ, ອອກແບບແຜນແມ່ບົດທີ່ເໝາະສົມທີ່ສຸດໃຫ້ແກ່ຄວາມປອດໄພຂອງງານກິລາໂອລິມປິກ.

ວັນທີ 15 ມັງກອນ ປີ 2006, ຈີນໄດ້ສ້າງຕັ້ງ "ກົມການຕິດຕໍ່ພົວພັນກິດຈະການຕຳຫຼວດສາກົນຂອງສູນບັນຊາການປ້ອງກັນຄວາມປອດໄພຂອງງານມະຫະກຳກິລາໂອລິມປິກ" ຂຶ້ນເພື່ອຮັບຜິດຊອບສະເພາະກິດດຳເນີນການຮ່ວມມື ແລະ ແລກປ່ຽນປ້ອງກັນຄວາມປອດໄພສາກົນ, ເກັບກຳຄວາມຮຽກຮ້ອງຕ້ອງການຂອງບັນດາປະເທດແລະເຂດແຄວ້ນທີ່ເຂົ້າຮ່ວມການແຂ່ງຂັນຕໍ່ວຽກງານປ້ອງກັນຄວາມປອດໄພ .ພ້ອມທັງຈັດໃຫ້ມີກອງປະຊຸມສາກົນຂະໜາດໃຫຍ່ເປັນ 10 ກວ່າຄັ້ງ ແລະ ໄດ້ສົ່ງພະນັກງານໄປຮ່ຳຮຽນຢູ່ຕ່າງປະເທດ, ເພື່ອຮ່ຳຮຽນເອົາບົດຮຽນສຳເລັດຜົນການແຂ່ງຂັນກິລາຂະໜາດໃຫຍ່ສາກົນເຊັ່ນ:ງານກິລາໂອລິມປິກອາແຕນ, ງານກິລາໂອລິມປິກລະດູໜາວ Torino ແລະ ງານແຂ່ງ ຂັນບານເຕະຊິງຖ້ວຍໂລກຢູ່ເຢຍລະມັນເປັນຕົ້ນ, ສະໜອງການຖອດຖອນບົດຮຽນແລະເປັນບ່ອນຊ່ວຍຄົ້ນຄວ້າວຽກງານປ້ອງກັນຄວາມ



ສູນບັນຊາປ້ອງກັນຄວາມປອດໄພງານກິລາໂອລິມປິກປັກກິ່ງຈັດຕັ້ງພະນັກງານກວດກາໂຄງລ່າງໃຕ້ນ້ຳຂອງ "ແມັດກ້ອນນ້ຳ"
北京奥运安保指挥中心组织工作人员检查“ 水立方 ”的水下设施 新华社 图

ປອດໄພງານແຂ່ງຂັນກິລາໂອລິມປິກປັກກິ່ງ.

ຈີນຍັງໄດ້ "ເຊັນບົດບັນທຶກຄວາມຊົງຈຳເພື່ອການຮ່ວມມືກັບລັດຖະບານກະເລັກ,ເຊື້ອເຊີນວ່າຈ້າງຊ່ຽວຊານປ້ອງກັນຄວາມປອດໄພຂອງຄະນະກຳມະການໂອລິມປິກສາກົນ,ພະນັກງານບັນຊາການປ້ອງກັນຄວາມປອດໄພຂອງງານກິລາໂອລິມປິກຄັ້ງກ່ອນໆມາເປັນທີ່ປຶກສາຄວາມປອດໄພຂອງງານມະຫະກຳກິລາໂອລິມປິກປັກກິ່ງ,ຜ່ານດ້ວຍຫລາຍຮູບວິທີຮ່ວມມືການດຳເນີນການເຊັ່ນ: ມາບັນລະຍາຍບົດສອນຢູ່ຈີນເປັນຕົ້ນ.ນອກນັ້ນກະຊວງສັນຕິບານຂອງຈີນ ແລະ ຄະນະກຳມະການຈັດຕັ້ງງານກິລາໂອລິມປິກປັກກິ່ງໄດ້ອອກຖະແຫຼງການຮ່ວມກັບຜູ້ແທນອົງກອນປະຕິບັດກົດໝາຍແລະອົງການຈັດຕັ້ງຕຳຫຼວດອາຍາ,ເຈົ້າໜ້າທີ່ຂອງອົງການຮ່ວມມືຊຽງໄຮຂອງ 32 ປະເທດແລະເຂດແຄວ້ນ, ຕົກລົງເພີ່ມທະວີແລກປ່ຽນຂໍ້ມູນຂ່າວສານຂ່າວກອງປ້ອງກັນຄວາມປອດໄພຂອງງານກິລາໂອລິມປິກ,ລົງເລິກດຳເນີນການຮ່ວມມືປ້ອງກັນຄວາມປອດໄພຂອງງານກິລາໂອລິມປິກ ແລະ ຕ້ານການກໍ່ການຮ້າຍ,ພ້ອມກັນຮັບມືກັບເຫດການຫລອນເກີດຂຶ້ນໃນໄລຍະງານກິລາໂອລິມປິກ.

ໃນຂະນະດຽວກັນ,ຈີນໄດ້ສົມທົບກັບສະພາບຄວາມເປັນຈິງ ແລະຈຸດພິເສດຂອງງານມະຫະກຳກິລາໂອລິມປິກປັກກິ່ງໄດ້ມີ ການລິເລີ່ມໃໝ່ຮູບແບບການປ້ອງກັນຄວາມປອດໄພງານກິລາໂອລິມປິກ, ໄດ້ດຳເນີນງານສຳເລັດແຜນການຂອງວຽກງານ ກວມລວມ 52 ລາຍການ ແລະ ແຜນແມ່ບົດຈັດຕັ້ງປະຕິບັດທີ່ເປັນຮູບປະທຳ 500 ກວ່າລາຍການ,ໄດ້ຜ່ານການທົດລອງງານແຂ່ງຂັນ "ໂຊກດີປັກກິ່ງ" 20ກວ່າລາຍການຢ່າງສະດວກສະບາຍ.

ປະຈຸບັນ, ຈີນໄດ້ສ້າງການຕິດຕໍ່ພົວພັນກັບເຈົ້າໜ້າທີ່ກິດຈະການຕຳຫລວດ 100 ກວ່າ ທ່ານຂອງ 40 ປະເທດແລ້ວ, ສາມາດອີງຕາມຂ່າວກອງທີ່ສະໜອງ ແລະ ການສະເໜີຄວາມ ຕ້ອງການຂອງພວກເຂົາເຈົ້າມາດັດແປງແກ້ໄຂ ແລະ ປັບປຸງແຜນແມ່ບົດການປ້ອງກັນຄວາມປອດໄພຂອງງານກິລາໂອລິມປິກໄດ້ທຸກເມື່ອທຸກຍາມ,ເມື່ອມີການແຂ່ງຂັນງານກິລາໂອລິມປິກຂຶ້ນ,ຍັງຈະມີການຮ່ວມມືກັບອົງການຕຳຫລວດອາຍາສາກົນ,ຮັບປະກັນສະໜອງການບໍລິການປ້ອງກັນຄວາມປອດໄພຕາມນິດໄສ ແລະ ບຸກຄະລິກເພື່ອແຈ້ງສະພາບການປ້ອງກັນຄວາມປອດໄພຕໍ່ບັນດາປະເທດທີ່ເຂົ້າຮ່ວມການແຂ່ງຂັນ.



ຝ່າຍຕຳຫຼວດເສີນຢາງກໍ່ສ້າງກອງປ້ອງກັນຄວາມປອດໄພງານກິລາໂອລິມປິກທີ່ຊຳນິຊຳນານພາສາຕ່າງປະເທດ
沈阳警方打造熟练掌握外语的奥运安保团队　新华社 图

## 北京奥运会火炬传递
## 电视信号免费向全球普发

北京奥运会火炬接力传递活动3月24日在希腊奥林匹亚举行，标志着北京奥运会火炬接力传递活动正式启动。北京奥组委从４月１日起，向全球免费普发火炬传递每一日的电视信号。

# ສັນຍານທາງໂທລະພາບຂອງການສົ່ງຕໍ່ທອນໄຟງານມະຫະກຳ ກິລາໂອລິມປິກປັກກິ່ງໄດ້ແຈກຢາຍໄປຢ່າງທົ່ວເຖິງທົ່ວໂລກໂດຍບໍ່ເກັບຄ່າ

ການເຄື່ອນໄຫວສົ່ງຕໍ່ທອນໄຟງານກິລາໂອລິມປິກປັກກິ່ງດ້ວຍມືຕໍ່ມືໄດ້ຈັດຂຶ້ນໃນວັນທີ 24 ມີນາ ຢູ່ທີ່ໂອລິມເປຍຂອງປະເທດກະເລັກ, ໄດ້ເປັນສັນຍາລັກການເປີດສາກຢ່າງເປັນທາງການຂອງການເຄື່ອນໄຫວສົ່ງຕໍ່ທອນໄຟງານມະຫະກຳກິລາໂອລິມປິກປັກກິ່ງແບບມືຕໍ່ມື. ນັບແຕ່ວັນທີ 1 ເມສາເປັນຕົ້ນໄປຄະນະກຳມະການຈັດຕັ້ງງານກິລາໂອລິມປິກປັກກິ່ງຈະສົ່ງສັນຍານໂທລະພາບແຕ່ລະວັນຂອງການສົ່ງຕໍ່ທອນໄຟໄປສູ່ທົ່ວໂລກຢ່າງທົ່ວເຖິງດ້ວຍບໍ່ເກັບຄ່າ.

ໜ່ວຍງານຜະລິດສັນຍານໂທລະພາບຝ່າຍລັດຖະການໃນການສົ່ງຕໍ່ທອນໄຟງານກິລາໂອລິມປິກແບບມືຕໍ່ມືແຕ່ວັນທີ 1ເມສາຂອງເວລາທີ່ ອາລາບຸບ(fegouo Alma-Ata ) ຂອງກາຊັກສະຖານ (Kazhkstan )ເລີ່ມສົ່ງຕໍ່ເປັນຕົ້ນ, ໃຊ້ເວລາຖ່າຍພາບນັບທັງສັນຍານໂຮມເອົາບົດລາຍງານເປັນພາສາຈີນແລະພາສາອັງກິດຂອງໂທລະພາບແຕ່ລະວັນແມ່ນ 15 ນາທີ,ຈະສົ່ງສັນຍານແຜ່ກະຈາຍຢ່າງທົ່ວເຖິງໄປຍັງທົ່ວໂລກດ້ວຍບໍ່ເກັບຄ່າ.

ການຜະລິດສັນຍານໂທລະພາບຝ່າຍລັດຖະບານໃນການສົ່ງຕໍ່ທອນໄຟງານມະຫະກຳກິລາໂອລິມປິກປັກກິ່ງແບບມືຕໍ່ມືນັ້ນ, ຈຸດປະສົງແມ່ນເພື່ອເຜີຍແຜ່ທາດແທ້ຂອງຈິດໃຈ ແລະ ມິດຕະພາບ, ການເຄົາລົບນັບຖື, ທັດສະນະສະແຫວງຫາຄ່ານິຍົມອັນປະເສີດເລີດລ້ຳຂອງໂອລິມປິກ "ງານກິລາເພື່ອຮັບໃຊ້ການພັດທະນາແບບກົມກຽວກັນຂອງມະນຸດ", ສະແດງເຖິງມະໂນຄະຕິໃຫຍ່3ປະການຄື: "ງານກິລາໂອລິມປິກສີຂຽວ,ງານກິລາໂອລິມປິກວິທະຍາສາດເຕັກນິກແລະງານກິລາໂອລິມປິກມະນຸດວິທະຍາ" ແລະຫົວຂໍ້ຂອງ "ການທ່ອງທ່ຽວແບບປອງດອງກົມກຽວກັນ" ຂອງການຮັບທອນໄຟດ້ວຍມືຕໍ່ມືຂອງງານມະຫະກຳກິລາໂອລິມປິກປັກກິ່ງ,ກະຕຸກຊຸກຍູ້ຄວາມກະຕືລືລົ້ນຂອງຄົນທັງຫຼາຍຕໍ່ການຮັບທອນໄຟດ້ວຍມືຕໍ່ມື ແລະ ຄວາມກະຕືລືລົ້ນຕໍ່ງານມະຫະກຳກິລາໂອລິມປິກ.

ການເຄື່ອນໄຫວຮັບທອນໄຟງານກິລາໂອລິມປິກປັກກິ່ງແບບມືຕໍ່ມືໂດຍ "ເຮັດໃຫ້ຈຸດປະກາຍແຫ່ງຄວາມກະຕືລືລົ້ນແລະການສົ່ງຕໍ່ຄວາມຝັນຝົດຟື້ນຂຶ້ນ" ມາເປັນຄຳຂວັນສົ່ງຕໍ່ທອນໄຟໄປຍັງ 5 ທະວີບໃນທົ່ວໂລກ. ເວລາຮັບທອນໄຟດ້ວຍມືຕໍ່ມືຢູ່ນອກຊາຍແດນແມ່ນເລີ່ມແຕ່ວັນທີ 1 ເມສາຂອງປີນີ້ຮອດວັນທີ່ 3ພຶດສະພາ,ເປັນເວລາ 33ວັນ,ໃນນັ້ນວັນສົ່ງຕໍ່ມີ 21 ວັນ;ການສົ່ງຕໍ່ຢູ່ພາຍໃນປະເທດຈາກວັນທີ່4ພຶດສະພາຮອດວັນທີ 8ສິງຫາ, ວັນສົ່ງຕໍ່ແມ່ນ 97 ວັນ, ໂດຍສົ່ງຕໍ່ໄປຍັງ 113 ຕົວເມືອງ.




ຈັດການເຄື່ອນໄຫວສົ່ງຕໍ່ທອນໄຟງານກິລາໂອລິມປິກປັກກິ່ງທີ່ກົວລາລຳເປີນາເລເຊຍ
北京奥运圣火传递活动在马来西亚吉隆坡举行　新华社 图

# ຢູນນານສ້າງລະບຽງວັດທະນະທຳທາງຫຼວງແລະສ້າງລະບຽງນິເວດວິທະຍາ

## 云南建设公路文化走廊和生态走廊

云南启动建设滇西公路文化走廊和滇南绿色生态走廊，沿途公路景观将进一步美化，旅客还可穿越“时光隧道”寻访云南公路的发展足迹。

ຢູນນານໄດ້ເປີດການກໍ່ສ້າງລະບຽງວັດທະນະທຳທາງຫຼວງພາກຕາເວັນຕົກຢູນນານ ແລະ ລະບຽງນິເວດວິທະຍາສີຂຽວຢູ່ພາກໃຕ້ຂອງຢູນນານ, ທັດສະນີຍະພາບທີ່ລຽບຕາມທາງຫຼວງຈະຖືກຫັນເປັນແບບສວຍງາມອີກຕື່ມກ້າວໜຶ່ງ, ແຂກທ່ອງທ່ຽວຍັງສາມາດຜ່ານ "ອູບມຸງກາລະເວລາ" ໄປໄຕ່ຖາມຊອກຮູ້ຮອຍຕີນແຫ່ງການພັດທະນາທາງຫຼວງຂອງຢູນນານ.

ລະບຽງວັດທະນະທຳພາກຕາເວັນຕົກຂອງຢູນນານແມ່ນສ້າງຂຶ້ນດ້ວຍການເອົາທາງຫຼວງຢູ່ຍຫຼີ້ແຕ່ຄຸນມິງໄປເຖິງຊາຍແດນຈີນ-ມຽນມາ, ແຕ່ຕີ້ສິ້ນດົນແດນອັນຂຶ້ນຊື່ລືຊາຂອງການທ່ອງທ່ຽວໄປເຖິງລີ່ງຊ່າງ, ຊຶ່ງເປັນ 2 ເສັ້ນທາງຫລັກແຫ່ງຊາດເປັນອົງປະກອບຕົ້ນຕໍ, ລະບຽງນິເວດວິທະຍາສີຂຽວພາກໃຕ້



ທາງດ່ວນຊືມາວ-ຊຽວເມືອງຢາງ
思小高速公路　　陆蕊 图

ຢູນນານສ້າງຂຶ້ນໂດຍເອົາເສັ້ນທາງສາຍສາກົນແຕ່ຄຸນມິງເຖິງບາງກອກຂອງໄທຕອນຢູ່ພາຍໃນດິນແດນຂອງຢູນນານຄື: ທາງຫຼວງແຕ່ຄຸນມິງເຖິງບໍ່ຫານເປັນອົງປະກອບຫລັກ.

ທາງຫລວງພາກຕາເວັນຕົກຂອງຢູນນານແຕ່ຄຸນມິງເຖິງຢູ້ຍຫລີ້ເປັນພາບຫຍໍ້ທາງປະຫວັດສາດເປັນທາງສາຍໄໝພາກໃຕ້,ທາງມ້າອົບຊາບູຮານແຕ່ດົນນານ, ທາງຫຼວງເຊື່ອມຕໍ່ຢູນນານກັບມຽນມາ ແລະທາງຫຼວງທັນສະໄໝຂອງຢຸນນານ. ການສ້າງລະບຽງວັດທະນະທຳທາງຫຼວງຂອງພາກຕາເວັນຕົກຢຸນນານຈະຢູ່ອົງເຂດປາກ ທາງເຂົ້າອອກຂອງອູບມຸງ ຈຸດສຸມ,ຈຸດເກັບເງິນ ແລະ ເຂດບໍລິການເປັນຕົ້ນ,ຊຶ່ງລຽບຕາມທາງຫຼວງຄຸນມິງເຖິງຢູ້ຍຫຼີ້,ການຈັດສ້າງຈຸດທັດສະນາຈອນກຳແພງວັດທະນະທຳ,ອະນຸ ສາວະລີ ແລະ ຮ່ອງຮອຍເກົ່າຂອງສົງຄາມຕໍ່ຕ້ານ,ຕັ້ງຮູບປັ້ນທັດສະນີຍະພາບ,ສ້າງຫໍພິພິທະພັນທາງຫຼວງ,ສະແດງອອກທາງປະຫວັດແຫ່ງການຂະຫຍາຍຕົວຂອງທາງຫລວງຢູນນານ, ເພື່ອເປັນການສັນລະເສີນນ້ຳໃຈບໍ່ຢ້ານກົວຕໍ່ຄວາມຫຍຸ້ງຍາກອັນຕະລາຍ, ກ້າຫານໃນການບຸກເບີກຂອງຜູ້ສ້າງທາງຫລວງແຕ່ລະຍຸກແຕ່ລະສະໄໝ,ເສີມຂະຫຍາຍຈິດໃຈຊາດທີ່ບໍ່ຫວັ່ນໄຫວຍອມຈຳນົນ.

ໃນນັ້ນຫໍພິພິທະພັນທາງຫລວງຢູນນານຈະນຳໃຊ້ພູມສັນຖານ,ພູມປະເທດ ແລະສາຍນ້ຳຂອງເຂດບໍລິການຢ່າງເຕັມທີ່, ສ້າງ "ລະບຽງກາລະເວລາຂອງທາງຫຼວງ "ເປັນການກັ່ນຕອງ ຢ່າງເຂັ້ມຂົ້ນສາຍໜຶ່ງ,ແຂກທ່ອງທ່ຽວຢູ່ພາຍໃນເວລາອັນສັ້ນໆຈະສາມາດຍ່າງຜ່ານທາງນ້ອຍລະອິດລະອ້ຽວ, ທາງທຽວຂອງຄົນ ແລະ ມ້າໃນສະໄໝບູຮານ ແລະ ທາງດ່ວນທັນສະໄໝ,ສຳຜັດໂດຍຕົນເອງຕໍ່ປະຫວັດການພັດທະນາຄົມມະນາຄົມທາງຫຼວງຂອງຢຸນນານ.


ສວນໄດໂນເສົາທີ່ຕັ້ງຢູ່ເມືອງລູຟອງທາງດ່ວນອານນິງ-ຊູ່ຊົງແຂວງຢູນນານ
云南省安楚高速公路禄丰恐龙园　刘 艳 图

ການສ້າງສາລະບຽງນິເວດວິທະຍາສີຂຽວຈະສະແດງໃຫ້ເຫັນດິນແດນທີ່ມີຄວາມໝາຍ "ລົດແລ່ນຢູ່ຕາມປ່າດົງ,ຄົນທ່ອງທ່ຽວຢູ່ຕາມຮູບພາບ "ບໍລິສັດລົງທຶນສ້າງທາງຢຸນນານຈະລຽບຕາມທາງຫຼວງແຕ່ຄຸນມິງເຖິງບໍ່ຫານເພີ່ມການປູກຕົ້ນໄມ້ດອກໄມ້ສົດອີກຕື່ມກ້າວໜຶ່ງ,ພ້ອມກັນນັ້ນຈະຈັດສ້າງກຳແພງວັດທະນະທຳຊາ, ຮູບປັ້ນ ແລະ ຮູບແກະສະຫຼັກດ້ວຍເນື້ອໃນສະແດງອອກວັດທະນະທຳຊາ,ຄົນກັບທຳມະຊາດຢູ່ຮ່ວມກັນຢ່າງກົມກຽວກັນຂອງຢູນນານເປັນຕົ້ນຕໍ.ທາງຫລວງດັ່ງກ່າວແຕ່ສິບມາວເຖິງຕອນຊຽວເມືອງຢາງຂອງສິບສອງພັນນາແມ່ນທາງດ່ວນຢູ່ເຂດປ່າໄມ້ອາກາດຮ້ອນເສັ້ນໜຶ່ງເສັ້ນດຽວໃນປະຈຸບັນຂອງຈີນ,ລຽບຕາມເສັ້ນທາງດັ່ງກ່າວເຕັມໄປດ້ວຍດອກໄມ້ນາໆພັນຂອງ 4ລະດູການແມ່ນຕົ້ນໄມ້ຂຽວອຸ່ມທຸ່ມປົກຄຸ້ມຢູ່ຕາມທາງ ແລະ ຍັງມີບາງຄັ້ງຄາວມີຊ້າງປ່າ ເຂົ້າອອກຢູ່ຕາມສາຍທາງນີ້ດ້ວຍ.

ແຜນການກໍ່ສ້າງລະບຽງວັດທະນະທຳທາງຫຼວງພາກຕາເວັນຕົກຂອງຢູນນານ ແລະ ລະບຽງນິເວດວິທະຍາສີຂຽວພາກໃຕ້ຢູນນານຈະສຳເລັດລົງໃນປີໜ້າ. ປະຈຸບັນການກໍ່ສ້າງລະບຽງວັດທະນະທຳທາງຫຼວງພາກຕາເວັນຕົກຂອງຢຸນນານໄດ້ສຳເລັດໂຄງການເຮັດພາບຫຍໍ້ທັດສະນີຍະພາບທາງມ້າອົບຊາບູຮານແຕ່ດຶກດຳບັນ ແລະ ອະນຸສາວະລີ "ສາຍການບິນທີ່ເຝິງ "ສະໄໝສົງຄາມໂລກ ຄັ້ງທີ 2 ແລ້ວ.

## 中国通往东盟的交通网络日臻完善

广西北部湾将组织实施国家港口布局规划、高速公路网规划、中长期铁路网规划和机场建设规划，建设中国－东盟交通合作项目，较大幅度提高沿海港口吞吐能力、高等级公路和大能力铁路路网密度、机场吞吐能力和服务水平，提升出海出边国际大通道能力。

# ເຄືອຂ່າຍຄົມມະນາຄົມຂອງຈີນໂລ່ໄປສູ່ອາຊຽນ ນັບມື້ນັບບໍລິບູນຄົບຖ້ວນ



ຊ່ອງທາງໃຫຍ່ຕາເວັນຕົກສຽງໃຕ້ອອກສູ່ທະເລຕອນນານນີງກວາງຊີ

西南出海大通道广西南宁段　CFP 图

ອ່າວພາກເໜືອຢູ່ກວາງຊີຈະຈັດຕັ້ງປະຕິບັດຕາມການວາງແຜນຈັດວາງສ້າງທ່າເຮືອແຫ່ງຊາດຂອງຈີນ, ການວາງແຜນສ້າງເຄືອຂ່າຍທາງດ່ວນ, ການວາງແຜນສ້າງເຄືອຂ່າຍທາງລົດໄຟໄລຍະກາງ ແລະ ໄລຍະຍາວ ແລະ ການວາງແຜນກໍ່ສ້າງເດີ່ນບິນ, ສ້າງໂຄງການຮ່ວມມືດ້ານຄົມມະນາຄົມຈີນ-ອາຊຽນ. ຍົກສູງລະດັບຄວາມສາມາດຮອງຮັບການເຂົ້າອອກທ່າເຮືອຢູ່ແຄມທະເລ, ລະດັບຄວາມຖີ່ຕາຂ່າຍທາງຫຼວງຊັ້ນສູງແລະຄວາມສາມາດອັນໃຫຍ່ຫຼວງຕໍ່ລະດັບຄວາມຖີ່ຂອງຕາຂ່າຍທາງລົດໄຟ, ຍົກສູງຄວາມສາມາດເປັນທາງຜ່ານໃຫຍ່ສາກົນໃນການອອກສູ່ທະເລ ແລະ ອອກຊາຍແດນ, ຍົກສູງຄວາມສາມາດຮອງຮັບການເຂົ້າອອກ ແລະ ລະດັບການບໍລິການຂອງເດີ່ນບິນ.



ກວາງຊີຈະສ້າງທາງເດີນກຳປັ່ນນ້ຳເລິກລະດັບຊັ້ນ 150.000 ໂຕນ, ຊັ້ນ 100.000 ໂຕນ ແລະ ຊັ້ນ50.000 ໂຕນຢູ່ຕາມຝູງທ່າເຮືອໃນອ່າວພາກເໜືອ. ຈະສ້າງບ່ອນຈອດເຮືອທຽບຝັ່ງຂອງກຳປັ່ນບັນທຸກສິນຄ້າຍ່ອຍ, ກຳປັ່ນບັນທຸກສັບພະສິນຄ້າເປັນຊິ້ນ, ກຳປັ່ນບັນທຸກຕູ້ຄອນແທນເນີ ແລະ ກຳປັ່ນເມໄປ ສະນີເປັນຕົ້ນ.

ທາງດ່ວນແຕ່ນານນິງເຖິງດ່ານມິດຕະພາບທີ່ມີຄວາມຍາວທັງໝົດ 180 ກິໂລແມັດເປັນທາງດ່ວນສາຍທຳອິດທີ່ຈີນຜ່ານໄປຍັງພາກພື້ນອາຊຽນ, ການເປີດການທຽວລົດຂອງທາງດ່ວນສາຍດັ່ງກ່າວເຮັດໃຫ້ຈາກຮາໂນຍນະຄອນຫລວງຂອງຫວຽດນາມໄປນານນິງໃຊ້ ເວລາພຽງແຕ່ 4 ຊົ່ວໂມງກວ່າ.

ບົນພື້ນຖານທີ່ກ່າວມາຂ້າງເທິງອີງຕາມການວາງແຜນ, ສ້າງເຄືອຂ່າຍທາງຫລວງຊັ້ນສູງທີ່ຄົບຖ້ວນບໍລິບູນເປັນຈຸດສຸມການກໍ່ສ້າງໂຄງການເຄືອຂ່າຍທາງດ່ວນແຫ່ງຊາດທີ່ໂລ່ງໄປທິດທາງຢຸນນານ-ກຸຍໂຈວເຊັ່ນ:ນານນິງ-ໄປ້ເຊີ້-ຄຸນມິງ, ນານນິງ-ເຣີຊີ-ກຸຍຢາງ ແລະ ໂລ່ງໄປສູ່ທິດປາກສາມຫລ່ຽມແມ່ນ້ຳຈູ່ຈ່ຽງ ນານນິງ-ອູ້ໂຈວ-ກວາງໂຈວເປັນຕົ້ນ. ຮອດປີ 2010, ໃຫ້ກາຍເປັນເຄືອຂ່າຍທາງຜ່ານທາງຫລວງອອກສູ່ທະເລພາກພື້ນຕາເວັນຕົກສ່ຽງໃຕ້ຂ້ອນຂ້າງຄົບຖ້ວນບໍລິບູນ.

ທາງດ້ານທາງລົດໄຟຈຸດສຸມຈະກໍ່ສ້າງທາງລົດໄຟເສັ້ນຄູ່ນານນິງ-ກວາງໂຈວແລະທາງລົດໄຟຣູ້ ນ້ານ-ກວາງຊີ, ທາງລົດໄຟລະຫວ່າງຕົວເມືອງນານນິງ-ລິວໂຈວ, ທາງລົດໄຟເສັ້ນສາຍຄູ່ນານນິງ-ຄຸນມິງ, ທາງລົດໄຟເສັ້ນສາຍຄູ່ນານນິງ-ຝ້າງເຊີນເປັນຕົ້ນ, ໃຫ້ກາຍເປັນເຄືອຂ່າຍທາງຜ່ານຂອງທາງລົດໄຟເຊື່ອມຕໍ່ພາກຕາເວັນຕົກສ່ຽງໃຕ້, ທິດໃຕ້ຂອງພາກກາງ ແລະ ພາກໃຕ້ຂອງຈີນຂ້ອນຂ້າງຄົບຖ້ວນບໍລິບູນ.

ລັດຖະບານຈີນພວມໃຊ້ຄວາມພະຍາຍາມສຸດຂີດເພື່ອສ້າງເຄືອຂ່າຍຄົມມະນາຄົມຕິດກັບອາຊຽນ. ຫວ່າງແລ້ວນີ້ກະຊວງ



ທ່າກຳປັ່ນອ່າວພາກເໜືອກວາງຊີ
广西北部湾港口　CFP 图



ທາງດ່ວນຈາກຊິນກາຍເມືອງເຫີເຄີຢູນນານເຖິງແຂວງລາວກາຍຫວຽດນາມໄດ້ໂລ່ງຫາກັນທົ່ວທັງສາຍແລ້ວ
云南河口县新街连接越南老街省的高速公路全线贯通　新华社 图



ລານຈອດເຮືອບິນຂອງສະໜາມບິນນານນິງ
南宁机场停机坪　CFP 图

ທາງລົດໄຟໄດ້ເຊັນບົດບັນທຶກກັບກວາງຊີມີແຜນການພາຍໃນ 5ປີຈະລົງທຶນ 100 ຕື້ຢວນເພື່ອປັບປຸງ ແລະ ສ້າງໃໝ່ທາງລົດໄຟ2500 ກິໂລແມັດ, ສະໜັບສະໜູນກວາງຊີເຊື່ອມຕໍ່ກັບອາຊຽນ.

ດ້ານທາງບົກຈະສ້າງທາງຜ່ານ 2 ສາຍນານນິງ-ດ່ານສາກົນຕົ່ງຊິ່ນ-ນະຄອນຫລວງຮາໂນຍຂອງຫວຽດນາມ ແລະ ນານນິງ-ດ່ານສາກົນດ່ານມິດຕະພາບ-ນະຄອນໂຮຈິມິນຂອງຫວຽດນາມ. ນອກນັ້ນຫວຽດນາມກັບກວາງຊີໄດ້ບັນລຸຄວາມເຂົ້າໃຈນຳກັນ,ພ້ອມກັນຊຸກຍູ້ສ້ອມແປງ ແລະ ກໍ່ສ້າງທາງດ່ວນ2 ສາຍຄື: ດ່ານມິດຕະພາບ-ຮາໂນຍ, ຕົ່ງຊິ່ນ-ຮາໂນຍ,ພ້ອມທັງໄດ້ຮັບຄຳໝັ້ນສັນຍາໃຫ້ການສະໜັບສະໜູນດ້ວຍທຶນຮອນຂອງທະນາຄານ.

ດ້ານທ່າເຮືອ, ໄດ້ເປັນທີ່ຈະແຈ້ງແລ້ວທ່າເຮືອຝາງເຊິນເປັນໜຶ່ງໃນທ່າເຮືອຕົ້ນຕໍຂອງ 25 ແຫ່ງຢູ່ ແຄມຝັ່ງທະເລຂອງຈີນ.ຄາດຄະເນຮອດປີ 2010ປະລິມານການບັນທຸກເຂົ້າ-ອອກທ່າເຮືອໄປ່ຮາຍ, ຝາງເຊິນ ແລະ ຊິ່ນໂຈວ 3ທ່າເຮືອຈະເກີນກວ່າ 100 ລ້ານໂຕນ. ນອກຈາກນັ້ນ, ກົມໃຫຍ່ການບິນພົນລະເຮືອນຂອງຈີນຈະເລັ່ງລັດເປີດສາຍການບິນໃໝ່ແຕ່ນານນິງໄປສູ່ ປະເທດອາຊຽນ, ສ້າງສາຍການບິນສາກົນທີ່ເຊື່ອມຕໍ່ອາຊຽນ, ຍີ່ປຸ່ນ,ສ.ເກົາຫລີ ແລະ ອິຍູເປັນຕົ້ນ;ຈະສະໜັບສະໜູນບັນດາບໍລິສັດການບິນເອົານານນິງ ແລະ ກູຍລິນເປັນໃຈກາງຂອງການເປີດຖ້ຽວບິນສາຍກົງໄປສູ່ປະເທດອ້ອມຂ້າງ, ຈັດວາງການເປີດຖ້ຽວບິນຈາກເຂດເສດຖະກິດອ່າວພາກເໜືອບິນໄປສູ່ພາຍໃນປະເທດໂດຍບຸລິມະສິດ.

ຜ່ານການຈັດສ້າງທາງຜ່ານທາງບົກ ແລະ ທາງຜ່ານທາງທະເລທີ່ສະດວກວ່ອງໄວ, ໄດ້ເຮັດໃຫ້ການເປັນປຶກແຜ່ນຂອງເສດຖະກິດສາມຫລ່ຽມທົ່ວແມ່ນ້ຳຈູ່ຈ່ຽງຄວາມຫ່າງໄກກັນກັບຕະຫຼາດໃຫຍ່ອາຊຽນຈະຫຍໍ້ສັ້ນເຂົ້າຢ່າງຫຼວງຫຼາຍ.ດັ່ງນັ້ນໄດ້ເປັນການເອົາອົງເຂດກວາງຕຸ້ງ, ຮົງກົງທີ່ມີກິດຈະກຳຜະລິດຈະເລີນກວ່າເພື່ນຂອງປະເທດຈີນກັບພາກຕາເວັນອອກຂອງອາຊຽນທີ່ມີກຳລັງຕົວຈິງທາງເສດຖະກິດເຂັ້ມແຂງທີ່ສຸດນັ້ນເຊື່ອມເຂົ້າຫາກັນ. ຈະເປັນການຊຸກຍູ້ຢ່າງໃຫຍ່ຫຼວງທີ່ສຸດເພື່ອການລຸໂລ່ງໄປຫາກັນລະຫວ່າງຈີນກັບອາຊຽນແລະ ເປັນການຍົກສູງລະດັບການຮ່ວມມືການຄ້າ,ການລົງທຶນແລະເຕັກນິກຂອງ 2ຝ່າຍ.


ງານກິລາໂອລິມປິກ !
ກໍ່ຢູ່ຄຽງຂ້າງຂອງທ່ານ !
奥运！
就在你身边！
Beijing 2008
ຕ້ອນຮັບງານກິລາໂອລິມປິກ ພິຖີພິຖັນມາລະຍາດ ສ້າງແບບແຜນທຳນອງໃໝ່
迎奥运 讲文明 树新风

# ກອງປະຊຸມການຄ້າແລະການຮ່ວມມືຈໍລະຈອນສິນຄ້າ

## 4 ປະເທດຈີນ,ໄທ, ມຽນມາ ແລະ ລາວ ໄດ້ຂຶ້ນທີ່ຈັງຫວັດຊຽງຮາຍຂອງໄທ

### 中泰缅老四国商贸与物流合作会议在泰国清莱府召开

文、图 / 禹正玉 张振辉 刘金鑫

三月初，正是澜沧江—湄公河沿岸阳光明媚，春暖花开的季节。为昆曼公路即将开通作好经贸、物流等相应的准备工作，由泰国商贸部物流促进局、交通部港务局、码头机构联合主办、清莱府商会承办的中泰缅老四国经贸与物流合作会议在泰国北部气候凉爽、热情好客的清莱府召开。《占芭》杂志总编室主任禹正玉应邀出席会议并就“加强文化交流，增进经贸合作”在大会上发言。

ຕົ້ນເດືອນມີນາ,ພໍດີແມ່ນແສງຕາເວັນອັນສວຍສົດງົດງາມສ່ອງໃສ່ລຽບຕາມສາຍແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ,ເປັນລະດູບານໃໝ່ທີ່ອົບອຸ່ນ ແລະ ດອກໄມ້ພອນເບັ່ງບານ.ເພື່ອເປັນການ ກະກຽມວຽກງານເສດຖະກິດການຄ້າ,ການຈໍລະຈອນສິນຄ້າໃຫ້ຄວບຄູ່ກັນໄປກັບເສັ້ນທາງຄຸນມິງ-ບາງກອກຈະໄດ້ລຸໂລ່ງຫາກັນ. ໂດຍແມ່ນກົມສົ່ງເສີມການຈໍລະຈອນສິນຄ້າຂອງກະຊວງການຄ້າ, ກົມການທ່າເຮືອຂອງກະຊວງຄົມມະນາຄົມແລະອົງການທ່າເຮືອຂອງໄທຮ່ວມກັນເປັນເຈົ້າພາບ ແລະສະພາການຄ້າຈັງຫວັດຊຽງຮາຍເປັນຜູ້ຈັດຂຶ້ນ,ກອງປະຊຸມຮ່ວມມືເສດຖະກິດການຄ້າ ແລະ ການຈໍລະຈອນສິນຄ້າຂອງ 4 ປະເທດຈີນ, ໄທ, ມຽນມາ ແລະ ລາວ ໄດ້ຈັດຂຶ້ນຢູ່ສະຖານທີ່ທີ່ອາກາດເຢັນ




ຜູ້ຮັບຜິດຊອບຂອງຄະນະຜູ້ແທນຕ່າງໆທີ່ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ຖ່າຍຮູບລວມເປັນທີ່ລະນຶກ
参加会议各代表团负责人合影




ຜູ້ແທນຈີນ-ໄທແລກປ່ຽນປຶດສັນຍາຮ່ວມມືກັນດ້ານການຄ້າແລະຈໍລະຈອນສິນຄ້າ
中泰双方代表互换贸易、物流合作协议书

ສະບາຍ ແລະ ໃຫ້ຄວາມຮັກຫອມແກ່ແຂກຄົນຢ່າງກະຕືລືລົ້ນທີ່ຈັງຫວັດຊຽງຣາຍພາກເໜືອຂອງໄທ.ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມມີຜູ້ຮັບຜິດ ຊອບກົມຈໍລະຈອນສິນຄ້າກະຊວງການຄ້າຂອງໄທ, ຜູ້ຮັບຜິດຊອບກົມການທ່າເຮືອ ແລະ ປະທານສະພາການຄ້າ 10 ຈັງຫວັດພາກເໜືອຂອງໄທ,ສະມາຄົມຈໍລະຈອນສິນຄ້າແຂວງ ຢຸນນານ ສປ ຈີນ, ສະພາການຄ້າເຈົ້າຈ່ຽງແຂວງຢຸນານ, ກຸ່ມບໍລິ ສັດຄົມມະນາຄົມຂົນສົ່ງຄຸນມິງ,ເຂດນິຄົມອຸດສາຫະກຳສິບສອງ ພັນນາຢຸນນານ, ບໍລິສັດຂົນສົ່ງທາງອາກາດ ແລະ ຄະນະຜູ້ແທນ ທີ່ມີສ່ວນກ່ຽວຂ້ອງດ້ານການຄ້າຂອງລາວ ແລະ ສະຫະພັນມຽນມາ10 ກວ່າທ່ານ.ກອງປະຊຸມເນັ້ນໜັກດ້ານ: (1) ການຄ້າ, ການ ຜະລິດ ແລະ ການລົງທຶນຂອງGMSແລະ ເພີ່ມທະວີຢ່າງໃກ້ຊິດລະຫວ່າງວົງການການຄ້າກັບລັດຖະບານ; (2)ເລັ່ງລັດການ ແລກປ່ຽນ ແລະ ພັດທະນາການຈໍລະຈອນສິນຄ້າ ແລະ ການທ່ອງ ທ່ຽວຂອງGMS;(3) ການກໍ່ສ້າງແບບແຜນຂອງສູນຈໍລະຈອນສິນຄ້າຂອງຄຸນມິງ,ບໍ່ຫານຂອງຈີນ, ບໍ່ແຕນ,ຫ້ວຍຊາຍ ຂອງລາວ,ຊຽງຂອງ,ຊຽງຣາຍແລະບາງກອກຂອງໄທ.ພາຍຫຼັງທາງຫຼວງຄຸນມິງ-ບາງກອກເປີດນຳໃຊ້ແລ້ວ, ໄດ້ແລກປ່ຽນ ຄຳຄິດຄຳເຫັນກ່ຽວກັບບັນຫາເຣັດລະບຽບການໃຫ້ກະທັດຣັດງ່າຍດາຍຂອງການຜ່ານແດນແລະການກວດກາທົດລອງພະຍາດ, ການຜ່ານດ່ານຂອງບຸກຄະລາກອນ ແລະ ລົດຂົນສົ່ງສິນຄ້າຂ້າມ ດ່ານຊາຍແດນ, ການວາງແຜນກໍ່ສ້າງໂຮງແຮມພັກເຊົາ,ການ ປິ່ນປົວ ແລະ ສາທາລະນະສຸກ ແລະ ສາງເກັບມ້ຽນ,ສັນຍາລັກທີ່ເປັນເອກະພາບຂອງຄົມມະນາຄົມໃນຖະໜົນ,ການແກ້ໄຂອຸປະຕິເຫດທາງຄົມມະນາຄົມເປັນຕົ້ນ, ໃຫ້ມີຄວາມຮັບຮູ້ເປັນເອກະພາບແລະມາດຕະຖານເປັນເອກະພາບ.ການປະກອບຄຳເຫັນໂດຍຈຸດສຸມໃນກອງປະຊຸມໃຫຍ່ດັ່ງກ່າວມີທ່ານ ຈ້າວຢົງຊິ່ນ ປະທານສະມາຄົມຈໍລະຈອນສິນຄ້າແຂວງຢຸນນານ ສປ ຈີນ, ທ່ານຈັງເຈີ້ນຣູຍທີ່ປຶກສາການລົງທຶນແລະວາງແຜນການຈໍລະຈອນສິນຄ້າຂອງອົງການປົກຄອງນະຄອນຄຸນມິງ, ທ່ານ ຊຸ່ນຕ໋າຢົງຮອງຜູ້ອຳນວຍການໃຫຍ່ ບໍລິສັດກຸ່ມຂົນສົ່ງຄຸນມິງ;ຮອງປະທານ ສະພາບໍລິຫານງານຂະແໜງພັດທະນາ ການຄ້າ ແລະ ຄຸ້ມຄອງຊັບສິນຂອງໄທ, ທ່ານ ພັນຊິວໂລງ ປະທານສະພາການຄ້າຈັງຫວັດຊຽງຣາຍ. ທ່ານ ຢູຍເຈີນຢູຍ ຫົວໜ້າຫ້ອງການບັນນາທິການໃຫຍ່ວາລະສານ "ຈຳປາ" ໄດ້ຖືກ ເຊື້ອເຊີນເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກອບຄຳເຫັນໃນກອງ ປະຊຸມດ້ວຍຫົວເລື່ອງ: "ເພີ່ມທະວີການແລກປ່ຽນວັດທະນະທຳ, ຊຸກດັນໃຫ້ມີການຮ່ວມມືເສດຖະກິດການຄ້າ" ໄດ້ບັນລະຍາຍແຈ້ງຢ່າງເຕັມທີ່ກ່ຽວກັບ "ເຣັດຄວາມດີນຳເພື່ອນບ້ານໃກ້ຄຽງ,ເອົາເພື່ອນບ້ານໃກ້ຄຽງເປັນໝູ່ເພື່ອນ"ເພີ່ມທະວີມິດຕະພາບ,ຈະທຸ້ມເທກຳລັງໃສ່ການລຸໂລ່ງຫາກັນຂອງການຮ່ວມມືເສດຖະກິດການຄ້າຂອງຈີນ,ໄທ, ມຽນ ແລະ ລາວ ອີກ ຕື່ມກ້າວໜຶ່ງ, ຊຸກດັນການ ເຂົ້າອົກເຂົ້າໃຈ ແລະ ປະສານງານຊຶ່ງກັນແລະກັນ,ໃຫ້ກາຍເປັນປ່ອງຢ້ຽມແລະຂົວຕໍ່ຂອງການຮ່ວມມືມິດຕະພາບ 4 ປະເທດ ພວກເຮົາ



ສຳນັກພິມວາລະສານ《ຈຳປາ》ມອບ《ປຶ້ມວາລະສານຈຳປາສະບັບປີ2007ຫຍິບເປັນຫົວດຽວ》ໃຫ້ຜູ້ແທນລາວ
《占芭》杂志社向老挝代表赠送《占芭》2007 年合订本

ຢ່າງແທ້ ຈິງ. ແລະ ໄດ້ມອບ "3 ວາລະສານ" ຂອງປີ 2007 ສະບັບຫຍິບເປັນທົ່ວດຽວກັນ ແລະ ວີຊີດີສີ ຂອງຢຸນນານ, ໄດ້ຮັບການຊົມເຊີຍ ແລະ ຕີລາ ຄາສູງຂອງຜູ້ແທນເຂົ້າຮ່ວມກອງປະຊຸມ.

ນັກຂ່າວຂອງວາລະສານພວກເຮົາເວລາສຳພາດກັບຮອງຫົວໜ້າກົມກົມຈໍລະຈອນ ສິນຄ້າກະຊວງການ ຄ້າຂອງໄທນັ້ນ, ທ່ານໄດ້ສະຫລຸບລວມຍອດຜົນໄດ້ຮັບຂອງ 4 ດ້ານໃນກອງປະຊຸມຄັ້ງນີ້ຄື: 1.ເພີ່ມທະວີການຮ່ວມມືລະຫວ່າງວົງການການຄ້າກັບລັດຖະບານຂອງບັນດາປະເທດ,ກອງປະຊຸມຄັ້ງນີ້ເປັນກອງປະຊຸມລຸລ່ວງປະສານງານທີ່ຈັດຂຶ້ນຢູ່ຊຽງຮາຍເປັນຄັ້ງທຳອິດທີ່ໄຂຂຶ້ນຢູ່ຊຽງຮາຍຂອງບໍລິສັດ ແລະ ວິສາຫະກິດເອກະຊົນ,ລັດວິສາຫະກິດກັບລັດຖະບານ ຂອງ 4 ປະ ເທດຈີນ, ໄທ, ມຽນ ແລະລາວ. ພາບໜ້າຂອງການຮ່ວມມືຈີບງາມ, ຜ່ານການສະເໜີຄຳຄິດຄຳເຫັນຂອງແຕ່ລະຝ່າຍ, ບັນຫາທີ່ເປັນຮູບປະທຳສ່ວນຫລາຍສາມາດໄດ້ຮັບການແກ້ໄຂ. 2. ສະພາການຄ້າ10 ຈັງຫວັດພາກເໜືອຂອງໄທ ແລະ ສະພາ ການຄ້າຈັງຫວັດຊຽງຮາຍຕ່າງໄດ້ເຊັນບົດບັນທຶກການຮ່ວມມື 5 ສະບັບກ່ຽວກັບການລົງທຶນ, ຈໍລະ ຈອນສິນຄ້າ, ທ່ອງທ່ຽວ, ຢ້ຽມຢາມຊຶ່ງກັນແລະກັນ, ແລກປ່ຽນຂໍ້ມູນຂ່າວສານເປັນຕົ້ນກັບສະມາຄົມຈໍລະຈອນສິນຄ້າຍຸກປະຈຸບັນແຂວງຢຸນນານ, ສະຫະບໍລິສັດກຸ່ມຂົນສົ່ງຄຸນມິງຢຸນນານ, ບໍລິສັດຄຸນມິງເຈີ້ນຮູຍຄຸ້ມຄອງການຈໍລະຈອນສິນຄ້າຈຳກັດ, ສະພາການຄ້າ ເຈົ້າຈຽງຢຸນນານ,ສູນການຄົ້ນຄວ້າ ແລະທີ່ປຶກສາກົດໝາຍGMS 3. ບັນຫາຄົງຄ້າງຂອງການຄ້າການແລກປ່ຽນຊື້-ຂາຍ,ການທ່ອງທ່ຽວ,ການລົງທຶນແລະການຈໍລະຈອນສິນຄ້າຂອງທາງຫຼວງຄຸນມິງບາງກອກ ໂລ່ງຫາກັນທົ່ວທັງສາຍແລ້ວ ລ້ວນແຕ່ຕ້ອງບັນລຸຄວາມຮັບຮູ້ເປັນເອກະພາບມາແກ້ໄຂໃນກອບການກະທຳຂອງກົນໄກຮ່ວມມືGMSແລະເປັນການອຳນວຍຄວາມສະດວກ.4.ໄດ້ກຳນົດແຈ້ງທ້າຍປີນີ້ຍັງຈະຈັດກອງປະຊຸມທີ່ມີສ່ວນກ່ຽວຂ້ອງ,ເພື່ອຄົ້ນຄວ້າສະພາບຄວາມຄືບໜ້າຂອງບົດບັນທຶກການຮ່ວມມືທີ່ເຊັນກັນໃນຄັ້ງນີ້.ທ່ານປະທານສະພາການຄ້າຈັງ ຫວັດຊຽງຮາຍ ໄດ້ໃຫ້ສຳພາດຕໍ່ນັກສືຂ່າວວ່າ: ສະພາການຄ້າຊຽງຮາຍຂອງພວກເຮົາ,ສະໜັບສະໜູນການເປີດກອງປະຊຸມຮ່ວມມືເສດຖະກິດການຄ້າແລະການຈໍລະຈອນສິນຄ້າຂອງ 4 ປະເທດ ຈີນ, ໄທ, ມຽນມາແລະລາວຢ່າງຕັ້ງໜ້າ,ອວຍໄຊໃຫ້ພອນບັນດາໝາກຜົນທີ່ບັນລຸໄດ້, ສະພາການຄ້າມີຄວາມສາມາດເປັນເຈົ້າພາບຈັດກອງປະຊຸມສາກົນຂອງອະນຸພາກພື້ນແມ່ນ້ຳຂອງ, ຊຸກດັນການຈະເລີນສີວິໄລ ແລະການພັດທະນາຮ່ວມກັນ.


ທ່ານພັນຊິນລົງປະທານສະພາການຄ້າໄທມອບຂອງຂວັນໃຫ້ທ່ານຈີນຢົງຊິນປະທານສະມາຄົມຈໍລະຈອນສິນຄ້າຍຸກສະໄໝຢຸນນານຈີນ
泰国商会会长潘兴隆向中国云南现代物流协会会长曹荣新赠送礼品



ຜູ້ແທນຂອງວາລະສານ《ຈຳປາ》ປະກອບຄຳຄິດຄຳເຫັນໃນກອງປະຊຸມ
《占芭》杂志社代表作大会发言

ໃນໄລຍະກອງປະຊຸມຄະນະຜູ້ແທນແຂວງຢຸນນານຂອງຈີນຢູ່ໃຕ້ການພາທາງຂອງຜູ້ຮັບຜິດຊອບສະພາການຄ້າຈັງຫວັດຊຽງຮາຍໄດ້ດຳເນີນການກວດ ກາສັງເກດທ່າເຮືອຊຽງແສນ, ດ່ານສາກົນຊຽງຂອງຂອງປະເທດໄທ,ດ່ານສາກົນຫ້ວຍຊາຍ, ທີ່ຕັ້ງຈະກໍ່ສ້າງຂົວຂ້າມແມ່ນ້ຳຂອງຂອງທາງຫຼວງຄຸນມິງບາງກອກ,ແລະຕອນເສັ້ນທາງຢູ່ລາວບາງພາກສ່ວນ, ເມືອງການຄ້າຈີນທີ່ຫ້ວຍຊາຍ.


MEKONG An Authoritative Magazine in Thai
AUSPICIOUS An Authoritative Magazine in Burmanese
CHAMPA An Authoritative Magazine in Lao
Preferential Activity for Advertisement Provided by the Three Publications
Foreign Media Overbalance Investment Overal Agent Lower Price
占芭
吉祥
湄公河
แม่น้ำโขง
12/2006 เล่มที่ 55
Same Investment Different Return
In order to thank old & new customers for their kindness in giving MEKONG, AUSPICIOUS & CHAMPA support for a long time, " The Three Publications " Golden Combination Suit advertisement has been specially worked out for customers.
Please contact the general agent for detailed information:
CHAMPA Magazine
Add:Education Garden,Extensionline of Xihua Road, Kunming,Yunnan, China
Tel:86-871-8042593 Fax:86-871-8042591
E-meil:ynzhanba@163.com
http://la.yunnan.cn http://laos.cri.cn http://www.scio.gov.cn

# ບໍລິສັດການບິນລາວ ຕັ້ງໜ້າບຸກເບີກຕະຫລາດຢູນນານ

## 老挝航空公司积极开拓云南市场

图 / 蓝　天

由于老挝航空公司积极培养开拓云南旅游市场，从购买飞机、航线合作到联合云南康辉旅行社开拓云南游客出境游市场等多角度合作，促成昆明前往老挝的客源剧增。



ເນື່ອງຈາກວ່າບໍລິສັດການບິນລາວໄດ້ຕັ້ງໜ້າບຳລຸງສ້າງການຮ່ວມມືບຸກເບີກຕະຫລາດທ່ອງທ່ຽວຂອງຢູນນານ, ນັບທັງ ການຈັດຊື້ເຄື່ອງບິນ,ການຮ່ວມມືສາຍການບິນຮ່ວມກັນກັບສຳ ນັກງານທ່ອງທ່ຽວຄັ່ງຮູຍຂອງຢູນນານຮ່ວມມືຫຼາຍຝ່າຍບຸກເບີກ ຕະຫຼາດແຂກທ່ອງທ່ຽວຢູນນານອອກຊາຍແດນໄປທ່ອງທ່ຽວ,ເປັນການຊຸກຍູ້ສ້າງແຫລ່ງທີ່ມາຂອງແຂກທ່ອງທ່ຽວຈາກຄຸນມິງໄປທ່ຽວລາວມີການເພີ່ມຂື້ນຢ່າງຫຼວງຫຼາຍ. ຕາມການແນະນຳຂອງກົງສູນໃຫຍ່ລາວປະຈຳຄຸນມິງ: ຈຳນວນຄົນເຊັນວີຊາຂອງນັກທ່ອງທ່ຽວຢູ່ຄຸນມິງໄປລາວໃນປີ 2007 ເກີນກວ່າ 23.000ຄົນ. ຝ່າຍລາວໄດ້ສະແດງວ່າ: ບົນພື້ນຖານຖ້ຽວບິນບິນໄປນະຄອນຫຼວງວຽງຈັນອາທິດລະ 4 ຖ້ຽວບິນຈາກວັນອັງຄານ, ວັນ ພຸດ,ວັນສຸກ ແລະ ວັນອາທິດ ຈະເພີ່ມຂື້ນເປັນອາທິດລະ7 ຖ້ຽວບິນ,ຍັງໄດ້ເປີດສາຍການບິນຖ້ຽວບິນຈາກຄຸນມິງບິນໄປສູ່ຫຼວງພະບາງ, ການເປີດສາຍການບິນແຕ່ຊຽງຮຸ່ງຂອງສິບສອງພັນນາໄປເຖິງຫລວງພະບາງກໍພວມຢູ່ໃນການພິຈາລະນາ.

ສຳນັກງານປະຈຳຄຸນມິງຂອງບໍລິສັດການບິນລາວເປັນສຳນັກງານແຫ່ງໜຶ່ງແຫ່ງດຽວທີ່ການບິນລາວສ້າງຂື້ນຢູ່ຈີນ, ພາຍຫລັງກ້າວເຂົ້າສູ່ຕະຫຼາດຈີນແລ້ວ, ກ່ອນອື່ນໝົດລາວໄດ້ຮ່ວມມືກັບບໍລິສັດຜະລິດເຮືອບິນທີ່ລືຊື່ກວ່າເພິ່ນຂອງພາຍໃນປະເທດຈີນຈັດຊື້ເຄື່ອງບິນສາຍການບິນສາຂາຄຽງຄູ່ກັບການບິນລາວໝເພີ່ມທະວີການຮ່ວມມືກັບກິດຈະການການບິນຂອງຈີນຢ່າງເລິກເຊິ່ງ,ການຮ່ວມມືລະຫວ່າງການບິນລາວກັບກິດຈະການການບິນ,ກິດຈະການທ່ອງທ່ຽວຂອງຢູນນານກໍຫັນໄປທາງລວງເລິກ,ໃນຂະນະການບິນລາວເພີ່ມສາຍການບິນຈາກວຽງຈັນໄປຄຸນມິງແລະຫລວງພະບາງໄປຄຸນມິງນັ້ນ,ໄດ້ຕັ້ງໜ້າອີງອາໄສວົງການທ່ອງທ່ຽວຂອງຢຸນນານມາບຸກເບີກຕະຫລາດແຫລ່ງທີ່ມາຂອງຜູ້ໂດຍສານ, ເຂົາເຈົ້ານຳໃຊ້ຮູບແບບການຮ່ວມມືໂດຍແມ່ນການບິນລາວສະໜອງສາຍການບິນ, ຝ່າຍຈີນສະຫນອງແຫລ່ງທີ່ມາຂອງຜູ້ໂດຍສານບວກກັບການຄຸ້ມຄອງ,ລົງເລິກຮ່ວມມືກັນກັບສຳນັກງານທ່ອງທ່ຽວຄັ່ງຮູຍ,ວິໄຈຕະຫລາດ, ປັບປຸງສັງລວມຊັບພະຍາກອນ.ແນໃສ່ຄວາມຫນ້ອຍຫຼືຫຼາຍຂອງແຫຼ່ງທີ່ມາຜູ້ໂດຍສານມາສັບຊ້ອນຂະໜາດຂອງເຄື່ອງບິນ,ຫຼຸດຜ່ອນຕົ້ນ

ທຶນຂອງການດຳເນີນງານ;ພ້ອມກັນນັ້ນແນໃສ່ໂຄງການຮ່ວມມືເສດຖະກິດລະຫວ່າງປຸນນານກັບລາວນັບມື້ນັບເພີ່ມຂຶ້ນ, ສະພາບປະຈຸບັນຜູ້ໂດຍສານເປັນກຸ່ມນັກທຸລະກິດກິນອັດຕາສ່ວນເຄິ່ງໜຶ່ງ, ເດີນໄປຕາມເສັ້ນທາງເອົາກຳໄລໜ້ອຍຈຳໜ່າຍຫຼາຍມາດູດ ດຶງເອົາແຫລ່ງທີ່ມາຂອງຜູ້ໂດຍສານກິດຈະການການຄ້າ








ຢ່າງໝັ້ນທ່ຽງ. ປະຈຸບັນ, ແຕ່ລະເດືອນອັດຕາສ່ວນຜູ້ໂດຍສານຊື້ປີ້ຍົນຈາກຄຸນມິງໄປລາວບັນລຸເຖິງ 70%,ກຸ່ມຄົນຈາກລາວມາທ່ອງທ່ຽວ ແລະ ຈັດຊື້ສິນຄ້າຢູ່ປູນນານແລະປ່ຽນຖ້ຽວບິນໄປແຫ່ງອື່ນກໍປະມານ 65%. ໄດ້ເຮັດໃຫ້ແຫລ່ງທີ່ມາຂອງຜູ້ໂດຍສານເຂົ້າ-ອອກຊາຍແດນກ້ຳເກິ່ງກັນໂດຍພື້ນຖານປະກົດເປັນຈິງ. ແລະ ຊາວ ຄຸນມິງໄປທ່ອງທ່ຽວເມືອງຫລວງພະບາງຊຶ່ງເປັນຕົວເມືອງທີ່ສວຍງາມທີ່ສຸດຂອງລາວຖືກແຂກທ່ອງທ່ຽວປະເທດຕາເວັນຕົກສັນລະເສີນວ່າເປັນຕົວເມືອງສວຍງາມທີ່ສຸດຂອງລາວນັ້ນ, ກໍປະກົດວ່າຖ້າຂີ່ເຮືອບິນໄປເມືອງຫຼວງພະບາງທຽບໃສ່ຂັບລົດສ່ວນຕົວຕ້ອງ ໃຊ້ເວລາເປັນ 2 ວັນຈະວ່ອງໄວ ແລະປອດໄພກວ່າຊ້ຳບໍ່ໜຳຍັງປະຫຍັດກວ່າ. ທ່ານພົງສະຫວັດ ພູມມະວົງຫົວໜ້າກົງສຸນໃຫຍ່ ຂອງລາວປະຈຳຄຸນມິງໄດ້ກ່າວວ່າ: "ເມື່ອກ່ອນ, ຄົນທີ່ມາຊັນວຊາແຕ່ລະເດືອນບໍ່ເຖິງ 200ຄົນ, ປະຈຸບັນເພີ່ມຂຶ້ນແຕ່ລະ ເດືອນເປັນ 2000 ຄົນ, ຈຳນວນລວມຂອງຄົນທີ່ໄປລາວຂອງ ປີທີ່ແລ້ວໄດ້ເກີນກວ່າ 20000 ຄົນແລ້ວ".



















# ວຽງຈັນໃນວັນນີ້

今日万象　图/蓝 天











ພາບວິວຖະໜົນວຽງຈັນ
老挝万象街景　杨 云 摄

# ຈີນໄດ້ຊ່ວຍບຳລຸງສ້າງ

# ນັກບິນແລະນັກວິສະວະກອນກົດຈະການການບິນໃຫ້ແກ່ການບິນພົນລະເຮືອນຂອງລາວ

**中国为老挝培养民航飞行员和机务工程师**

图/蓝　天

中国首次为老挝人民民主共和国举办的民航飞行员培训班，近日在位于四川广汉的中国民航飞行学院举行开学典礼。老挝驻昆明总领事馆总领事蓬沙瓦·普马翁在开学典礼上勉励学员努力学习，为发展中老两国的友谊，为老挝民用航空事业的发展做出新的更大的贡献。



ຈີນໄດ້ເປີດຊຸດຝຶກອົບຮົມນັກບິນການບິນພົນລະເຮືອນຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວເປັນຄັ້ງທຳອິດ, ຫວ່າງມໍ່ໆນີ້ໄດ້ຈັດພິທີເປີດພາກຮຽນຢູ່ທີ່ວິທະຍາຄານນັກຂັບເຄື່ອງບິນພົນລະເຮືອນຈີນທີ່ກວາງຫານແຂວງເຊສວນ.

ທ່ານເຊີນບຸເຄີ່ຮອງຜູ້ອຳນວຍການວິທະຍາຄານນັກບິນພົນລະເຮືອນແຫ່ງປະເທດຈີນໄດ້ແນະນຳວ່າ,2ປີຕໍ່ໄປຂ້າງໜ້າ,ວິທະຍາຄານດັ່ງກ່າວຈະນຳໃຊ້ການສິດສອນເປັນພາສາອັງກິດທັງໝົດມາຖ່າຍທອດທິດສະດີວິຊາສະເພາະ ແລະເຕັກນິກການຂັບເຄື່ອງບິນການບິນພົນລະ ເຮືອນທີ່ທັນສະໄໝຢ່າງເປັນລະບົບໃຫ້ແກ່ນັກສຶກສາຂັບເຄື່ອງບິນ10ຄົນ ແລະ ນັກສຶກສາກົດນາຍຊ່າງເຄື່ອງບິນ 15ຄົນ.ພາຍຫລັງນັກສຶກສາດັ່ງກ່າວ ຮຽນຈົບແລ້ວ,ເຂົາເຈົ້າຈະເຂົ້າໄປເຮັດວຽກຢູ່ບໍລິສັດການບິນແຫ່ງຊາດລາວ,ກາຍເປັນນັກຂັບເຄື່ອງບິນອາຊີບແລະນາຍຊ່າງກົນຈັກເຄື່ອງບິນ.

ທ່ານ ພົງສະຫວັດ ພູມມະວົງ ຫົວໜ້າກົງສຸນໃຫຍ່ຂອງລາວປະຈຳຄຸນມິງ ໄດ້ກ່າວໃນພິທີເປີດພາກຮຽນດ້ວຍການປຸກລະດົມບັນດານັກສຶກສາໃຫ້ມານະພະຍາຍາມຮ່ຳຮຽນເອົາຄວາມຮູ້ຄວາມສາມາດເພື່ອປະກອບສ່ວນໃຫມ່ຍິ່ງຫລາຍກວ່າເກົ່າໃຫ້ແກ່ການພັດທະນາມິດຕະພາບຂອງ2ປະເທດຈີນ-ລາວ ແລະ ເພື່ອການພັດທະນາພາລະກິດການບິນພົນລະ ເຮືອນຂອງລາວ.

ວິທະຍາຄານນັກບິນພົນລະເຮືອນແຫ່ງປະເທດຈີນສ້າງຂຶ້ນເມື່ອປີ 1956, ນັກບິນຂອງການບິນພົນລະເຮືອນຈີນ 90% ຂຶ້ນໄປແມ່ນຮຽນຈົບຈາກວິທະຍາຄານດັ່ງກ່າວ.ໄລ່ມາຮອດປະຈຸບັນ, ຄິດໄລ່ໂດຍທະວີບວກແລ້ວ,ວິທະຍາຄານດັ່ງກ່າວໄດ້ ບຳລຸງສ້າງຫລືຝຶກອົບຮົມບຸກຄະລາກອນວິຊາສະເພາະການບິນພົນລະເຮືອນປະເພດຕ່າງໆ 4000 ຄົນໃຫ້ແກ່ປະເທດ ສ.ເກົາຫຼີ,ຍີ່ປຸ່ນ,ຫວຽດນາມ,ກຳປູເຈຍ ແລະ ເຂດແຄ້ວນຮົງກົງ ແລະ ມາກາວ.

# ສາຂາທະນາຄານພາກເໜືອຂອງທະນາຄານແຫ່ງລັດ ສປປ ລາວ ໄດ້ດຳເນີນກິດຈະການຢ່າງເປັນທາງການ ຢູ່ແຂວງຫລວງພະບາງ

## 老挝国家银行北部分行在琅勃拉邦省正式营业

老挝国家银行北部分行已在琅勃拉邦省正式剪彩营业。老挝国家银行北部分行的成立，是加强金融管理的需要，也是老挝银行系统发展壮大的表现，将为老挝北部项目投资和老百姓脱贫致富及地方社会经济发展做出积极贡献。

ສາຂາທະນາຄານຂອງທະນາຄານແຫ່ງລັດ ສປປ ລາວປະຈຳພາກເໜືອ ໄດ້ຕັດແຖບຜ້າເປີດກິດຈະການຢ່າງເປັນທາງການທີ່ແຂວງຫລວງພະບາງແລ້ວ, ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານສປປ ລາວ ໄດ້ເຂົ້າຮ່ວມພິທີຕັດແຖບຜ້າດັ່ງກ່າວ.

ການສ້າງຕັ້ງສາຂາທະນາຄານພາກເໜືອຂອງທະນາຄານແຫ່ງລັດລາວຂຶ້ນນັ້ນ,ຈຸດໜັກຈະຮັບຜິດຊອບການຄຸ້ມຄອງມະ ຫາພາກຂອງສະພາບການດ້ານເງິນຕາ ແລະ ດ້ານສິນເຊື່ອຂອງທະນາຄານທ້ອງ ຖິ່ນ4 ແຂວງພາກເໜືອຂອງລາວຄື:ແຂວງຫຼວງພະບາງ, ແຂວງໄຊຍະບູລີ, ແຂວງຊຽງຂວາງແລະແຂວງຫົວພັນ; ຮັບຜິດຊອບຕິດຕາມກວດກາ ແລະ ຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນການທະນາຄານຂອງທ້ອງ ຖິ່ນໃນ 4 ແຂວງພາກເໜືອ, ນັບທັງສະພາບການປະຕິບັດເງິນຕາ ແລະ ການສິນເຊື່ອ, ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການປຸກລະດົມໃຊ້ຈ່າຍເງິນກີບຂອງ 4 ແຂວງດັ່ງກ່າວ, ເປັນສູນ ກາງສະຫລຸບບັນຊີທະນາຄານຂອງ4ແຂວງພາກເໜືອຂອງລາວ.ພ້ອມກັນນັ້ນສາຂາທະນາຄານດັ່ງກ່າວຍັງຮັບຜິດຊອບສະໜອງເງິນກູ້ຢືມໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນ ການເງິນຂອງທ້ອງຖິ່ນ, ຮັບຜິດຊອບການສະເໜີຂໍແລກປ່ຽນ ເງິນຕາຕ່າງປະເທດ ແລະ ກວດກາອະນຸຍາດນຳເຂົ້າສິນຄ້າ ແລະ ເຄື່ອງຂອງ,ອອກໃບຢັ້ງຢືນທະນາຄານໃຫ້ແກ່ການໂອນເງິນຂອງ ເງິນທຶນຕ່າງປະເທດ ແລະຮັບຜິດຊອບຈຸດຂອງຕາໜ່າງການ ແລກປ່ຽນເງິນຕາຕ່າງປະເທດຂອງສ່ວນບຸກຄົນ,ອົງກອນຈຳນຳຂອງທ້ອງຖິ່ນແລະການກວດກາອະນຸມັດລະບຽບການສ້າງຕັ້ງສະຫະກອນເຊື່ອຖືໄດ້ເປັນຕົ້ນ.

ການສ້າງຕັ້ງສາຂາທະນາຄານພາກເໜືອຂອງທະນາຄານແຫ່ງລັດ ສປປ ລາວນັ້ນ,ແມ່ນເປັນຄວາມຕ້ອງການເພີ່ມທະວີການຄຸ້ມຄອງການເງິນການທະນາຄານ, ແລະ ກໍເປັນການສະແດງອອກການເຕີບໃຫຍ່ຂະຫຍາຍຕົວຂອງລະບົບທະນາຄານຂອງລາວ,ຈະເປັນການປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ການລົງທຶນໃນໂຄງການພາກເໜືອຂອງລາວ ແລະ ເຮັດໃຫ້ປະຊາຊົນຫລຸດ ພົ້ນອອກຈາກຄວາມທຸກຍາກໄປສູ່ຄວາມມັ່ງຄັ່ງສົມບູນເທື່ອລະກ້າວ ແລະ ການພັດທະນາເສດຖະກິດສັງຄົມຂອງທ້ອງຖິ່ນ.



ນາງບົວສະຫວັດພູມາວົງນັກສຶກສາປະລິນຍາໂທ
老挝姑娘 小兰



ແມ່ນ້ຳຢາງຊີກຽງແມ່ນແມ່ນ້ຳສາຍໃຫຍ່ທີ່ໜຶ່ງຂອງຈີນມັນເລີ່ມໄຫລມາແຕ່ພູພຽງຊິ່ນຮາຍ-ຕີເບດທີ່ຖືກຂະໜານນາມວ່າຫຼັງຄາຂອງໂລກ,ໄຫຼຜ່ານຜາພູສູງເຫວເລິກໄປທາງທິດຕາເວັນອອກ,ຜ່ານທາງລະອຽດລະອ້ຽວເປັນຫຼາຍຫລີບຫຼາຍຕ່າວ, ຖອກເຫລົ່ງເປັນຫລາຍພັນກິໂລແມັດ, ຈຶ່ງມາຮອດພາກຕາເວັນອອກຂອງແຜ່ນດິນໃຫຍ່, ໄຫຼເຂົ້າສູ່ມະຫາສະມຸດປາຊີຟິກທີ່ກວ້າງໃຫຍ່ໄພສານ.

ແມ່ນ້ຳຢາງຊີກຽງມີຄວາມຍາວທັງໝົດຄື: 6300 ກິໂລແມັດ, ລະດັບຄວາມຍາວຂອງມັນຖັດ ກັບແມ່ນ້ຳນິນ (Nile) ຂອງທະວີບອາຟຣິກກາແລະແມ່ນ້ຳອາມາໂຊນ( Amazones ) ຂອງທະວີບອາເມລິກາໃຕ້,ເປັນແມ່ນ້ຳໃຫຍ່ທີ່3ຂອງໂລກ.ແມ່ນ້ຳສາຍຫລັກຂອງມັນໄຫຼຜ່ານ 11 ແຂວງ, ເຂດປົກຄອງຕົນເອງ ແລະ ກຳແພງນະຄອນຄື: ຊິ່ນຮາຍ, ຕີເບດ,ເຊສວນ,ຢູນນານ, ຊົ້ງສິ້ນ, ຮູໄປ໋, ຮູ້ນ້ານ, ຈ່ຽງຊີ່, ອ່ານຮູຍ, ຈ່ຽງຊູ່ ແລະຊຽງໄຮ,ເປັນໜຶ່ງໃນສາຍນ້ຳທີ່ສຳຄັນທີ່ສຸດຂອງຈີນ, ສາມາດເອີ້ນເປັນສາຍເລືອດໃຫຍ່ ຂອງຈີນ.

ໃນໄລຍະການເດີນທາງອັນຍາວໄກນັ້ນ,ແມ່ນ້ຳຢາງຊີ ກຽງໄດ້ໂຮມເອົາແມ່ນ້ຳສາຍສາຂາເປັນຫຼາຍຮ້ອຍສາຍ.ໝົດທັງລະບົບນ້ຳຂອງແມ່ນ້ຳຢາງຊີກຽງ,ເໝືອນດັ່ງຕາໜ່າງອັນໃຫຍ່ໂຕມະໂຫລານຕາຫນ່າງຫນຶ່ງທີ່ປົກຄຸມທ້ອງຖິ່ນອັນກວ້າງໃຫຍ່ໃນ



# ແມ່ນ້ຳຢາງຊີກຽງ: ເສັ້ນເລືອດໃຫຍ່ຂອງຈີນ

## 长江 ：中国的大动脉

长江——中国第一大江，从有“世界屋脊”之称的青藏高原源头出发，一路向东，劈高山、穿峡谷，几经折荡，奔腾几千公里，到达大陆东部，汇入浩瀚的太平洋。

ອ່າວທີໜຶ່ງຂອງແມ່ນ້ຳຈີນຊາຈຽງ,ແມ່ນ້ຳຢາງຊີກຽງ
金沙江长江第一湾　CFP 图

ພາກກາງຂອງຈີນ ແລະ ແກ່ຍາວໄປເຖິງກຸຍໂຈວ, ກ່ານສູ້, ສານຊີ່, ເຣີ້ນານ, ກວາງຊີ, ກວາງຕຸ້ງ, ເຈີ້ຈ່ຽງ ແລະຟູ້ຈຽນ 8 ແຂວງ ແລະ ເຂດປົກຄອງຕົນເອງ, ເນື້ອທີ່ຂອງລ້ອງແມ່ນ້ຳທັງໝົດມີເຖິງ 1.800.000 ກິໂລ ແມັດມົນທົນກິນເນື້ອທີ່ດິນທັງໝົດ 1/5 ຂອງຈີນ.

ແມ່ນ້ຳສາຍສາຂາອັນຫລວງຫລາຍນັ້ນໄດ້ເປັນການສະໜອງແຫຼ່ງທີ່ມາຂອງນ້ຳອັນອຸດົມສົມບູນໃຫ້ແກ່ແມ່ນ້ຳຢາງຊີກຽງ. ປະລິມານລວມຊັບພະຍາກອນນ້ຳຂອງແມ່ນ້ຳຢາງຊີກຽງມີເຖິງ 960 ກວ່າ ຕື້ແມັດກ້ອນ, ກິນອັດຕາສ່ວນ 1/3 ຂຶ້ນໄປຂອງປະລິມານນ້ຳລວມຂອງສາຍແມ່ນ້ຳໃນທົ່ວປະເທດຈີນ,ພຽງແຕ່ຖັດກັບແມ່ນ້ຳອາມາໂຊນ ແລະ ແມ່ນ້ຳກົງໂກຂອງທະວີບອາຟຣິກາຈັດຢູ່ອັນດັບທີ 3 ຂອງໂລກ.



ແມ່ນ້ຳຢາງຊີກຽງມີແຫລ່ງກຳເນີດທີ່ແຂວງຊິ່ນຮາຍ, ລຳທານນ້ຳກ້ອນຢູ່ກົ້າຕາເວັນຕົກສ່ຽງໃຕ້ຂອງພູຫິມະເກີ້ລາຕານຕົ່ງຈອມພູຕົ້ນຕໍຂອງສາຍພູຖາງກູລາຊານເປັນຈຸດເລີ່ມກຳເນີດຂອງມັນ.ຢູ່ທີ່ນັ້ນພູມສັນຖານສູງສູ່ຍອດຟ້າ,ມີຈອມພູສະສົມຫິມະຕະຫຼອດປີ, ນ້ຳຫິມະທີ່ໄດ້ເປື່ອຍຍອດເປັນຫຍັດຂອງລຳທານນ້ຳກ້ອນໃຫຍ່ບາງສາຍໄດ້ໂຮມເຂົ້າກັນກາຍເປັນແມ່ນ້ຳ,ເປັນບ່ອນເລີ່ມການເດີນທາງອັນຍິ່ງໃຫຍ່ຂອງແມ່ນ້ຳຢາງຊີກຽງ.



ຂົວໃຫຍ່ຊູທອງເຊິ່ງເປັນຂົວເຈີຍລາກແກ່ອັນດັບທີ 1 ໃນໂລກ
“ 世界第一斜拉桥 ” 苏通大桥 CFP 图

ຕອນແມ່ນ້ຳຢູ່ລ້ອງເທິງຂອງແມ່ນ້ຳຢາງຊີກຽງຈຸດໜັກແມ່ນເຂດພູດອຍ, ຢູ່ທີ່ນີ້ມີເຫວເລິກນ້ຳໄຫຼແຮງເຝືອນຮ້າຍ.ມັນໄຫຼຢ່າງຄົດລ້ຽວເປັນຫຼາຍຫຼົບຫຼາຍຕ່າວຢູ່ພູພຽງຊິ່ນຮາຍ-ຕີເບດທີ່ເປັນດິນແດນອັນກວ້າງຂວາງ,ແລ້ວຈຶ່ງລຽບຕາມສາຍພູເທິງຕ້ອນຊານໜ້າຍຕ່າວຫົວລົງໄປທາງໃຕ້, ເຂົ້າສູ່ດິນແດນພູສູງແລະເຫວເລິກ. ຢູ່ຊື້ກູຂອງຫລີ້ຈ່ຽງແຂວງຢຸນນານ, ສາຍແມ່ນ້ຳຢາງຊີກຽງໄດ້ຫລອນລ້ຽວໄຫລໄປທາງທິດຕາເວັນຕົກສ່ຽງເໜືອ,ກາຍເປັນ "ບ່ອນລ້ຽວທຳອິດຂອງແມ່ນ້ຳຢາງຊີກຽງ". ຈາກນັ້ນຈຶ່ງໄຫຼຄົດໆລ້ຽວໆໄປທາງທິດຕາເວັນອອກ,ໄຫຼຜ່ານ "ຊ່ານ ເຊັ້ຍ (ສາມຊ່ອງແຄບ) ຂອງແມ່ນ້ຳຢາງຊີກຽງ "ທີ່ມີທິວທັດສວຍສົດງົດງາມ, ມາເຖິງອີ້ຊ່າງຂອງແຂວງຮູ້ໄປ໋.

ຜ່ານກາຍອີ້ຊ່າງໄປແລ້ວແມ່ນ້ຳຢາງຊີກຽງໄຫລເຂົ້າສູ່ເຂດທົ່ງພຽງລ້ອງກາງ ແລະ ລ້ອງຂອງແມ່ລຸ່ມນ້ຳ, ເປັນຕອນແມ່ນ້ຳທີ່ມີເງື່ອນໄຂແລ່ນເຮືອດີເລີດກວ່າເພີ່ນຂອງແມ່ນ້ຳຢາງຊີກຽງ. ຢູ່ທີ່ນີ້ມີສາຍແມ່ນ້ຳສາຂາຢ່າງຫລວງຫລາຍ ແລະ ຕິດຕໍ່ຊື່ງກັນແລະກັນກັບໜອງບຶງນ້ອຍໆໃຫຍ່ໆເປັນຈຳນວນຫລວງຫລາຍ, ເປັນເຂດໜອງບຶງນ້ຳຈືດແຜ່ກະຈາຍລວມສູນກວ່າເພີ່ນຂອງຈີນ.

ແຕ່ຮູ້ໂຄວຂອງແຂວງຈ່ຽງຊີ່ຮອດປາກແມ່ນ້ຳຢາງຊີກຽງໄຫລເຂົ້າສູ່ທະເລ, ເປັນຕອນແມ່ນ້ຳລ້ອງລຸ່ມຂອງແມ່ນ້ຳຢາງຊີກຽງ,ຢູ່ທີ່ນີ້ໜ້ານ້ຳ ຄ່ອຍໆກວ້າງອອກ, ນ້ຳໄຫລຄ່ອຍໆທຸ່ມລົງ,ຕາມສາຍແມ່ນ້ຳມັກມີເກາະດອນນ້ອຍໆໃຫຍ່ໆປະກົດໃຫ້ເຫັນຢ່າງຫລວງຫລາຍ,. ເມື່ອຮອດຈຸດສຸດທ້າຍ---ເກາະຊົ້ງມິງຕ່າວຂອງນະຄອນຊຽງໄຮ,ລະດັບຄວາມກວ້າງຂອງແມ່ນ້ຳຢາງຊີກຽງ ຈາກ 1000 ກວ່າແມັດຂະຫຍາຍກວ້າງມາເປັນ ໙໐ກວ່າກິໂລ ແມັດ, ແມ່ນ້ຳຢາງຊີກຽງໃນເວລານີ້ຄວາມກວ້າງຂອງມັນຈົນເບິ່ງບໍ່ເຫັນຝັ່ງກົງກັນຂ້າມ.

ຈາກພູພຽງຊິ່ນຮາຍ-ຕີເບດທີ່ໜາວຈັດໄປເຖິງຕົວເມືອງທີ່ຈະເລີນກ້າວໜ້າດ້ານເສດຖະກິດຂອງຈີນ, ແມ່ນ້ຳຢາງຊີກຽງໄດ້ກາຍເປັນແມ່ນ້ຳທີ່ກວ້າງຂວາງ ແລະ ຍິ່ງໃຫຍ່ອັນປຽບປານບໍ່ໄດ້ໄຫລເຂົ້າສູ່ທະເລຈີນຕາເວັນອອກ.



# ຊູ່ໂຈວ—
# ຕົວເມືອງສວນປ່າຢູ່ພາກໃຕ້ແມ່ນ້ຳຢາງຊີກຽງ

## 江南园林城市——苏州

具有 2500 多年建城历史的苏州，位于中国江苏省南部。苏州因其独特的园林艺术而闻名于世。苏州长期受到吴越文化的熏陶，无论是水巷民居，还是民乐工艺，都很有江南味道，柔美而秀气。这里既有园林之美，又有山水之胜，自然、人文景观交相辉映，加之文人墨客题咏吟唱，使苏州成为名副其实的“人间天堂”。



ສວນໂຈເຈີນຊູໂຈວ
苏州拙政园 CFP 图



ພາບວິວກາງຄືນທີ່ເຫຼື້ອມຍິບຍັບຂອງສວນປ່າວາງຊີຊູໂຈວ
苏州园林网师园流光溢彩的夜景 新华社 图

ຊູໂຈວຊຶ່ງມີປະຫວັດສ້າງຕົວເມືອງ2500ກວ່າປີນັ້ນ, ມີທີ່ຕັ້ງຢູ່ພາກໃຕ້ຂອງແຂວງຈ່ຽງຊູສປ ຈີນ.ຍ້ອນວ່າມີສິລະປະສວນປ່າທີ່ເປັນເອກະລັກຂອງມັນເອງ, ຈຶ່ງເຮັດໃຫ້ຊູໂຈວຂຶ້ນຊື່ລືນາມຢູ່ໃນໂລກ,ຊູໂຈວ ໄດ້ຮັບການອົບຮົມບົ່ມເພາະຈາກວັດທະຍະທຳອູ໋ເອີຍ ເປັນໄລຍະຍາວນານ, ບໍ່ວ່າຈະແມ່ນເຮືອນພັກປະຊາຊົນຢູ່ຕາມຊອຍນ້ຳ, ຫລືວ່າສິລະປະຊີບເຮັດເຄື່ອງດົນຕີພື້ນເມືອງ, ລ້ວນແຕ່ມີແບບຊົງສີສັນພາກໃຕ້ແມ່ນ້ຳຢາງຊືກຽງທີ່ອ່ອນຊ້ອຍສວຍງາມທັງມີກິ່ນອາຍສິລະປະອັນໜ້າອອນຊອນ.ຢູ່ທີ່ນີ້ທັງມີຄວາມງາມຂອງສວນປ່າແລະທັງມີຄວາມໂດດເດັ່ນຂອງພູແລະນ້ຳ,ທຳມະຊາດກັບທັດສະນີຍະພາບວັດທະນະທຳມະນຸດວິທະຍາສິ່ງແສງແວວວາວຊຶ່ງກັນແລະກັນ, ບວກໃສ່ປັນຍາຊົນນັກຂຽນນັກກາວິພາກັນຮ້ອງຂັບລຳເຊີ້ງ, ເຮັດໃຫ້ຊູໂຈວກາຍເປັນ "ວິມານຂອງເມືອງຄົນ" ຢ່າງສົມຊື່.

ບ່ອນທີ່ສາມາດສະແດງອອກສີສັນພິເສດຂອງວັດທະນະທຳເມືອງນ້ຳຊູໂຈວກ່ອນເພິ່ນນັ້ນແມ່ນເມືອງບູຮານເຝີງຊຽວຢູ່ຊານເມືອງຕາເວັນຕົກ. ຢູ່ແຫ່ງນີ້ໄດ້ຮັກສາໄວ້ສິ່ງປຸກສ້າງສະໄໝລາຊະວົງມິງ ແລະ ລາຊະວົງຊິງທີ່ມີຮູບໂສມຮຽບງ່າຍເກົ່າແກ່ເປັນຈຳນວນຫຼວງຫຼາຍ, ທຸກຄອບຄົວລ້ວນແຕ່ຕັ້ງເຮືອນຊານຢູ່ແຄມນ້ຳ,ຫົນທາງຄົດໆລ້ຽວໆຄົນຍ່າງຜ່ານຫ້າງຮ້ານຕັ້ງຢູ່ເປັນແຖວຢູ່ແຄມຖະໜົນ, ສາມາດໄປເຖິງແຄມຂອງຄອງນ້ຳບູຮານໂດຍກົງ.ຢູ່ເມືອງເກົ່ານີ້ ຍັງຮັກສາໄວ້ກຸຕິບູຮານທີ່ເຫຼືອໄວ້ທີ່ມີປະຫວັດ 1400 ກວ່າປີ, ນັ້ນກໍຄືວັດຮ້ານຊ້ານທີ່ລືຊື່. ເວລາຈົ່ງຈີ້ນັກກະວີສະໄໝລາຊະວົງຖາງເດີນຜ່ານເມືອງບູຮານເຝີງຊຽວ, ເຄີຍໄດ້ຂຽນກອນທີ່ມີຊື່ວ່າ: "ຈອດເຮືອນອນແຮມຄືນເຝີງຊຽວ". ກອນດັ່ງກ່າວໄດ້ບັນລະຍາຍພາບລາຕີເຝີງຊຽວທີ່ເຮັດໃຫ້ນັກກະວີຈິດໃຈຫຼົງໄຫຼເປັນຢ່າງຍິ່ງ, ສະແດງເຖິງຄົນທັງຫລາຍມີຄວາມສັດ



ຊູໂຈວໃນວັນນີ້
今日苏州 CFP图

ທາ ແລະ ໄຟທາຕໍ່ວັດທະນະທຳກູ່ຊູ.

ສວນປ່າຊູໂຈວຊຶ່ງເອົາບັນດາປັດໄຈດ້ານການກໍ່ສ້າງ, ການວິຈິດຕະກຳພາບແຕ້ມ, ການແກະສະຫຼັກໂຖດອກໄມ້, ໂຖໄມ້ປະດັບລວມເຂົ້າກັນເປັນອົງປະກອບອັນດຽວນັ້ນໄດ້ກາຍເປັນນາມບັດອັນສຳຄັນຂອງຕົວເມືອງນີ້. ຊຶ່ງເປັນ "ເມືອງສວນປ່າ" ທີ່ລືຊື່ຢູ່ໃຕ້ຟ້າແຫ່ງນີ້, ເລີ່ມແຕ່ຍຸກສະໄໝເກົ່າແກ່ບູຮານທີ່ສຸດເປັນຕົ້ນມາ, ຊູໂຈວກໍເປັນບ່ອນເລືອກທຳອິດຂອງບ່ອນດຳລົງຊີວິດຂອງເຈົ້າຂຸນ ມູນນາຍທີ່ມາພັກເຊົາຢ່າງສັນໂດດຍ້ອນແນວນັ້ນຈຶ່ງໄດ້ຈັ່ງສວນດອກໄມ້ທີ່ມີພູ ແລະ ປ່າອັນສວຍງາມເປັນເນື້ອທີ່ອັນກວ້າງຂວາງໄວ້ໃຫ້ຊູໂຈວ. ສວນປ່າແຜນບູຮານດັ່ງກ່າວນີ້ເປັນຕົວແທນທີ່ໂດດເດັ່ນກວ່າເພິ່ນກໍໄດ້ຖືກຈັດໄວ້ຢູ່ມໍລະດົກວັດທະນະທຳຂອງໂລກ. ສວນປ່າດັ່ງກ່າວເຕັມໄປດ້ວຍລົດນິຍົມທີ່ມີຄວາມໝາຍ ທຳມະຊາດ ແລະ ພື້ນຖານຮັ່ງມີໜັກແໜ້ນທາງວັດທະນະທຳ, ກາຍເປັນແບບຢ່າງຂອງຊີວິດໃນຕົວເມືອງ.

ການກໍ່ສ້າງສວນປ່າຂອງຊູໂຈວແມ່ນເລີ່ມແຕ່ກ່ອນໜ້ານີ້ 2000 ກວ່າປີ, ຮອດສະໄໝລາຊະວົງມິງເປັນໄລຍະຈະເລີນສຸດຍອດ. ໃນເວລາອັນສັ້ນທີ່ສຸດຊູໂຈວໄດ້ກຳເນີດເຂດທະສວນປ່າທີ່ນັບບໍ່ຫວ້ອນ, ສະໄໝລາຊະວົງມິງ ແລະ ລາຊະວົງຊິງ, ຢູ່ໃນ ແລະ ນອກເມືອງຊູໂຈວກໍມີອາຄານສວນປ່າ 280 ກວ່າແຫ່ງ, ຍ້ອນວ່າຜູ້ກໍ່ສ້າງສວນປ່າແມ່ນຜ່ານການມີການຝຶກຝົນຫລໍ່ຫລອມວັດທະນະທຳໃນລະດັບສູງທີ່ສຸດມາແລ້ວ, ສວນປ່າດັ່ງກ່າວກໍເຕັມໄປດ້ວຍເນື້ອໃນຂອງຮ້ອຍກອນ ແລະ ຮູບແຕ້ມອັນອ່ອນຊ້ອຍ ຈັບໃຈຄົນທັງເປັນມູນເຊື້ອດັ້ງເດີມຂອງຈີນ.

ຊູໂຈວຊຶ່ງເປັນ "ຫໍພິພິທະພັນສວນປ່າແຜນບູຮານ" ມີສວນທີ່ມີຊື່ສຽງຫຼາຍ 10 ບ່ອນໄດ້ຮັກສາໄວ້ຢ່າງຄົບຖ້ວນຈົບງາມແລະທັງໄດ້ເປີດກວ້າງຕໍ່ຊາວໂລກ. ສວນປ່າແຜນບູຮານຂອງຊູໂຈວເດືອນທັນວາຂອງປີ 1997 ໄດ້ຖືກກຳນົດໃຫ້ເປັນມໍລະດົກວັດທະນະ ທຳຂອງໂລກ. ໃນນັ້ນຂຶ້ນຊື່ລືນາມກວ່າເພິ່ນແມ່ນສາລາຊັ່ງລັ່ງຖິນ, ສວນວັງຊື່ຂອງສະໄໝລາຊະວົງສົ້ງ, ປ່າໄມ້ຊື່ຈື ຂອງລາຊະວົງປວນຍັງມີສວນຈົ໋ວເຈິ້ນປວນຂອງລາຊະວົງມິງ ແລະ ສວນລິ້ວປວນຂອງລາຊະວົງຊິງເປັນຕົ້ນ. ສວນປ່າເຫລົ່ານີ້ໄດ້ເອົາວັດທະນະທຳແຕ່ລະຍຸກແຕ່ລະສະໄໝຂອງລາຊະວົງສົ້ງ, ລາຊະວົງປວນ, ລາຊະວົງມິງ ແລະ ລາຊະວົງຊິ່ງສືບເນື່ອງກັນມາ, ໄດ້ປະກົດເປັນສີສັນພິເສດທາງສິລະປະທີ່ຕ່າງກັນ, ສາລາ, ຫໍໂຮງ, ນ້ຳໄຫຼຜ່ານຂົວນ້ອຍໄດ້ສະແດງອອກໃຫ້ເຫັນຢ່າງບໍ່ເຫືອດບໍ່ຂາດ. ສວນເຊາະເຈິ້ນທີ່ຖືກຂະໜານນາມວ່າເປັນຍອດແຍ້ສວນປ່າຂອງພາກໃຕ້ແມ່ນ້ຳຢາງຊີກຽງ" ນ້ຳ ແລະ ພູສົດໃສ, ດອກໄມ້ ແລະ ຕົ້ນໄມ້ຕຶບໜາ, ຄ້າຍຄືກັບວ່າເອົາປ່າ ແລະ ນ້ຳຢູ່ທຳມະຊາດຍ້າຍເຂົ້າມາໄວ້ຢູ່ແຫ່ງນີ້.

ສວນປ່າຂອງຊູໂຈວສ່ວນຫລາຍສ້າງຂຶ້ນຢູ່ຊອຍນ້ອຍບ່ອນຊອກຫຼີກໃນຕົວເມືອງຢູ່ໃກ້ຄຽງກັນກັບທີ່ຢູ່ອາໄສຂອງຊາວບ້ານທີ່ມີກຳແພງໂອບສີ ແລະ ດິນຂໍເປັນສີຄ້ຳ. ພວກມັນໄດ້ເປັນການສະໜອງ "ປ່າໄມ້" ທີ່ເຕັມໄປດ້ວນລົດຊາດທຳມະຊາດໃຫ້ແກ່ຊີວິດໃນຕົວເມືອງທີ່ຟົດສະນັ້ນຄົນທັງຫລາຍບໍ່ຕ້ອງໄປຊານເມືອງກໍສາມາດຮັບຊົມຄວາມສະນຸກສະໜານທີ່ທຳມະຊາດປະທານໃຫ້, ສະໜອງໃຫ້ຜູ້ຄົນທີ່ສະແຫວງຫາໄປທ່ຽວປ່າທ່ຽວດົງນັ້ນມີແຫລ່ງດຳລົງຊີວິດທີ່ໄດ້ດັ່ງຄວາມມັກຄວາມປາຖະໜາແຫ່ງໜຶ່ງ.


蓝月谷 - 雪山


雪山下的村庄

## 张文银摄影作品


拉市海秋景



书法 ແບບຂຽນໜັງສືຈີນ

## 笔墨纸砚 ：书写中国文明的四宝

对于刚刚接触中国书法的外国朋友来说，书法创作所使用的物质材料是很新奇的东西。中国人把毛笔、墨、宣纸和砚台这四种用具称为 " 文房四宝 "，以此表示这些用具在中国书斋生活中的重要性。

# ພູກັນ, ເມິກ, ເຈ້ຍ ແລະ ແຖ່ນຝົນເມິກ :

# ຂອງວິເສດ 4 ຢ່າງ ໃຊ້ເພື່ອຂຽນອະລິຍະທຳຂອງຈີນ

ເວົ້າສຳລັບເພື່ອນມິດຊາວຕ່າງປະເທດທີ່ຫາກໍສຳຜັດກັບວາດຂຽນໜັງສືຈີນແລ້ວ,ວັດຖຸອຸປະກອນທີ່ໃຊ້ສຳລັບປະພັນແລະຂຽນແບບຫນັງສືຈີນນັ້ນ ເປັນວັດຖຸທີ່ ຫນ້າແປກປະຫຼາດ. ຊາວຈີນເອົາພູກັນ,ເມິກ,ເຈ້ຍຊຽນຈື ແລະ ແຖ່ນຝົນເມິກເຄື່ອງໃຊ້ປະເພດນີ້ເອີ້ນເປັນ "ຂອງວິເສດທັງ4ຢ່າງໃນຫ້ອງໜັງສື" ເພື່ອສະແດງເຖິງເຄື່ອງໃຊ້ດັ່ງກ່າວນີ້ມີຄວາມສຳຄັນໃນຊີວິດຢູ່ຫ້ອງໜັງສືຂອງຈີນ.

ພູກັນຂອງຈີນຖືກນຳໃຊ້ຢ່າງກວ້າງຂວາງຢ່າງຊ້າກໍແມ່ນຍຸກສະໄໝອິນຊັ່ງກໍໄດ້ໃຊ້ເຂົ້າໃນການຂຽນ ຕົວຫນັງສືແລ້ວ, ພູກັນຈີນໃນສະໄຫມນັ້ນກໍຍັງເຮັດຂຶ້ນແບບງ່າຍໆ, ເມື່ອເຖິງສະໄໝລາຊະວົງສິນ ທ່ານ ເມິງທ້ຽນ ນາຍພົນທະຫານທີ່ລືຊື່ຜູ້ໜຶ່ງໄດ້ດັດແປງແກ້ໄຂວິທີເຮັດພູກັນ,ຈາກການພົບເຫັນວັດຖຸຕົວຈິງທີ່ເປັນພູກັນໃນການຄົ້ນພົບຂອງບູຮານຄະດີມາສັງເກດແລ້ວ,ພູກັນໃນສະໄໝລາຊະວົງສິນ ແລະ ລາຊະວົງຫ້ານກັບພູກັນທີ່ນຳໃຊ້ໃນປະຈຸບັນແມ່ນຄ້າຍຄືກັນທີ່ສຸດ,ພູກັນຈີນທີ່ມັກເຫັນນັ້ນແບ່ງເປັນພູກັນຂົນແບ້ ແລະ ພູກັນຂົນຫມາໄນເປັນຕົ້ນຕ່າງເອົາຂົນຂອງແບ້ ຫຼື ຂົນຂອງຫມາໄນມາເຮັດເປັນຝອຍຂອງຫົວພູກັນ. ຢູ່ຫໍພິພິດທະພັນວັງເກົ່າໄດ້ເກັບຮັກສາພູກັນເປັນຈຳນວນຫຼວງ



ພູກັນ 笔祝群图



ເມິກ 墨 CFP 图



ເຈ້ຍ 纸 新华社 图

ຫຼາຍທີ່ແມ່ນຂອງບັນນາການຖວາຍໃຫ້ພະເຈົ້າແຜ່ນດິນນຳໃຊ້ໃນສະໄໝລາຊະວົງມິງ ແລະ ລາຊະວົງຊິງ. ພູກັນດັ່ງກ່າວສິລະປະຫັດຖະກຳຂອງການປະດິດສ້າງປະເສີດເລີດລ້ຳ.

ກ່ອນການປະດິດຄິດສ້າງເຈັ້ຍທີ່ເຮັດດ້ວຍໃຍຂອງພືດ, ຊາວຈີນເຄີຍຂຽນຕົວອັກສອນໃສ່ໃນຜ້າໄໝ. ແຕ່ຍ້ອນວ່າລາຄາຂອງຜ້າໄໝນັ້ນແພງຫຼາຍ, ມີແຕ່ຂຸນນາງສ່ວນໜ້ອຍຈຶ່ງສາມາດໃຊ້ໄດ້. ຄົນສ່ວນຫຼາຍໄດ້ເອົາຕົວອັກສອນຂຽນໄວ້ຢູ່ໃນ ປ່ຽງໄມ້ໄຜ່ທີ່ຈັດເປັນຣຳ; ຢູ່ພາກໃຕ້ຂອງຈີນມີໄມ້ໄຜ່ຢ່າງຫລວງຫລາຍກໍເລີຍນຳໃຊ້ໄມ້ໄຜ່ມາຜ່າເປັນປ່ຽງເພື່ອຈົດບັນທຶກຕົວອັກສອນໃສ່; ພາກເໜືອບໍ່ເໝາະສົມຕໍ່ການຈະເລີນເຕີບໂຕຂອງໄມ້ໄຜ່ກໍເລີຍນຳໃຊ້ໄມ້ທີ່ເຫລົາເປັນແຜ່ນບາງໆມາຂຽນຕົວໜັງສື. ຄ.ສ ປີ 105 ທ່ານໄຊລຸ້ນ ນັກປະ ດິດສ້າງຂອງສະໄໝລາຊະວົງຫ້ານຕາເວັນອອກໄດ້ດັດແປງແກ້ໄຂເຕັກນິກຜະລິດເຈ້ຍ, ໂດຍໃຊ້ເຈ້ຍທີ່ຜະລິດຈາກໃຍຂອງພືດເປັນວັດຖຸອຸປະກອນຕົ້ນຕໍ່ກວ່າເພີ່ມຂອງການເຄື່ອນໄຫວຂຽນໂຕໜັງສືຈີນ. ການປະດິດເຈ້ຍຂຶ້ນມານັ້ນເປັນເຫດການໃຫຍ່ທາງປະຫວັດສາດດ້ານອະລິຍະທຳຂອງມວນມະນຸດ, ມັນໄດ້ຊຸກດັນຂະບວນວິວັດຄວາມຄືບໜ້າ ດ້ານອະລິຍະທຳຂອງມວນມະນຸດ, ດັ່ງນັ້ນຈຶ່ງຖືກຍ້ອງຍໍວ່າເປັນໜຶ່ງໃນ "ມະຫາການປະ ດິດສ້າງ 4 ຢ່າງ" ສະໄໝບູຮານຂອງຈີນ. ຕໍ່ມາ, ຊາວຈີນກໍໄດ້ດັດແປງແກ້ໄຂຄຸນນະພາບຂອງເຈ້ຍອີກ ຕື່ມກ້າວໜຶ່ງ, ຜະລິດເຈ້ຍຊະນິດໜຶ່ງທີ່ເໝາະສົມໃຊ້ໃນການຂຽນຕົວໜັງສືຈີນ ແລະ ໃຊ້ອາດພາບພິເສດນັ້ນອອກມາ, ເຈ້ຍຊະນິດດັ່ງກ່າວໂດຍເອົາແຫລ່ງກຳເນີດທີ່ຊ່ວງໂຈວຂອງແຂວງອ່ານຮູຍເປັນເຈ້ຍຍື້ນຊື່ລືຊາກວ່າເພີ່ນ, ດັ່ງນັ້ນຈຶ່ງເອີ້ນວ່າ: "ເປັນເຈ້ຍຊຽນຈື". ເຈ້ຍຊຽນຈືມີລັກສະນະດູດຊຶມເອົານ້ຳເປັນຢ່າງດີ, ມີຜົນດີໃຫ້ແກ່ການສະແດງອອກຄວາມເຂັ້ມອົ່ນຫຼືຈືດຈາງທີ່ມີຊັ້ນລຳດັບຕ່າງກັນຂອງສີເມິກ, ໄດ້ກາຍປັນວັດຖຸອຸປະກອນທີ່ຂາດບໍ່ໄດ້ໃນການຂຽນ ແລະ ແຕ້ມຂອງຈີນ.

ນັກຂຽນໜັງສື ແລະ ນັກແຕ້ມທີ່ມີຫົວນິຍົມກໍມີການຮຽກຮ້ອງຕ້ອງການຕໍ່ເມິກສູງທີ່ສຸດ.ຕັ້ງແຕ່ກີ້ແຕ່ກ່ອນພຸ້ນ,ຊາວຈີນກໍຮູ້ຈັກໃຊ້ວິທີເຜົາກິ່ງງ່າໄມ້ແປກເອົາຄວັນຂອງໄມ້ແປກເກາະຕິດກັນ(ຂີ້ໝິດໝໍ້)ປະສົມກັບເຄື່ອງຫອມ,ທຸບຕີໃຫ້ລະອຽດແລ້ວ ນຳມາຜະລິດເປັນ ກ້ອນເມິກທີ່ດີເລີດ ແລະ ສວຍງາມ.ເວລາ ຂຽນໜັງສື ແລະ ແຕ້ມຮູບເອົາກ້ອນເມິກຈຸບນ້ຳແລ້ວຝົນຢູ່ເທິງ ແຖ່ນເມິກກໍມີນ້ຳເມິກສີດຳປານນ້ຳກ້ຽງອອກມາ.ການປະສົມນ້ຳເຂົ້າໃນນ້ຳເມິກນັ້ນຫຼາຍຫຼືໜ້ອຍແມ່ນຕ່າງກັນຈຶ່ງມີການຈຳແນກວ່າເມິກຂຸ້ນ ຫລື ເມິກຈາງ. ໃນສິລະປະການຂຽນໜັງສື ແລະ ແຕ້ມ ຮູບນັ້ນມີຄຳສັບຄຳໜຶ່ງເວົ້າວ່າ: "ເມິກແບ່ງເປັນ 5 ສີ",ນັກສິລະປະທີ່ຊຳນານກັບເລື່ອງນີ້ນັ້ນສາມາດເອົາສີເມິກທີ່ງ່າຍດາຍນັ້ນແບ່ງອອກເປັນຊັ້ນລຳດັບຢ່າງອຸດົມສົມບູນອອກມາ.

ການຝົນເມິກກໍຕ້ອງໃຊ້ແຖ່ນຝົນເມິກ,ດັ່ງນັ້ນແຖ່ນຝົນເມິກ



ຮູບປະຈຳຊາດ 国画

ກໍເລີຍກາຍເປັນວັດຖຸທີ່ຕ້ອງກຽມໄວ້ໃນຊີວິດດ້ານວັດທະນະທຳ.ເມືອງເຊີ້ຊຽນແລະຕ່ວນໂຈວໃນສະໄໝບູຮານຂອງຈີນລ້ວນແຕ່ຂຶ້ນຊື່ລືຊາໃນການຜະລິດແຖ່ນຝົນເມິກທີ່ມີລາຄາສູງ,ແຖ່ນຝົນເມິກເຊີ້ແລະແຖ່ນຝົນເມິກຕ່ວນ ລ້ວນແຕ່ເປັນເຄື່ອງໃຊ້ວັດທະນະທຳທີ່ປັນຍາຊົນຖືສຳຄັນ.ເມື່ອເຂົາເຈົ້າໄດ້ແຖ່ນຝົນເມິກທີ່ດີເລີດແຖ່ນໜຶ່ງແລ້ວ,ບໍ່ພຽງແຕ່ຈະຕ້ອງເຊີນຊ່າງທີ່ມີຄວາມສາມາດສູງມາປະດັບປະດາໃຫ້ງາມຂຶ້ນເທົ່າທີ່ຈະເຮັດໄດ້,ຍັງມັກແກະສະຫຼັກຊື່ ຂອງຕົນ ຫລື ສຸພາສິດທີ່ຕົນມັກໃສ່ອ້ອມຂ້າງຫລືພື້ນຂອງແຖ່ນຝົນເມິກດັ່ງກ່າວ.ຢູ່ບັນດາຫໍພິພິທະພັນໃຫຍ່ຂອງຈີນການເກັບຮັກສາແຖ່ນຝົນເມິກກໍມີຢ່າງຫລວງຫຼາຍທີ່ສຸດ.

"ຂອງວິເສດ 4 ຢ່າງໃນຫ້ອງໜັງສື" ຂອງຈີນໄດ້ລື່ນກາຍວົງຂອບເຂດຂອງອຸປະກອນວັດທະນະທຳ, ກາຍເປັນວັດທະນະທຳລະອຽດອ່ອນ ແລະ ອຸດົມສົມບູນທີ່ມີເອກະລັກສະເພາະຕົວຂອງກັນໄປແລ້ວ.



ແຖ່ນຝົນເມິກ 砚 祝 群 图

# THE SACRED MOUNTAIN OF LIFE - MT. GAOLIGONGSHAN
# AN IDEAL DESTINATION FOR ECO-TOURISM

We are expecting your inquiry about and trips for such attractions: the ancient path of over 2 000 years, 16 indigenous ethnic groups, 4 303 species of higher plants, 581 kinds of wild animals, a high mountain with a vertical height difference of 4 000 meters, ··· one more scenic area just one step ahead, and one may experience four seasons in a single day!



# ວ່າວເວີຍຟາງ ທີ່ປານີດງົດງາມ

## 精美的潍坊风筝

图 /CFP

潍坊民间工艺品种丰富，年画、剪纸、布玩具等有着几百年的悠久历史，不过最为有名的还是风筝。潍坊是中国风筝的发祥地，也是中国四大风筝产地之一。潍坊风筝已有两千多年的历史，与北京风筝、天津风筝齐名。

ຜະລິດຕະພັນສິລະປະຫັດຖະກຳພື້ນເມືອງຂອງເວີຍຟາງອຸດົມສົມບູນ, ຮູບພາບສະຫຼອງກຸດຈີນ, ການຕັດເຈ້ຍໃຫ້ເປັນຮູບ, ເຄື່ອງຫຼິ້ນເຮັດດ້ວຍຜ້າເປັນຕົ້ນລ້ວນແຕ່ມີປະຫວັດຄວາມເປັນມາເຫິງນານ, ແຕ່ວ່າສິ່ງທີ່ມີຊື່ສຽງກວ່າໝູ່ນັ້ນຍັງແມ່ນວ່າວ.

ເວີຍຟາງເປັນແດນມຸງຄຸນຂອງວ່າວຈີນ, ແລະກໍແມ່ນແຫຼ່ງຜະລິດວ່າວຂະໜາດໃຫຍ່ 1 ໃນ 4 ຂອງ ຈີນ, ວ່າວຂອງເວີຍຟາງມີປະຫວັດ 2000 ກວ່າປີມາແລ້ວ, ມີຊື່ສຽງຊ່ຳກັນກັບວ່າວປັກກິ່ງ ແລະ ວ່າວທຽນຈິນ.

ເນື້ອຫາຂອງຮູບຊົງການເຮັດວ່າວຂອງວ່າວເວີຍຟາງອຸດົມສົມບູນທີ່ສຸດ, ການອອກແບບປ່ຽນຮູບໂສມເກີນຄວາມຈິງ, ພາບໜ້າມີອາດຊົງຄືກັນກັບຮູບແຕ້ມສະຫຼອງກຸດຈີນຂອງຈີນ, ປະເພດຂອງດ້ານສິລະປະມີຫລວງຫລາຍຈົນເບິ່ງບໍ່ຫວ້ອນມີທັງຮູບສັດຊະນິດຕ່າງໆ, ຮູບຕົວອັກສອນຕ່າງໆຈົນກະທັ່ງຮູບເຮືອນຮູບເຄື່ອງໃຊ້ຂອງສອຍກໍສາມາດເອົາມາປະດິດ



ເປັນຮູບວ່າວ,ພ້ອມກັນນັ້ນສິ່ງທີ່ກ່າວມານັ້ນບໍ່ວ່າຮູບຊົງຂອງມັນຈະນ້ອຍຫລື ໃຫຍ່ລ້ວນແຕ່ສາມາດຊັກຂຶ້ນຟ້າໄດ້. ການແຕ້ມຮູບພາບຢູ່ໃນວ່າວຍິ່ງມີຫລາຍຮູບຫລາຍແບບ ຢ່າງອຸດົມສົມບູນ, ມີຮູບສັນຍາລັກທີ່ເປັນສິລິມຸງຄຸນໃນຊີວິດປະຈຳວັນຂອງຄົນເຮົາ, ແລະ ກໍມີເອົາເທບນິຍາຍຂອງຊາວບ້ານມາເປັນເນື້ອໃນ, ນັກສິລະປະເຮັດວ່າວຂອງເວີຍຟາງຍັງເອົາສິລະປະຫັດຖະກຳແບບພິມທີ່ແກະສະຫຼັກໃສ່ແປ້ນມາເປັນຮູບພາບສະຫຼອງກຸດຈີນນັ້ນຍ້າຍມາໃສ່ການແຕ້ມໜ້າວ່າວ,ເອົາສິລະປະສີໄມ້ລາຍມືທີ່ເປັນມູນເຊື້ອໃນການແຕ້ມຮູບພາບແບບຈີນນຳໃຊ້ເຂົ້າໃນການແຕ້ມໜ້າຂອງວ່າວ, ເນື່ອງຈາກວ່າຢາງເຈ່ຍປູ້ຂອງເວີຍຟາງແມ່ນແຫລ່ງກຳເນີດຮູບພາບສະຫລອງກຸດຈີນທີ່ມີແມ່ພິມເປັນໄມ້ແປ້ນ,ດັ່ງນັ້ນທ່ວງທ່າຂອງການວາດພາບຢູ່ເທິງໜ້າວ່າວຢູ່ບ່ອນນີ້ຄ້າຍໆຄືກັນກັບຮູບພາບສະຫຼອງກຸດຈີນທີ່ມີແມ່ພິມເປັນໄມ້ແປ້ນຍ້ອນແນວນັ້ນວ່າວຢາງເຈ່ຍປູ້ຈຶ່ງຖືກເອີ້ນວ່າເປັນວ່າວຮູບພາບສະຫຼອງກຸດຈີນທີ່ມີແມ່ພິມດ້ວຍໄມ້ແປ້ນ.1ໃນຂັ້ນຕອນຂອງການ ເຮັດວ່າວແບບນີ້ກໍຄືພາບຂອງຄົນຫຼືສັດຕັດອອກຈາກຮູບພາບສະຫຼອງກຸດຈີນຈາກແມ່ພິມໄມ້ແປ້ນທີ່ໄດ້ພິມສຳເລັດແລ້ວນັ້ນມາຕິດໃສ່ຮ່າງຂອງວ່າວ.ວ່າວຂອງເວີຍຟາງຖືສຳຄັນການແຕ້ມຮູບໃສ່ ເປັນພິເສດ,ໃນນັກສິລະປະເຮັດວ່າວຂອງເວີຍຟາງນັ້ນມີຄົນບໍ່ໜ້ອຍແມ່ນຜູ້ມີຄວາມສາມາດສູງໃນການແຕ້ມຮູບພາບແບບຈີນ,ພວກເຂົາເຈົ້າເອົາວິທີແຕ້ມຮູບພາບແບບຈີນປະສົມປະສານເຂົ້າເປັນອົງປະກອບດຽວກັບຮູບພາບໜ້າວ່າວ.ຮູບພາບທີ່ແຕ້ມໃສ່ໜ້າວ່າວສີມີລະອຽດອ່ອນ,ດັ່ງນັ້ນວ່າວຂອງເວີຍຟາງຈຶ່ງມີລັກສະນະໜ້າເບິ່ງໜ້າຊົມທີ່ສຸດ,ຄົນທັງຫລາຍມັກເອົາມາເປັນ ຜະລິດຕະພັນສິລະປະປະດັບປະດາໄວ້ຢູ່ໃນຫ້ອງເຮືອນ ຫລື ຖືກຄົນ ເກັບສະສົມໄວ້ເປັນເຄື່ອງໂຊພິເສດ.




ວ່າວຂອງເວີຍຟາງສາມາດເຮັດເປັນປະເພດປີກແຂງ, ປະເພດປີກອ່ອນ ແລະ ປະເພດເປັນພວງຕໍ່ກັນເປັນຕົ້ນ,ປະເພດປີກແຂງແມ່ນໃຊ້ໄມ້ໄຜ່ 2 ຕ່ອນມາເຮັດເປັນຮ່າງຂອງປີກທາງກາງແມ່ນຂອບສີ່ຫລ່ຽມຍາວມັດຕາຍຕົວແລ້ວຈຶ່ງເອົາເຈ້ຍ ຫຼືຜ້າໄໝມາປົກປິດໃສ່,ຊັກຂຶ້ນສູງໄດ້ງ່າຍ.ປະເພດປີກອ່ອນແມ່ນບົນພື້ນຖານມັດໃສ່ຮ່າງຂອງວ່າວແບບປະເພດປີກແຂງແລ້ວເອົາຮ່າງຢູ່ເບື້ອງລຸ່ມຂອງວ່າວຖອດອອກ ເມື່ອຊັກຂຶ້ນຟ້າຈຶດບິນຢ່າງຄ່ອງແຄ່ວເນື້ອຫາທີ່ເປັນຫົວຂໍ້ໃນການເຮັດວ່າວສ່ວນຫຼາຍແມ່ນຮູບນົກແອ່ນ,ຮູບແມງກະເບື້ອງ,ຮູບແມງກະບີ່ເປັນຕົ້ນ,ປະເພດວ່າວເປັນສ້ອຍແມ່ນເອົາວ່າວທີ່ມີຮູບຄືກັນຫຼືບໍ່ຄືກັນຫຼາຍວ່າວຫ້ອຍ ເຂົ້າກັນດ້ວຍການໃຊ້ເຊືອກຊັກເສັ້ນດຽວຊັກຂຶ້ນຟ້າ ຫລື ວ່າໃຊ້ສາຍ ເຊືອກຫລາຍເສັ້ນຊັກຂຶ້ນຟ້າ, ຜະລິດຕະພັນວ່າວທີ່ເປັນຕົວແທນຂອງເວີຍຟາງຄື "ວ່າວຫົວມັງກອນ, ໂຕຂີ້ເຂັບ" ກໍຂຶ້ນກັບວ່າວ ປະເພດດັ່ງກ່າວ.

ຢູ່ເວີຍຟາງ,ຮ້ານອາຫານໄດ້ເອົາວ່າວຫ້ອຍໄວ້ຢູ່ເທິງປ່ອງຢ້ຽມມາເປັນຂອງປະດັບປະດາ, ຮ້ານຄ້າໃຫຍ່, ຮ້ານຄ້ານ້ອຍກໍພາກັນເອົາວ່າວຊັກຂຶ້ນຢູ່ໜ້າຮ້ານຂອງຕົນເອງໃຊ້ຕາງປ້າຍຍີ່ຫໍ້ຂອງຕົນ. ເວີຍຟາງເປັນເມືອງວ່າວທີ່ສົມຊື່ລືນາມ,ວ່າວໄດ້ມີຊື່ສຽງຂຶ້ນຍ້ອນເວີຍຟາງ,ເວີຍຟາງແມ່ນສວຍງາມຍ້ອນວ່າມີວ່າວ.







**普米族**

图 / 叶思孔

普米族是云南 25 个少数民族之一，主要分布于云南兰坪、宁蒗、丽江、永胜等县。云南省兰坪县是中国唯一的白族普米族自治县。普米族的历史悠久，文化特色鲜明。

# ເຜົ່າພູມີ

ເຜົ່າພູມີແມ່ນ1ໃນ25ຊົນເຜົ່າຂອງແຂວງ ຢຸນນານ,ຈຸດໜັກກະແຈກກະຈາຍຢູ່ຕາມເມືອງລ້ານພິນ, ນິງລັງ,ຫຼີ້ຈ່ຽງ, ຢົງເສິ້ນຂອງແຂວງຢຸນນານ.ເມືອງລ້ານພິນຂອງແຂວງຢຸນນານເປັນເມືອງປົກຄອງຕົນເອງຊົນເຜົ່າໄປ່ ແລະ ຊົນເຜົ່າພູມີໜຶ່ງດຽວຂອງຈີນ,ປະຫວັດສາດຂອງເຜົ່າພູມີມີມາຢ່າງຍາວ ນານ,ສີສັນພິເສດດ້ານວັດທະນະທຳສົດໃສແຈ່ມແຈ້ງ.

ແຕ່ລະຊົ່ນຄົນຂອງຊົນເຜົ່າພູມີເທີດທູນແລະນິຍົມສີຂາວ,ພວກເຂົາເຈົ້າເຫັນວ່າສີຂາວເປັນຕົວແທນຂອງຄວາມບໍລິສຸດ ແລະໃຈບຸນ. ດັ່ງນັ້ນເຜົ່າພູມີຈຶ່ງມີຄວາມຊິ່ນເຄີຍນຸ່ງເສື້ອໜັງແບ້ສີຂາວ.ເຄື່ອງນຸ່ງເສື້ອຜ້າອາພອນຂອງເຂົາເຈົ້າສວຍງາມແລະສະຫງ່າຜ່າເຜີຍເບິ່ງເທົ່າໃດກໍບໍ່ອີ່ມຫູອີ່ມຕາ. ໃນວັນທຳມະດາ, ຜູ້ຊາຍສ່ວນຫຼາຍແມ່ນນຸ່ງຜ້າປ່ານທີ່ຕ່ຳເອົາເອງ,ນຸ່ງເສື້ອແຂນສັ້ນ ແລະ ນຸ່ງສົ້ງຂາກວ້າງ, ນຸ່ງເສື້ອກັກໜັງແບ້.ເມື່ອຮອດ ຍາມບຸນ, ເຂົາເຈົ້າກໍມັກນຸ່ງເສື້ອ



ໃຫຍ່ຜ້າອົບສັດ, ຖືໝວກສັກກະຫຼາດອົບຫຍູ້ຍ, ແອວຄັດມີດ, ພາຍຖົງຈ່າມ. ແມ່ຍິງທົ່ວໄປແມ່ນນຸ່ງເສື້ອແຂນສັ້ນເອິກກວ້າງສີຂຽວ, ສີຟ້າຫຼືສີຂາວ, ນຸ່ງສົ້ງຂາຍາວແອວມັດຜ້າແສ່ວດ້ວຍລາຍດອກ ແລະນຸ່ງອ້ຽງ.

ການເຄື່ອນໄຫວວັນບຸນຂອງເຜົ່າພູມີກໍອຸດົມສົມບູນແລະມີຫຼາຍຮູບຫລາຍສີຄືກັນ, ເທດສະການອູສີເປັນເທດສະການທີ່ເປັນມູນເຊື້ອຄຶກຄື້ນທີ່ສຸດຂອງເຜົ່າພູມີ, ນອກນັ້ນຍັງມີເທດສະການອ້ອມວຽນໜ່ວຍພູ, ເທດສະການບູຊາພູຟ້າເປັນຕົ້ນ. ວັນທີ 28ເດືອນເມສາຂອງແຕ່ລະປີເປັນ "ວັນຄົນຮັກພາກຕາເວັນອອກ" ຂອງເຜົ່າພູມີ. ໃນມື້ນັ້ນ, ບ່າວສາວຂອງເຜົ່າພູມີຈະຈັດຕັ້ງກັນດ້ວຍຄວາມສະໝັກໄປຂັບລຳຕໍ່ກອນ, ຟ້ອນລຳ, ແຂ່ງມ້າແລະ ຫລິ້ນມ່ວນຊື່ນອື່ນໆຢູ່ຕາມ "ທົ່ງຄູ່ຮັກ" ທີ່ເປັນທົ່ງຫຍ້າຂຽວອຸ່ມທຸ່ມອ່ອນນອນປານປູພົມ, ຢູ່ທົ່ວທັງປ່າທັງດົງລ້ວນແຕ່ໄດ້ຍິນສຽງເພງ, ສຽງດົນຕີ ແລະ ສຽງກອງຢ່າງຟົດສະໜັ່ນ. ເມື່ອຕາເວັນຄ້ອຍຄ່ຳ ແລະ ຄ່ຳຄືນມາເຖິງແລ້ວ, ຄົນທັງຫລາຍກໍພາກັນດັງກອງໄຟຂຶ້ນ, ພາກັນຈັບມືຟ້ອນລຳທຳເພງຢ່າງເບີກບານມ່ວນຊື່ນ, ກະແສສູງຂອງການມ່ວນຊື່ນມີຂຶ້ນເປັນບາດເປັນບາດຕິດຕໍ່ຫນໍ່ເນື່ອງກັນ.

ວັນນະຄະດີພື້ນເມືອງຂອງເຜົ່າພູມີກໍມີແຫລ່ງກຳເນີດມາແຕ່ເຫີງນານ, ມີຮູບການຫລາຍແບບຫລາຍຢ່າງ. ກາວີປາກເປົ່າທີ່ເປັນມູນເຊື້ອ ແລະ ເພງຮັກມັກທີ່ບ່າວສາວຮ້ອງໃສ່ກັນຍາມພວມມັກຮັກເປັນຕົ້ນ, ເປັນເນື້ອໃນສຳຄັນຂອງການຮ້ອງເພງໄປປ່າໄປພູຍາມວັນປົກກະຕິ ຫລື ຍາມວັນບຸນ. "ສາຍນ້ຳແມ່" ຊຶ່ງເປັນບົດຟ້ອນກາບກອນປະຫວັດສາດປະສານດົນຕີຂະໜາດໃຫຍ່, ແມ່ນເອົາ "ສາຍນ້ຳແມ່" ທີ່ເປັນບ່ອນໃຫ້ກຳເນີດແລະບົ່ມເພາະຊີວິດຈິດໃຈຂອງເຜົ່າພູມີຢູ່ທ້ອງຖິ່ນດັ່ງກ່າວເປັນບ່ອນອີງຕົ້ນຕໍຂອງເນື້ອເລື່ອງ, ໃຊ້ພາສາຟ້ອນລຳທີ່ມີເອກະລັກພິເສດມາສະແດງອອກການບົ່ມເພາະຊີວິດ, ການທຳມາຫາກິນດ້ວຍຄວາມດຸໝັ່ນ, ຄວາມຊ່າລືຊອງຄີໄຟຊົນເຜົ່າພູມີເປັນເພງສະແດງຄວາມຮັກ ແລະ ເພງຢອກໄຍກັນລະຫວ່າງຍິງຊາຍດ້ວຍເນື້ອໃນທີ່ຕ່າງກັນ, ສະແດງເຖິງນ້ຳໃຈຊົນເຜົ່າສືບເນື່ອງກັນມາຫຼາຍເຊັ່ນຄົນຂອງເຜົ່າພູມີ.

# ຍິງທະນູ– ກິລາກາຍຍະກຳຂອງຊົນເຜົ່າລີຊູ

## 傈僳族的体育运动——射弩

图/叶思孔

傈僳族的体育运动是在同大自然作斗争中形成和发展起来的，与傈僳族人民生活紧密相连。弩弓，是傈僳族人民生活中必不可少的工具，它创造并推动了傈僳族的历史，还成了射弩比赛的体育运动。

ກິລາກາຍຍະກຳຂອງຊົນເຜົ່າລີຊູແມ່ນເປັນຮູບເປັນຮ່າງຂຶ້ນ ແລະ ພັດທະນາຂຶ້ນມາທ່າມກາງການຕໍ່ສູ້ກັບມະຫາທຳມະຊາດ, ມັນຕິດພັນຢ່າງສະໜິດແໜ້ນກັບຊີວິດການເປັນຢູ່ຂອງປະຊາຊົນເຜົ່າລີຊູ. ໜ້າທະນູເປັນເຄື່ອງມືທີ່ຂາດບໍ່ໄດ້ໃນຊີວິດປະຈຳວັນຂອງປະຊາຊົນເຜົ່າລີຊູ, ມັນໄດ້ສ້າງ ແລະ ຊຸກຍູ້ປະຫວັດສາດຂອງເຜົ່າລີຊູ, ຍັງກາຍເປັນລາຍການແຂ່ງຂັນກິລາຍິງລູກທະນູອີກດ້ວຍ, ລາຍການສະແດງ "ຂຶ້ນພູມີດລົງທະເລໄຟ" ໃນເທດ ສະການເສົາສຽບມີດນັ້ນ, ງານກິລາທີ່ຖືກພັດທະນາມາຈາກການເຄື່ອນໄຫວຂອງສາສະໜາຜີທີ່ເປັນພິທີກຳຂັບໄລ່ຜີຂະໜາດໃຫຍ່ເພື່ອກຳຈັດໄພຮ້າຍນັ້ນຜັນແປມາເປັນງານກິລາດັ່ງກ່າວ.



ຜູ້ຊາຍຂອງເຜົ່າລີຊູເວລາອອກຈາກບ້ານ, ລ້ວນແຕ່ພາຍໜ້າທະນູຢູ່ເທິງບ່າເອົາຫໍ່ລູກທະນູຕິດຕົວໄປນຳ.ໜ້າທະນູເປັນສັນຍາລັກຂອງເຜົ່າລີຊູ, ເປັນອາວຸດເພື່ອລ່າເນື້ອ ແລະ ປ້ອງກັນຕົວ,ຄັນທະນູຂອງໜ້າທະນູແມ່ນເອົາເປືອກຕົ້ນສາທິນທີ່ມີຄວາມຢືດຍຸ່ນເຮັດເປັນຮູບແບບເຄິ່ງວົງເດືອນແລ້ວເອົາເຊືອກປໍຫລື ໜັງ ຄວາຍມາເຮັດສາຍທະນູ, ເອົາກະດູກມາເຮັດແຂ້ວຂອງທະນູ ແລະ ເດືອຍເກາະຂອງທະນູ;ໃຊ້ໄມ້ໄຜ່ມາເຮັດລູກທະນູໜ້າຕັດຂອງລູກທະນູປະມານ 2mm,ຄວາມຍາວປະມານ 30ຊັງຕີແມັດເຮັດຂຶ້ນຕາມຂະໜາດນ້ອຍໃຫຍ່ຂອງທະນູ,ການຍິງທະນູ,ເຜົ່າລີຊູມັກເວົ້າ ກັນວ່າ: "ຜູ້ທີ່ດຶງສາຍທະນູບໍ່ອອກນັ້ນບໍ່ຖືວ່າເປັນຜູ້ຊາຍ!" ຍ້ອນວ່າກຳລັງດຶງອອກໄດ້ຂອງສາຍທະນູມີເຖິງ60-70ກິໂລ ກລາມ, ຜູ້ບໍ່ມີແຮງແມ່ນດຶງສາຍທະນູບໍ່ອອກ.ຍ້ອນແນວນັ້ນຜູ້ຊາຍຈຶ່ງມັກຝຶກຍິງລູກທະນູຢູ່ເລື້ອຍໆ, ເພື່ອຈະໄດ້ສະແດງສີໄມ້ລາຍມືຂອງຕົນໃນສະໜາມແຂ່ງຂັນຍິງທະນູ.

ທ່າມກາງສຽງດັງ "ທຶມ!ທຶມ!ທຶມ!" ປານສຽງຍິງປືນເພີງທີ່ມີຄວັນໄຟພຸ່ງອອກຈົນເຮັດໃຫ້ຄົນມືດຫູມົວຕານັ້ນ, ກໍຄືປະຊາຊົນເຜົ່າລີຊູ ພວມດຳເນີນການ ແຂ່ງຂັນຍິງປືນເພີງເຮັດດ້ວຍທອງ. ຖ້າໃຜຍິງປືນເພີງໄດ້ 3 ນັດ ພາຍໃນ 1 ນາທີ ແລະ ຍິງຖືກເປົ້າ, ຜູ້ນັ້ນກໍຈະກາຍເປັນນັກຍິງປືນທີ່ແມ່ນທີ່ສຸດ.
ປືນເພີງເຮັດດ້ວຍທອງ ຄ້າຍໆຄືກັນກັບປືນຍາວ, ຍາວພຽງແຕ່ລຳກ້ອງຂອງປືນອ້ອນຂ້າງຍາວເມື່ອກ່ອນແມ່ນໃຊ້ສາຍຂະນວນມາຈູດຕິດກັບໝໍ້ໃຫ້ຕິດໄປແລ້ວ ຍິງລູກປືນອອກຈຶ່ງພາກັນເອີ້ນວ່າ: "ປືນເພີງ"ປະຈຸບັນແມ່ນໃຊ້ແກບລູກປືນມາເປັນພະລັງດັນລູກປືນຍິງອອກຈາກປືນເພີງທອງ.


ງານປະດັບປະດາຊ້າງເຜືອກ
老挝圣象装饰
ດ້ວຍການອອກແບບໂຄງສ້າງທີ່ແຂງແຮງແລະທົນທານ
ພ້ອມເສີມເຫຼັກຊຸບກັນໜມຮັບ
ໄວ້ພາຍໃນວົງກົບແລະກອບບານ
ດ້ວຍເທັກໂນໂລຍີການເຊື່ອມຮອຍຕໍ່ຂອງ
ມູມວົງກົບແລະກອບບານດ້ວຍຄວາມຮ້ອນ
ຈົນສະໜິດເປັນເນື້ອດຽວກັນ
ເສີມລະບົບແຜ່ນຢາງແບບພິເສດ
ລະຫວ່າງວົງກົບແລະກອບບານ
ດ້ວຍການອອກແບບໂຄງສ້າງ
ພາຍໃນວົງກົບແລະກອບບານ
ໃຫ້ມີຊ່ອງເກັບສຽງຫລາຍຊັ້ນ
ພວກເຮົາສາມາດເຮັດປະຕູແລະປ່ອງຢ້ຽມຕາມທີ່ທ່ານຕ້ອງການ
ເບີໂທ: (00856) 21 214071 ແຟກ: (00856) 21 213191
ທີ່ຢູ່: ຖະໜົນດົງໝ້ຽງ ຕໍ່ໜ້າວັດດົງໝ້ຽງ ວຽງຈັນ
地址：寮都公学十字路口
ມີອາຍຸການໃຊ້ງານ
ທີ່ທົນທານກ່ວາວັດສະດຸອື່ນໆ
ປ້ອງກັນນ້ຳໄຫລເຂົ້າມາໄດ້ເປັນຢ່າງດີ
ງ່າຍຕໍ່ການທຳຄວາມສະອາດ
ໂຈນບໍ່ສາມາດເຂົ້າມາໄດ້
ອອກແບບທັນຍຸກທັນສະໄໝ










ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່: ບໍລິສັດທ່ອງທ່ຽວ ຈໍາປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ.



主要有：
首都万象市
世界文化遗产——
琅勃拉邦
占芭色瓦普寺
查尔平原（石缸平原）
宽帕盆大瀑布
里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*



## 生吃大蒜抗衰老

大蒜是我们生活中最常见的一种蔬菜，它的重要性影响了世界上很多国家人民的生活。大蒜其实是不折不扣的健康食品，它既是我们日常饮食中不可或缺的调味品之一，更是药食同源的好食材。除了预防感冒、预防冠心病和动脉粥样硬化外，大蒜的强力抗氧化效果还让它具有很好的抗衰老作用。

# ກິນຜັກທຽມດິບ ຕ້ານການເຖົ້າໄວ

ຜັກທຽມເປັນຜັກຊະນິດໜຶ່ງທີ່ພວກເຮົາເຫັນໄດ້ງ່າຍທີ່ສຸດໃນຊີວິດປະຈຳວັນຂອງພວກເຮົາ, ຄວາມສຳຄັນຂອງມັນໄດ້ສົ່ງຜົນສະທ້ອນຕໍ່ຊີວິດການເປັນຢູ່ຂອງປະຊາຊົນຫລາຍປະເທດໃນໂລກ. ຄວາມຈິງແລ້ວຜັກທຽມກໍແມ່ນອາຫານເພື່ອສຸຂະພາບ 100% ມັນທັງເປັນເຄື່ອງປຸງແຕ່ງອາຫານທີ່ຂາດບໍ່ໄດ້ໃນອາຫານການກິນປະຈຳວັນຂອງພວກເຮົາ, ຍິ່ງເປັນອາຫານທີ່ໃຊ້ເປັນສະໝຸນໄພ. ນອກຈາກໃຊ້ມາປ້ອງກັນໄຂ້ຫວັດແລ້ວຍັງສາມາດປ້ອງກັນcoronary Heary disease ແລະ atherosclerotic, ຜົນຂອງການຕ້ານອອກໄຊທີ່ມີກຳລັງແຮງຂອງຜັກທຽມຍັງເຮັດໃຫ້ມັນມີບົດບາດໃນການຕ້ານການເຖົ້າໄວຂອງຄົນເຮົາເປັນຢ່າງດີ.

ຢາກໃຫ້ຜັກທຽມເສີມຂະຫຍາຍສັບພະຄຸນຕ້ານການເຖົ້າໄວທີ່ດີກວ່າເພີ່ນ,ວິທີກິນເຮັດໃຫ້ມີສຸຂະພາບກວ່າເພີ່ນນັ້ນກໍຄືກິນດິບ. ນີ້ກໍຍ້ອນວ່າຜັກທຽມກໍຄືກັນກັບຜັກອື່ນໆທັງຫລາຍ,ຖ້າເອົາມາຕົ້ມສຸກແລ້ວຈະໝົດຄຸນຄ່າການບຳລຸງຂອງມັນທີ່ມີຢູ່ເດີມ, ສານຕ້ານອອກໄຊຈະຖືກເສຍຫາຍໄປເປັນຈຳນວນຫຼວງຫຼາຍ. ຍັງມີຫຼາຍຄົນມັກເອົາຜັກທຽມມາຊອຍໃຫ້ມຸ່ນແລ້ວຈຶ່ງເອົາມາກິນ, ແຕ່ກິນແບບນີ້ຈະມີຜົນສະທ້ອນຂອງຜັກທຽມປ່ອຍສ່ວນປະກອບທີ່ມີຜົນອອກມາ. ຖ້າກິນດິບທີ່ດີແມ່ນເອົາຜັກທຽມໃຫ້ແຫລກປະໄວ້10-15ນາທີແລ້ວຈຶ່ງກິນ,ຖ້າເຮັດແນວນີ້ສານເພັດຢູ່ໃນຜັກທຽມແລະ Organize enzyme ປະເພດຕ່າງໆກໍຈະເຮັດໃຫ້ມັນມີບົດບາດຂຶ້ນຢ່າງເຕັມທີ່ຈະໄດ້ຕາມສັບພະຄຸນຮັກສາສຸຂະພາບຕ້ານການເຖົ້າໄວ.

ແຕ່ວ່າຄວນຕ້ອງລະມັດລະວັງນັ້ນຄືະຜັກທຽມມີສານກະຕຸ້ນຢ່າງແຂງແຮງ, ຜູ້ທີ່ມີພະຍາດກະເພາະລຳໄສ້ໂດຍສະເພາະແມ່ນກະເພາະອາຫານອັກເສບ,ກະເພາະແຜເປື່ອ,ລຳໄສ້ເຂນີ້ອແຜເປື່ອGastic ulcer Duodenal ulcer ຕ້ອງຄະລຳກິນ,ຖ້າບໍ່ດັ່ງນັ້ນຈະພາໃຫ້ມີອາການເຈັບທ້ອງ. ຜູ້ທີ່ມີພະຍາດທາງຕາກໍບໍ່ຄວນກິນຜັກທຽມດິບ,ກິນຜັກທຽມດິບຢ່າງຫຼວງຫຼາຍມັນຈະມີບົກບາດກະຕຸ້ນຕໍ່ແກ່ນຕາເກີດພະຍາດBlephariric conjunctivitic ຂຶ້ນງ່າຍ,ຢູ່ໃນຊາວບ້ານ ພື້ນເມືອງຂອງຈີນມີຄຳໂຕ່ງ ໂຕຍຄຳໜຶ່ງວ່າ: "ຜັກທຽມດີຮ້ອຍຢ່າງເສຍແຕ່ຕາຢ່າງດຽວ".

ສະເໜີຜູ້ທີ່ມັກກິນຜັກທຽມດິບແຕ່ລະວັນກິນບໍ່ໃຫ້ເກີນ2ກີບແລ້ວຍັງແບ່ງກິນເປັນຫລາຍຄາບຈະດີກວ່າ.

南磷集團
YunPhos

YUNNAN PHOSPHORUS GROUP CO., LTD.

- YunPhos has achieved great success in phosphorus industry since its establishment in 1989.From the year 1997, YunPhos kept being the biggest exporter of yellow phosphorus and red phosphorus in China, and form 2004, became the second of phosphoric acid.





- Notwithstanding the admirable achievements in phosphorus field, YunPhos still kept seeking further development of the company. Steps taken include setting up brand-new plants to produce annually 100,000MT of caustic soda, 130,000MT of PVC and 60,000MT of STPP, which will steadily provide Yunphos with greater space to grow.

- YunPhos attaches great importance to stable and long-term business with its customers.Meanwhile, it also looks forward to cooperating with customers to produce phosphorus derivatives, mutually utilizing the unique advantage of Yunphos' low-cost resources and energy, as well as its comprehensive phosphorus and Chlor-Alkali industry.

Add: 20th Fl. Huguo Building Kunming Yunnan,China.
Tel: 86-871-3138337
Fax: 86-871-3179663
P.C: 650021
Http: //www.yunphos.com





## 巧克力让旅游更精彩

近年来，开上私家车，背上登山包，结伴出游已成了最新的时尚休闲方式。地图、水壶、墨镜这些都是背包里的常客，可是别忘了还有一样东西能让我们玩得更加尽兴，那就是人见人爱的巧克力。

# ຊອກໂກແລດ

## ຈະເຣັດໃຫ້ການທ່ອງທ່ຽວຍິ່ງຄຶກຄື້ນເພີ່ມຂຶ້ນ

ຊຸມປີໃກ້ໆມານີ້ມີຫລາຍຄົນມັກໃຊ້ຮູບວິທີພັກຜ່ອນຢ່ອນອາລົມແບບທັນສະໄໝທີ່ສຸດນັ້ນກໍຄື: ຂັບລົດສ່ວນຕົວ, ເປັບາໂລໄຕ່ພູເຂົາ, ເກາະກັນເປັນໝູ່ອອກໄປທ່ຽວ. ແຜນທີ່, ເຕົ້ານ້ຳ, ແວ່ນຕາກັນແດດເລີຍກາຍເປັນແຂກປະຈຳໃນບາໂລໄປທ່ອງທ່ຽວຂອງຄົນທັງຫລາຍ, ແຕ່ວ່າຢ່າລືມເດີຍັງມີຂອງກິນຊະນິດໜຶ່ງຈະເຮັດໃຫ້ພວກເຮົາໄປທ່ຽວຍິ່ງມ່ວນຊື່ນຂື້ນກວ່າເກົ່າຢ່າງນັ້ນກໍຄືຊອກໂກແລດໃຜເຫັນໃຜກໍມັກນັ້ນເອງ.

ກ່ອນອອກເດີນທາງໄປທ່ຽວກິນຊອກໂກແລດກ້ອນໜຶ່ງກ່ອນ, ມັນຈະເຮັດໃຫ້ຄົນເຮົາຮູ້ສຶກມີແຮງ ແລະ ເບີກບານມ່ວນຊື່ນຂື້ນທັນທີໂລດ. ຍ້ອນວ່າຊອກໂກແລກສາມາດຊຸກTryptophan "ພາກສ່ວນປະກອບເປັນໂປຣຕີນ" ໃນຮ່າງກາຍຂອງຄົນເຮົາມີການເພີ່ມຂື້ນ, ແລ້ວກາຍມາເປັນ Amino coumpound, ແລະ Amino coumpound ສາມາດເຮັດໃຫ້ຄົນມີຈິດໃຈເບີກບານ.

ນອກນັ້ນຊອກໂກແລດລະລາຍແລ້ວກາຍເປັນກລູຍໂກສາມາດເຮັດໃຫ້ເສີແນຢູ່ໃນກ້າມຊີ້ນແລະຕັບຢູ່ໃນທ່າອີ່ມຕົວທີ່ສຸດ, ເຮັດໃຫ້ຄົນເຮົາຮູ້ສຶກມີກຳລັງກາຍຢ່າງເຕັມທີ່. ຮອດກາງຄືນມາໂກໂກໃນໂກແລດກໍມີບົດບາດເຮັດໃຫ້ຄົນມີຄວາມສະຫງົບ. ມັນສາມາດຊ່ວຍພວກເຮົາປັບປຸງສັບຊ້ອນສະມັດຖະພາບຂອງຮ່າງກາຍ, ເຮັດໃຫ້ເສັ້ນປະສາດທີ່ຍັງຖືກກະຕຸ້ນຢູ່ນັ້ນສະຫງົບລົງແລະໄດ້ຮັບການພັກຜ່ອນຢ່າງເຕັມທີ່ເປັນການກະກຽມເຫື່ອແຮງຢ່າງດີທີ່ສຸດເພື່ອໄວ້ໄປທ່ຽວມື້ໜ້າ.

ນັກຊ່ຽວຊານດ້ານການບຳລຸງສຸຂະພາບໄດ້ຊີ້ອອກວ່າ:ໃນໄລຍະການໄປທ່ຽວຢູ່ນອກບ້ານນັ້ນໃຫ້ກິນຫລາຍຄາບຄາບລະໜ້ອຍ, ກິນອາຫານພັກຜ່ອນໃຫ້ຫລາຍແດ່ຈະເປັນວິທີການເພີ່ມພະລັງງານທີ່ເໝາະສົມຊະນິດໜຶ່ງ. ຍັງລະແວງຫຍັງອີກນໍ, ຮີບເອົາທໍ່ຊອກໂກແລດມ້ຽນເຂົ້າໄວ້ໃນບາໂລທ່ອງທ່ຽວຂອງເຈົ້າສາ.













《占芭》杂志老挝发行、销售代理处：向导书屋　电话：00856-21-213191

ຕົວແທນຈຳໜ່າຍວາລະສານ 《ຈຳປາ》 ໃນເມືອງລາວ:ແສງດາວຂາຍປຶ້ມ　Tel:00856-21-213191

# ກິນໝາກໄມ້ຕ້ອງຮູ້ວິທີກິນ

chī xī guā yǒu jiǎng jiū
吃 西 瓜 有 讲 究

yī qíng jǐng duì huà
一、 情 景 对 话 文/陆 蕊
ສະຖານະພາບຂອງການສົນທະນາ:

nǐ xǐ huan chī shén me shuǐ guǒ
A：你 喜 欢 吃 什 么 水 果？
ເຈົ້າມັກກິນໝາກໄມ້ຊະນິດໃດ?

xiāng jiāo bō luó máng guǒ pú
B：香 蕉、菠 萝、芒 果、葡
táo dàn wǒ zuì xǐ huan xī guā
萄，但 我 最 喜 欢 西 瓜。
ໝາກກ້ວຍ,ໝາກນັດ,ໝາກມ່ວງ, ໝາກອະງຸ່ນ,ແຕ່ຂ້ອຍ
ມັກກວ່າເພິ່ນນັ້ນ ແມ່ນໝາກໂມ

wǒ yě hěn xǐ huan chī xī guā
A：我 也 很 喜 欢 吃 西 瓜。
ຂ້ອຍກໍມັກກິນໝາກໂມທີ່ສຸດ.

tiān qì rè de shí hòu chī xī guā tè bié
B：天 气 热 的 时 候 吃 西 瓜 特 别
yǒu zī wèi
有 滋 味。
ເວລາອາກາດຮ້ອນກິນໝາກໂມແມ່ນມີລົດຊາດເປັນພິ ເສດໃດ!

nǐ zhī dào chī xī guā yǒu shén me
A：你 知 道 吃 西 瓜 有 什 么
jiǎng jiū ma
讲 究 吗？
ເຈົ້າຮູ້ຈັກບໍ່? ກິນໝາກໂມແນວໃດຈຶ່ງໄດ້ຜົນກວ່າມັນມີການ
ຄົ້ນຄວ້າແນວໃດບໍ່?

yǒu shén me jiǎng jiū kuài shuō
B：有 什 么 讲 究？ 快 说
shuō ba
说 吧！
ຈະມີການຄົ້ນຄວ້າແນວໃດ? ຮີບເວົ້າອອກມາເທາະ!

xī guā xìng hán duō chī yì shāng hài
A：西 瓜 性 寒，多 吃 易 伤 害




pí wèi hū xī xì tǒng jí bìng huàn zhě
脾 胃，呼 吸 系 统 疾 病 患 者
yóu qí bù yí duō chī
尤 其 不 宜 多 吃。
ໝາກໂມເປັນທາດເຢັນກິນຫລາຍຈະພາໃຫ້ເຈັບກະເພາະ
ອາຫານ ແລະ ປ້າງວ່າຍ, ໂດຍສະເພາະຢ່າງຍິ່ງຜູ້ທີ່ມີພະ
ຍາດລະບົບຫາຍໃຈ ຍິ່ງບໍ່ຄວນກິນຫຼາຍ.

méi shì wǒ hū xī xì tǒng hěn zhèng cháng
B：没 事，我 呼 吸 系 统 很 正 常。
ບໍ່ມີບັນຫາ, ລະບົບຫາຍໃຈຂອງເຮົາປົກກະຕິທີ່ສຸດ.

wǒ yì bān xǐ huan bǎ xī guā fàng zài
A：我 一 般 喜 欢 把 西 瓜 放 在
bīng xiāng lǐ bīng liáng le zài chī
冰 箱 里 冰 凉 了 再 吃。
ທົ່ວໄປແລ້ວພວກເຮົາມັກເອົາໝາກໂມໄປແຊ່ເຢັນຢູ່ໃນຕູ້
ເຢັນກ່ອນແລ້ວຈຶ່ງເອົາມາກິນ.

duì ya chī qǐ lái yòu tián yòu liáng
B：对 呀，吃 起 来 又 甜 又 凉，

kě bàng le
可 棒 了！

ແມ່ນລະບໍ່, ກິນແລ້ວທັງຫວານທັງເຢັນ, ຄັກທີ່ສຸດ.

zhè yàng chī duì pí wèi de shāng hài
A：这 样 吃 对 脾 胃 的 伤 害

jiù gèng dà
就 更 大。

ກິນແບບນີ້ຄວາມເສຍຫາຍຕໍ່ກະເພາະອາຫານ ແລະ ປ້າງກໍ ຍິ່ງຫລາຍເດີ້.

nà zěn me bàn
B：那 怎 么 办？

ຄັນຊັ້ນຈະເຮັດແນວໃດດີ?

xī guā zuì hǎo xiàn mǎi xiàn chī bù
A：西 瓜 最 好 现 买 现 吃，不

yí fàng bīng xiāng lǐ guò dù lěng cáng
宜 放 冰 箱 里 过 度 冷 藏，

bù yí duō chī
不 宜 多 吃。

ກິນໝາກໂມດີທີ່ສຸດແມ່ນຊື້ມາແລ້ວກິນໂລດ, ບໍ່ຄວນເອົາໄປແຊ່ເຢັນໄວ້ໃນຕູ້ເຢັນຈົນເກີນໄປ ແລະ ບໍ່ຄວນກິນຫລາຍເກີນໄປ.

xiè xiè jīn hòu chī xī guā shí wǒ huì
B：谢 谢，今 后 吃 西 瓜 时 我 会

zhù yì le
注 意 了。

ຂອບໃຈເນີ້, ກິນໝາກໂມຄັ້ງໜ້າເຮົາຈະລະມັດລະວັງແລ້ວ.

zǒu zán men qù mǎi xī guā chī
A：走，咱 们 去 买 西 瓜 吃。

ໄປ, ພວກເຮົາໄປຊື້ໝາກໂມມາກິນເທາະ.

èn
B：嗯。

ໄປ!

èr jiāo nǐ dú gǔ shī
## 二、教你读古诗：

编/陆蕊

2 .ສອນໃຫ້ທ່ານອ່ານກາບກອນບູຮານ

ຈ່ຽງເຊຍ(ຫົມະໃນແມ່ນ້ຳ)ມີເນື້ອຫາດັ່ງນີ້:



yóu yuán bù zhí
### 游 园 不 值

yìng lián jī chǐ yìn cāng tái
应 怜 屐 齿 印 苍 苔，

xiǎo kòu chái fēi jiǔ bù kāi
小 扣 柴 扉 久 不 开。

chūn sè mǎn yuán guān bù zhù
春 色 满 园 关 不 住，

yī zhī hóng xìng chū qiáng lái
一 枝 红 杏 出 墙 来。

dà yì
大 意：

dà gài shì pà mù jī cǎi shāng qīng tái qīng qiāo chái mén jiǔ
大 概 是 怕 木 屐 踩 伤 青 苔，轻 敲 柴 门 久

jiǔ méi rén kāi mén mǎn yuán de chūn yì zǎo yǐ guān bì bù zhù yī
久 没 人 开 门。满 园 的 春 意 早 已 关 闭 不 住，一

zhī yàn lì de hóng xìng tàn chū qiáng lái
枝 艳 丽 的 红 杏 探 出 墙 来。

ເນື້ອໃນຂອງກອນຄື: ອາດຈະແມ່ນຢ້ານເກີບໄມ້ຢຽບຖືກພາໃຫ້ ໄຄຂຽວຖືກທຳລາຍ, ຄ່ອຍເຄາະບານປະຕູໄມ້ດົນໆກໍບໍ່ມີໃຜມາໄຂ ປະຕູ. ຈົນຕະນາການລະດູບານໃໝ່ທີ່ເຕັມໄປທົ່ວທັງສວນກໍຖືກອັດໄວ້ມາແຕ່ດົນນານແລ້ວ ຊື່ອກະພິບຕາ,ຕົ້ນໄມ້ນາໆຊະນິດໃນສວນກໍໄດ້ປົ່ງຍອດຖອດໃບ.

绘图 / 刘金昆

# ມີໄມ້ໄຜ່ຢູ່ໃນໃຈ 胸有成竹

ທ່ານເວີຍທົ່ງມັກແຕ້ມຮູບສະໄໝລາຊະວົງສົ້ງເໜືອ.ຮູບໄມ້ໄຜ່ທີ່ທ່ານແຕ້ມນັ້ນຂຶ້ນຊື່ລືຊາໄປທົ່ວທຸກບ່ອນທັງໃກ້ແລະໄກ, ແຕ່ລະວັນມີຄົນບໍ່ໜ້ອຍຂຶ້ນເຮືອນມາຂໍຮູບ, ເຄັດລັບຂອງການແຕ້ມຕົ້ນໄມ້ໄຜ່ຂອງເວີຍທົ່ງນັ້ນແມ່ນຢູ່ໃສ?ທີ່ແທ້ແລ້ວຢູ່ໜ້າບ້ານຫຼັງເຮືອນຂອກຮົ້ວແຈສວນຂອງເວີຍທົ່ງເອງລ້ວນແຕ່ໄດ້ປູກຕົ້ນໄຜ່ປະເພດຕ່າງໆ,ບໍ່ວ່າຈະແມ່ນລະດູບານໃໝ່,ລະດູຮ້ອນ, ລະດູໃບໄມ້ຫລົ່ນຫລືລະດູໜາວ, ຈະແມ່ນມື້ຟ້າແຈ້ງ,ມື້ຟ້າບົດ, ມື້ຟ້າລົມຝົນຕົກກໍຕາມລາວກໍມັກໄປສັງເກດສະພາບການຈະເລີນເຕີບໂຕ ແລະ ປ່ຽນແປງຕົ້ນໄມ້ໄຜ່ໃນປ່າໄມ້ໄຜ່, ຕຶກຕອງຄວາມສັ້ນຄວາມຍາວປ້ອງນ້ອຍປ້ອງໃຫຍ່ແລະຮູບຊົງຂອງໃບໄມ້ໄຜ່, ສັງເກດເບິ່ງສີຂອງໄມ້ໄຜ່ໃນແຕ່ລະລະດູການ, ເມື່ອຫາກມີຄວາມຮູ້ສຶກໃໝ່ແນວໃດຂຶ້ນມາແລ້ວ,ກໍກັບຄືນສູ່ຫ້ອງຂຽນໜັງສືປູເຈ້ຍຝົນນ້ຳເມິກ, ເອົາຄວາມປະທັບຢູ່ໃນໃຈຂອງຕົນນັ້ນແຕ້ມລົງໃສ່ເຈ້ຍ.ເມື່ອເປັນເຊັ່ນນີ້ມາຫລາຍຝ້າຫຼາຍປີພາບພົດ ຂອງໄມ້ໄຜ່ຢູ່ໃນແຕ່ລະລະດູການ,ແຕ່ລະສະພາບດິນຟ້າອາກາດແຕ່ລະເວລາເປັນຮູບໂສມແນວໃດກໍລ້ວນແຕ່ປະທັບຢູ່ໃນໃຈຂອງເຂົາຢ່າງເລິກເຊິ່ງ, ພຽງແຕ່ຕັ້ງສະມາທິຈັບພູກັນຂຶ້ນມາຢືນຢູ່ຕໍ່ໜ້າເຈ້ຍແລ້ວຮູບໂສມໄມ້ໄຜ່ແຕ່ລະຮູບແຕ່ລະແບບທີ່ເຂົາສັງເກດເຫັນໄດ້ໃນທຸກມື້ນັ້ນກໍໂປໂລຂຶ້ນມາໃນຕໍ່ໜ້າຂອງເຂົາທັນທີໂລດ. ດັ່ງນັ້ນເທື່ອໃດແຕ້ມໄມ້ໄຜ່ເຂົາລ້ວນແຕ່ສະແດງອອກທຳມະຊາດເສີຍໆບໍ່ຮ້ອນບໍ່ຮົນ,ໄມ້ໄຜ່ທີ່ແຕ້ມອອກມານັ້ນ, ລ້ວນແຕ່ຄື ກັບຕົວຈິງປານມີເທວະດາຊ່ອຍ.ເມື່ອຄົນທັງຫລາຍສັນລະເສີນການແຕ້ມຮູບຂອງທ່ານແລ້ວ, ທ່ານມັກເວົ້າດ້ວຍຄວາມຖ່ອມຕົວຢູ່ສະເໝີວ່າ: "ເຮົາພຽງ ແຕ່ ເອົາພາບພົດຕົ້ນໄມ້ໄຜ່ທີ່ສຸກງອມຢູ່ໃນໃຈນັ້ນຜ່ານການຕຶກຕອງແລ້ວແຕ້ມອອກມາເທົ່ານັ້ນ". ມີຊາວໜຸ່ມຜູ້ໜຶ່ງຢາກມາຮຽນແຕ້ມຮູບໄມ້ໄຜ່ກັບທ່ານໄດ້ຮູ້ວ່ານັກກະວີທ່ານຊາວປູຈີ່ມີການສຶກສາຢ່າງເລິກເຊິ່ງຕໍ່ຮູບພາບທີ່ທ່ານເວີຍທົ່ງແຕ້ມອອກມາ,ກໍເລີຍໄປຂໍຄຳແນະນຳຈາກທ່ານຊາວປູຈີ່, ທ່ານຊາວປູຈີ່ໄດຂຽນກາບກອນບົດ ໜຶ່ງໃຫ້ເຂົາ, ໃນນັ້ນມີ 2 ຄຳໄດ້ຂຽນວ່າ: "ຈະແຕ້ມໄມ້ໄຜ່ໄດ້ຫລືບໍ່, ໃນໃຈຕ້ອງເກີດມີໄມ້ໄຜ່ກ່ອນ".

ສຸພາສິດທີ່ວ່າ: ເກີດມີໄມ້ໄຜ່ຢູ່ໃນໃຈເດີມແມ່ນໝາຍເຖິງຢາກແຕ້ມໄມ້ໄຜ່ຢູ່ໃນໃຈຕ້ອງມີພາບພົດຂອງໄມ້ໄຜ່ເປັນຮູບຢູ່ໃນໃຈເສຍກ່ອນ.ເປັນການອຸປະມາກ່ອນຈະເຮັດວຽກຢາກໃຫ້ໄດ້ຮັບຜົນດີຕ້ອງມີການກະກຽມຢ່າງເຕັມທີ່,ມີຄວາມອາດສາມາດຢ່າງເຕັມທີ່ທີ່ຈະເຮັດໃຫ້ວຽກງານໄດ້ສຳເລັດຜົນ.ຕໍ່ມາໄດ້ເປັນການອຸປະມາວ່າກ່ອນຈະເຮັດວຽກຕ້ອງຕັດສິນໃຈຢ່າງແນ່ວແນ່ເສຍກ່ອນ. ຍັງເປັນການອຸປະມາວ່າ: ພົບບັນຫາຢ່າຫ່ວງຕົກຂະມະໃຫ້ຕັ້ງສະຕິຢ່າງໝັ້ນທ່ຽງ.





## Kunming Country Golf Club

Kunming Country Golf Club, Which is 18 holes, 6,918 yards, par 72 championship course, designed by the famous designer Mr. Les Watts from Australia, covers an area of over 1300 mu in Luoyang, Chenggong County which is surrounded by the beautiful landscape and fresh air. Among the course there are 4 about 500 yards of long distance fairways, 10 middle distance fairways within 300-400 yards and 4 short distance fairways under 200 yards.

The turf putter on the green and the fairway make the course evergreen and achieve the international standard.

The course is located near the Anshi highway, about 30 minutes' drive, 14 km from downtown, which is really a good place for leisure, intercourse and recreation. Going ahead 70 kilometers away is the Stone Forest, Jiuxiang scenic region and AHL cave.

Welcoming you with sunny sky, eternal spring weather and challenging course - Kunming Country Golf Club provides you with a truly pleasant experience and a new feeling of golfing.

Kunming Country Golf Club



Address:14 section form Anshi higuoy,kunming
Marketing and sales headquarter: ( 86-871 ) 7426698
Anteroom: ( 86-871 ) 7426666
Fax: ( 86-871 ) 7426648


Welcome to Laos... Land of Timeless Beauty
Lao Airlines
ການບິນລາວ
Lao Airlines
The Beauty of Lao Hospitality